# ເຈືອງ ສົມບູນຂັນ



## ຢູ່ໃນຄວາມຊົງຈຳຕະຫຼອດໄປ

2014

# ເຈືອງ ສົມບູນຂັນ
# ຢູ່ໃນຄວາມຊົງຈຳຕະຫຼອດໄປ

ຈັດພິມໂດຍ ນາງ ດາລາວັນ ພອນແກ້ວ
ດ້ວຍຄວາມຕື້ນຕັນໃຈທີ່ໄດ້ພົບວ່າ
ນອກຈາກຕົນເອງ ຜູ່ເປັນພັນລະຍາ
ຍັງມີຄົນອື່ນອີກຈຳນວນຫຼວງຫຼາຍ ທີ່ຮັກແລະເທີດທູນເພິ່ນເຊັ່ນດຽວກັນ.

ພິມເພື່ອແຈກຢາຍ ໃນພິທີເອົາອັດຖິເຂົ້າທາດ
ປີ 2014

ລະນຶກແລະຄິດເຖິງ
ທ່ານ ເຈິງ ສົມບູນຂັນ

○ ວານນີ້ ຈອດໆເວົ້າ ຈາເມື່ອນຊວນບຸກ
ທຸກສິ່ງ ອຸປະສັກມາ ບໍ່ກາໃຫ້ຢືນທ້າ
ຕື່ນນອນມາ ຍັງເຫັນໜ້າ ພົບຕາມາຍັງເຫັນທ່ານ
ພຽງຊົ່ວໂມງ ຜ່ານຍ້າຍ ພັດຈຸລາດໂທດຮ້າຍ
ໝາຍຕັດຊີວິດສັ້ນ
ບໍ່ພົບໜ້ານັບກັນ ອີກແລ້ວ!

○ ທ່ານ ເຈິງ ພັກພາກແລ້ວ ອຳລາຈາກຈອນນີ້
ເຫຼືອແຕ່ ຄຸນຄວາມດີ ຍັງແຕ່ສີວິລະກຳ
ປະເສີດຄົງຄຸນຄ່າ
ປະຫວັດຄຳຊີວຽນແຕ້ມ ເຕືອນຄຸນະນອມທອນທ່ານ
ບ່ານເປັ່ງ ເຍືອງຝັກໄວ້ ໃນດວງໃຈຊາດນັ້ນ
ນິລັນດ້ອງເຍີຍນານ ທ່ານແລ້ວ!

○ ຜົນງານງາມທ່ານສ້າງ ປະດັບຊາດລັດໃສ
ຍິ່ງໃຫຍ່ ໃນພະໂນນຶກ ຊາດປະຊາບໍ່ລືມໄດ້
"ຊວງ" ຍຸດໄງດິນແຫ້ງ ເຊື່ອງຊູລືສະຫົດຍ່າງ ກ້າຫານນ.
ຈົນນີ້ ຫ່າງຫ່ອງຟ້າ ແຕ່ປະຊາຮັກທູ້ນ
ຍັງທອນຕຸ້ມ ທ່ານ ເຈິງ

ບ້ານດົງປ່າແຫຼບ, ວັນທີ 19 ພຶດສະພາ 2014 ແທ້ນາ !

ດຣ. ທອງຄຳ ອອນມະນີສອນ
ສິລະປິນແຫ່ງຊາດ

# ບົດກ່າວໄວ້ອາໄລ
# ແດ່ ສະຫາຍ ເຈືອງ ສິມບູນຂັນ
## (ວັນທີ 19 ພຶດສະພາ 2014)

- ຂໍນ້ອມນະມັດສະການ ພະເຖລະນຸເຖລະ
- ຮຽນ: ບັນດາທ່ານຜູ້ນຳພັກ ແລະລັດ ທີ່ນັບຖື !
- ບັນດາສະຫາຍ ເພື່ອນມິດທັງພາຍໃນ ແລະ ຕ່າງປະເທດ ແລະຍາດຕິພີ່ນ້ອງທີ່ຮັກແພງທັງຫຼາຍ

ມື້ນີ້ ທ່າມກາງຄວາມໂສກເສົ້າເສຍດາຍ ແລະອາໄລອາວອນຢ່າງສຸດຊຶ້ງຕໍ່ການຈາກໄປ ຢ່າງບໍ່ມີວັນກັບຄືນມາອີກແລ້ວຂອງ ສະຫາຍ ເຈືອງ ສິມບູນຂັນ ພວກເຮົາພ້ອມກັນມາເຕົ້າໂຮມຢູ່ທີ່ນີ້ເພື່ອອຳລາ ສະຫາຍ ເຈືອງ ສິມບູນຂັນ ເລຂາທິການສູນກາງພັກ ຫົວໜ້າຄະນະໂຄສະນາ ອົບຮົມສູນກາງພັກ ເປັນຄັ້ງສຸດທ້າຍ.

ສະຫາຍ ເຈືອງ ສິມບູນຂັນ ເກີດເມື່ອວັນທີ 5 ມີນາ ປີ 1955, ໃນຄອບຄົວຊາວນາທີ່ບ້ານສະໝັນ, ເມືອງໂພນທອງ, ແຂວງຈຳປາສັກ, ເປັນບຸດຂອງທ່ານສີແກ້ວ ແລະນາງຄ່ອງ, ມີອ້າຍເອື້ອຍນ້ອງຄີງນຳກັນ 5 ຄົນ. ສະຫາຍໄດ້ສ້າງຄອບຄົວກັບນາງ ດາລາວັນ ພອນແກ້ວ ແລະມີລູກນຳກັນ 3 ຄົນ, ຍິງ 1 ຄົນ, ຊາຍ 2 ຄົນ. ປັດຈຸບັນຢູ່ບ້ານຄຳຮຸ່ງ ເມືອງໄຊທານີ, ນະຄອນຫຼວງວຽງຈັນ. ສະຫາຍເລີ່ມເຄື່ອນໄຫວເຮັດການປະຕິວັດ ໃນວັນທີ 2 ທັນວາ 1975, ເຂົ້າພັກສຳຮອງວັນທີ 10 ພຶດສະພາ 1985 ເຂົ້າພັກສົມ

ບູນວັນທີ 9 ພຶດສະພາ 1986.

ຊີວິດ ແລະການເຄື່ອນໄຫວປະຕິວັດຂອງ ສະຫາຍ ເຈືອງ ສິມບູນຂັນ ມີດັ່ງນີ້:

ສະຫາຍ ເຈືອງ ສິມບູນຂັນ ເລີ່ມເຄື່ອນໄຫວປະຕິວັດນັບແຕ່ອາຍຸຍັງໄວໜຸ່ມເປັນນັກຮຽນ ເປັນພະນັກງານຊາວໜຸ່ມ ທີ່ເຮັດວຽກປຸກລຸກຂົນຂວາຍປະຊາຊົນຍຶດອຳນາດຢູ່ເຂດເມືອງໂພນທອງ.

- ປີ 1977-1978 ສະຫາຍ ເຈືອງ ສິມບູນຂັນ ໄດ້ໄປຮຽນກຽມພາສາຢູ່ເມືອງກີແອຟ ສະຫະພາບໂຊຫວຽດ.
- ປີ 1982 ເປັນເລຂາຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະເປັນປະທານສະມາຄົມ ນັກສຶກສາລາວປະຈຳເມືອງມິນສ໌, ລັດເບໂລຣຸດຊີ ສະຫະພາບໂຊຫວຽດ.
- ປີ 1983 ເປັນຜູ້ແປພາສາຢູ່ໂຮງຮຽນພັກຂອງສູນກາງພັກກອມມູນິດແຫ່ງສະຫະພາບໂຊຫວຽດ ສຳລັບພະນັກງານການນຳຂອງລາວ, ໃນເວລານັ້ນສະຫາຍ ເຈືອງ ໄດ້ຖືກມອບໝາຍຈາກຄະນະພັກໃຫ້ໄປເປັນເລຂາຊາວໜຸ່ມປະຊາຊົນປະຕິວັດລາວຂອງເມືອງມິດສະກູທັງເປັນກຳມະການຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ທົ່ວສະຫະພາບໂຊຫວຽດ.
- ວັນທີ 7-11-1987 ພາຍຫຼັງສິ້ນສຸດການປະຕິບັດໜ້າທີ່ຢູ່ສະຫະພາບໂຊຫວຽດແລ້ວ ໄດ້ຮັບແຕ່ງຕັ້ງໃຫ້ເປັນອາຈານສອນຢູ່ໂຮງຮຽນຊັ້ນສູງພັກ ແລະລັດທີ່ທ່າງ່ອນ.
- ປີ 1987-1992 ເຮັດວຽກຢູ່ກົມເລຂານຸການຂອງການນຳ, ສັງກັດຫ້ອງວ່າການສູນກາງພັກ, ເປັນພະນັກງານຄົ້ນຄວ້າລວມດ້ານທິດສະດີ ແລະບັນຫາຕ່າງໆ.

ເປັນຮອງຫົວໜ້າກົມ

ເປັນຫົວໜ້າກົມ, ທັງເປັນເລຂາສະເພາະຂອງທ່ານ ໄກສອນ ພົມວິຫານ

- ແຕ່ປີ 1992-1997 ຖືກແຕ່ງຕັ້ງເປັນຮອງຫົວໜ້າຫ້ອງວ່າການສູນກາງພັກເປັນຮອງເລຂາຄະນະພັກ.

ເປັນຮອງລັດຖະມົນຕີ, ເປັນຮອງຫົວໜ້າຫ້ອງວ່າການສຳນັກປະທານປະເທດໄລຍະໜຶ່ງ.

- ປີ 1998 ຖືກແຕ່ງຕັ້ງເປັນຮອງລັດຖະມົນຕີ, ເປັນຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

- ແຕ່ເດືອນ 4-1998 ເຖິງເດືອນ 8-1999 ຖືກແຕ່ງຕັ້ງເປັນຜູ້ວ່າການທະນາຄານແຫ່ງ ສປປ ລາວ, ເປັນຮອງເລຂາຄະນະພັກກະຊວງການເງິນ-ທະນາຄານ

- ເດືອນ 10-1999 ຖືກແຕ່ງຕັ້ງເປັນຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ເປັນກຳມະການໃນຄະນະພັກ.

- ວັນທີ 26-9-2005 ໄດ້ຖືກແຕ່ງຕັ້ງເປັນລັດຖະມົນຕີຊ່ວຍວ່າການປະຈຳສຳນັກງານນາຍົກລັດຖະມົນຕີ ທັງເປັນຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

- ກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກປີ 2006 ໄດ້ຖືກເລືອກຕັ້ງເປັນກຳມະການສູນກາງພັກ, ເປັນລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ເປັນຫົວໜ້າຄະນະເລຂາທິການລັດຖະບານ.

- ກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກປີ 2011 ໄດ້ຖືກເລືອກຕັ້ງເປັນເລຂາທິການສູນກາງພັກ, ເປັນເລຂາຄະນະພັກ, ເປັນຫົວໜ້າຄະນະອົບຮົມສູນກາງພັກ, ປະທານສະພາວິທະຍາສາດແຫ່ງຊາດ, ເປັນຮອງຫົວໜ້າ, ທັງເປັນຜູ້ປະຈຳການຄະນະຊີ້ນຳວຽກງານ 3 ສ້າງຂັ້ນສູນກາງຈົນເຖິງມື້ສຸດທ້າຍ.

ບັນດາສະຫາຍແລະເພື່ອນມິດທີ່ຮັກແພງ!

ສະຫາຍເຈືອງ ສົມບູນຂັນ ໄດ້ເຕີບໃຫຍ່ຂຶ້ນຈາກຂະບວນການນັກຮຽນນັກສຶກສາ, ເປັນຜູ້ມີນ້ຳ ໃຈຫ້າວຫັນປະຕິບັດ, ມີຄວາມກ້າຫານ, ເປັນຜູ້ມີຄຸນສົມບັດດີ, ມີມານະຈິດບຸກບືນຕໍ່ວຽກງານ ສະຫາຍແມ່ນໜຶ່ງໃນພະນັກງານເຂດໃຕ້ຂອງລາວທີ່ຖືກຄັດເລືອກໄປຮຽນການເມືອງ ຢູ່ເມືອງ ກີແອຟ ສະຫະພາບໂຊຫວຽດ. ຍ້ອນເປັນຜູ້ຮຽນດີຮຽນເກັ່ງ ສະຫາຍຈຶ່ງຖືກມອບໝາຍໃຫ້ເປັນຄູສອນການເມືອງ, ເປັນພະນັກງານໂຄສະນາອົບຮົມ ແລະເປັນພະນັກງານການນຳ. ສະຫາຍ ພ້ອມດ້ວຍໝູ່ຄະນະໄດ້ປະກອບສ່ວນໃນການປັບປຸງບູລະນະວຽກງານໃນຂົງເຂດທິດສະດີການ ເມືອງ-ການປົກຄອງ, ວຽກງານແນວຄິດ ເຊິ່ງບັນດາວຽກດັ່ງກ່າວເປັນວຽກທີ່ຫຍຸ້ງຍາກ, ແຕ່ສະຫາຍກໍ່ໄດ້ມີຄວາມບຸກບືນອົດທົນຜ່ານຜ່າ, ສະຫາຍໄດ້ຮ່ວມກັບໝູ່ຄະນະນຳພາຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ສະຫາຍກໍເປັນຜູ້ໜຶ່ງທີ່ມີຄວາມຫ້າວຫັນໃນການຄົ້ນຄວ້າ ແລະປະກອບຄຳຄິດຄຳເຫັນເຂົ້າໃນການປັບປຸງບູລະນະບັນດາແນວທາງນະໂຍບາຍຂອງພັກ ແລະແຜນພັດທະນາເສດຖະກິດ-ສັງຄົມຂອງລັດ.

ສະຫາຍເຈືອງ ສົມບູນຂັນ ໄດ້ເຕີບໃຫຍ່ຈາກພະນັກງານວິຊາການຈົນກ້າວຂຶ້ນເປັນພະນັກງານ ການນຳຂອງພັກ ແລະລັດ. ສະຫາຍໄດ້ອຸທິດເຫື່ອແຮງສະຕິປັນຍາຂອງຕົນປະກອບສ່ວນເຂົ້າ ໃນພາລະກິດປະຕິວັດເພື່ອຄວາມຢູ່ດີກິນດີຂອງປະຊາຊົນລາວບັນດາເຜົ່າ, ສະຫາຍມີຄວາມ ສາມາດໃນການນຳພາ, ເປັນຜູ້ທີ່ມັກສຶກສາຄົ້ນຄວ້າຄວາມຮູ້ດ້ານຕ່າງໆ, ມີຄວາມກະຕືລືລົ້ນ ໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ, ເປັນຜູ້ໜຶ່ງທີ່ເອົາໃຈໃສ່ຝຶກຝົນຫຼໍ່ຫຼອມຕົນເອງທາງດ້ານຄຸນສົມບັດສິນທຳປະຕິວັດ, ມີຄວາມທ່ຽງທຳ, ມີນ້ຳໃຈເສຍສະຫຼະເພື່ອຜົນປະໂຫຍດສ່ວນລວມຂອງປະເທດຊາດ. ສະຫາຍ ເຈືອງ ສົມບູນຂັນ ຍາມໃດກໍ່ມີຄວາມ

ເປັນຫ່ວງເປັນໃຍ, ໃກ້ຊິດຕິດແທດກັບພະນັກງານ ແລະປະຊາຊົນ. ພ້ອມກັນນັ້ນ ສະຫາຍ ເຈືອງ ສິມບູນຂັນ ກໍເປັນຜູ້ທີ່ກຳແໜ້ນແນວທາງຕ່າງປະເທດຂອງພັກ, ສະຫາຍ ມີເພື່ອນມິດສາກົນຢ່າງກວ້າງຂວາງ.

ສະຫາຍ ເຈືອງ ສິມບູນຂັນ ແມ່ນພະນັກງານທີ່ມີແບບແຜນວິທີເຮັດວຽກ ແລະມີແບບແຜນ ການດຳລົງຊີວິດງ່າຍດາຍ ແລະປະຢັດ, ມີຄຸນສົມບັດ, ມີຄວາມສາມັກຄີເປັນເອກະພາບ ພາຍໃນພັກ, ພາຍໃນກົມກອງ, ເປັນຜູ້ຍຶດໝັ້ນໃນຫຼັກການນຳພາຂອງພັກ, ຍຶດໝັ້ນໃນອຸດົມການການປະຕິວັດອັນສູງສົ່ງ. ສະຫາຍໄດ້ເປັນແບບຢ່າງອັນດີໃຫ້ແກ່ພະນັກງານ-ສະມາຊິກພັກ, ສະຫາຍຍັງໄດ້ເອົາໃຈໃສ່ສຶກສາອົບຮົມຄອບຄົວ, ລູກຫຼານໃຫ້ກາຍເປັນຜູ້ທີ່ດີ, ມີຄວາມຮູ້ຄວາມສາມາດ.

ລວມຄວາມວ່າຕະຫຼອດໃນໄລຍະຫຼາຍສິບປີແຫ່ງການເຄື່ອນໄຫວປະຕິວັດ ເຖິງຈະຢູ່ໃນຖານະ ແລະໜ້າທີ່ໃດ, ຈະແມ່ນວຽກງານໜັກໜ່ວງ, ຫຍຸ້ງຍາກສັບສົນປານໃດກໍຕາມ ສະຫາຍ ເຈືອງ ສິມບູນຂັນ ກໍໄດ້ມີຄວາມອົດທົນຜ່ານຜ່າມີຄວາມຮັບຜິດຊອບສູງ, ມີນ້ຳໃຈປະຕິວັດໜຽວແໜ້ນ, ມີຄວາມຈົງຮັກພັກດີຕໍ່ພັກຕໍ່ປະເທດຊາດ ເຊິ່ງໄດ້ສະແດງແຈ້ງເຖິງທາດແທ້ຂອງພະນັກງານປະຕິວັດທີ່ແທ້ຈິງ

ດ້ວຍຜົນງານ ແລະຄຸນງາມຄວາມດີຂອງສະຫາຍ ໃນການປະກອບສ່ວນເຂົ້າໃນພາລະກິດ ປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ, ສະຫາຍ ເຈືອງ ສິມບູນຂັນ ຈຶ່ງໄດ້ຮັບການຍ້ອງຍໍຈາກພັກ ແລະລັດເຮົາ ກໍຄືຈາກປະເທດເພື່ອນມິດ ດ້ວຍຮູບການຍ້ອງຍໍປະເພດຕ່າງໆດັ່ງນີ້:

- ຫຼຽນໄຊອິດສະຫຼະ ຊັ້ນ I 1 ໜ່ວຍ
- ຫຼຽນໄຊແຮງງານ ຊັ້ນ I 3 ໜ່ວຍ

- ຫຼຽນໄຊແຮງງານ ຊັ້ນ II 4 ໜ່ວຍ
- ຫຼຽນໄຊແຮງງານ ຊັ້ນ III 2 ໜ່ວຍ
- ຫຼຽນໄຊເອກະລາດຂອງ ສສ.ຫວຽດນາມ 1 ໜ່ວຍ
- ໃບຍ້ອງຍໍຂອງສະພາຄຸ້ມຄອງນັກສຶກສາຕ່າງປະເທດຂອງລັດ ເບໂລຣຸດຊີ ສະຫະພາບໂຊຫວຽດ 1 ໃບ
- ໃບຍ້ອງຍໍຂອງສະພາວິທະຍາສາດວິທະຍາໄລ ຂອງລັດເບໂລຣຸດຊີ ສະຫະພາບໂຊຫວຽດ 1 ໃບ
- ນອກຈາກນັ້ນຍັງໄດ້ຮັບໃບຍ້ອງຍໍຈາກຂັ້ນຕ່າງໆຢູ່ພາຍໃນປະເທດອີກຈຳນວນໜຶ່ງ.

ບັນດາສະຫາຍ ແລະເພື່ອນມິດທີ່ຮັກແພງ!

ສະຫາຍ ເຈືອງ ສິມບູນຂັນ ໄດ້ເສຍຊີວິດດ້ວຍອຸບັດຕິເຫດ ເຮືອບິນຕົກໃນເວລາໄປປະຕິບັດ ໜ້າທີ່ ທີ່ແຂວງຊຽງຂວາງ ໃນເວລາ 6 ໂມງ 23 ນາທີ ຂອງວັນທີ 17-5-2014 ລວມອາຍຸ ໄດ້ 59 ປີ.

ການລ່ວງລັບຂອງ ສະຫາຍ ເຈືອງ ສິມບູນຂັນ ໄດ້ເຮັດໃຫ້ພັກແລະລັດເຮົາສູນເສຍພະນັກ ງານການນຳຂັ້ນສູງ ແລະປັນຍາຊົນຜູ່ດີເດັ່ນຜູ່ໜຶ່ງ, ທັງເປັນການສູນເສຍຜົວທີ່ແສນຮັກຂອງເມຍ, ພໍ່ທີ່ແສນແພງຂອງລູກ, ນຳເອົາຄວາມໂສກເສົ້າເສຍດາຍ ແລະຄວາມອາໄລອາວອນອັນສຸດຊຶ້ງ ມາຍັງສະມາຊິກພັກ-ພະນັກງານກຳຄືຄອບຄົວສິມບູນຂັນ, ຄອບຄົວພອນແກ້ວ ແລະຍາດຕິພີ່ນ້ອງຜູ້ຢູ່ໃກ້ແລະຢູ່ໄກ

ໃນເວລາໂສກເສົ້າ ແລະອາໄລອາວອນຢ່າງສຸດຊຶ້ງນີ້, ພວກເຮົາຂໍໃຫ້ຄຳໝັ້ນສັນຍາຕໍ່ສະຫາຍວ່າ: ຈະເພີ່ມທະວີ ແລະຮັດແໜ້ນຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະຄວາມເປັນນ້ຳໜຶ່ງໃຈດຽວກັນຂອງທົ່ວປວງຊົນ, ເດັດດ່ຽວປົກປັກຮັກສາ ແລະພັດທະນາປະເທດຊາດ ໃຫ້ໄປ

ສູ່ຄວາມຈະເລີນຮຸ່ງເຮືອງ, ເຮັດໃຫ້ອຸດົມການຂອງພັກ ແລະຄວາມມຸ່ງຫວັງຂອງປະຊາຊົນລາວທັງຊາດ ກໍຄືຂອງສະຫາຍເອງໃຫ້ປະກົດຜົນເປັນຈິງ.

ສະຫາຍ ເຈືອງ ສົມບູນຂັນ ທີ່ອາໄລຮັກເອີຍ, ສະຫາຍໄດ້ຈາກພວກເຮົາໄປຢ່າງບໍ່ມີວັນ ຈະກັບຄືນມາອີກແລ້ວ, ແຕ່ພັກ-ລັດ, ຍາດພີ່ນ້ອງ, ເພື່ອນສະຫາຍຂໍຈົດຈຳຄຸນງາມຄວາມດີ ແລະຜົນງານຂອງສະຫາຍຢ່າງບໍ່ມີວັນຫຼົງລືມ

ຂໍໃຫ້ດວງວິນຍານຂອງສະຫາຍໄປສູ່ສຸຄະຕິເຖີດ
ພວກເຮົາຂໍອຳລາສະຫາຍເປັນຄັ້ງສຸດທ້າຍ





# ຖິ່ນຖານບ້ານເກີດ

ໂດຍ ເລື່ອນ ສົມບູນຂັນ

"ບ້ານສະໝັນ" ຕາແສງເມືອງສັກ ເມືອງໂພນທອງ ແຂວງຈຳປາສັກ ແມ່ນຖິ່ນຖານບ້ານເກີດຂອງ, ທ່ານເຈືອງ (ຫຼືຂຸນເຈືອງ) ສົມບູນຂັນ



ແຜນທີ່ ທີ່ຕັ້ງບ້ານສະໝັນ



ຮູບນ້ຳຂອງ ແກ້ງບ້ານສະໝັນ

ບ້ານສະໝັນຢູ່ໄກຈາກເມືອງປາກເຊ 12 ກິໂລແມັດ, ໄປທາງເໜືອ,ຢູ່ຝັ່ງຂວາຂອງແມ່ນ້ຳຂອງ ເຊິ່ງກັບ ບ.ດອນໂຄ ແລະ ບ.ສະຜາຍ

ຕາມການກ່າວຂານ ບອກເລົ່າຕໍ່ໆກັນຂອງຜູ້ເຖົ້າຜູ້ແກ່ ... ຂອງບ້ານນີ້ ແຜ່ນດິນນີ້ ແມ່ນແຜ່ນດິນຂອງ "ພະໂອກາດ" ຕາມຊື່ຂອງພະຄູ່ບ້ານຄູ່ເມືອງ ທີ່ປະດິດສະຖານຢູ່ບ້ານສະໜັນ ແຕ່ສະໄໝໃດ ແລະມາຈາກໃສ ກໍບໍ່ຮູ້? ພະໂອກາດ ເປັນພະພຸດທະຮູບບູຮານ ຫຼໍ່ດ້ວຍທອງສໍາລິດສົນນິຖານ ຕາມລັກສະນະສິລະປະ ແມ່ນສິລະປະລ້ານຊ້າງ, ຢູ່ຖານນັ່ງຂອງພະພຸດທະຮູບນັ້ນ ມີໜັງສືຈາລຶກໄວ້ເປັນຕົວທໍາເກົ່າແກ່ (ບໍ່ທັນມີຜູ້ໃດອ່ານອອກ ຫຼືແປໄດ້)



ພະໂອກາດ, ພະທອງສໍາລິດ ຄູ່ບ້ານສະໜັນ

ຜູ້ເຖົ້າຜູ້ແກ່ເຊື່ອວ່າ, ຍ້ອນການປະທານພອນ ຫຼືອິດທິລິດປະຕິຫານຂອງພະໂອກາດ ຜູ້ໃດທີ່ເກີດ ຫຼືຝັງສາຍແຫ່ ແຜ່ສາຍບື ໃນແຜ່ນດິນພະໂອກາດນີ້ (ບໍ່ວ່າຈະຍັງຢູ່ບ້ານ ຫຼືໄປຢູ່ແຫ່ງຫົນໃດກໍຕາມ) ຈະຕ້ອງມີຖານະເສດຖະກິດ ໄລ່ເລ່ຍໃກ້ຄຽງກັນ, ບໍ່ອຶດຢາກຍາກເຂັນ ຫຼືໂດດດ່ຽວ, ຄົນແຜ່ນດິນພະໂອກາດ ຈະຕ້ອງປຸ້ມລຸມ ສາມັກຄີກັນແໜ້ນ, ຮັກແພງກັນ

ແບບຮ່ວມ ສາຍເລືອດ. ໂດຍລວມ ຜູ່ທີ່ເກີດໃນແຜ່ນດິນພະໂອກາດ ຈະມີການສຶກສາ ຄວາມຮູ້ຄວາມສະຫຼາດ ໃນລະດັບທີ່ໃກ້ຄຽງບໍ່ຫຼຸດໂຕນກັນຫຼາຍ ໂອ້ລົມນຳກັນເຂົ້າໃຈໄດ້ງ່າຍ, ຫາກຜູ່ໃດມີຖານະ ເດັ່ນຂຶ້ນ ກໍຕ້ອງອາໄສ ມີການຄ້ຳຊູຊະຕາ ຈາກລູກພະໂອກາດຄົນອື່ນໆ ຈຶ່ງຈະຍືນຍົງຍາວໄກ. ສະໄໝຊຸມປີ 1950, ບ້ານສະໝັນ ມີປະມານ 100 ກວ່າຫຼັງຄາເຮືອນແລ້ວ, ບ້ານສະໝັນ ເປັນບ້ານທີ່ມີປະຫວັດສາດຍາວນານ ຮ່ວມສະໄໝກັບພະເຈົ້າສີລິບຸນຍະສານ ແຫ່ງອານາຈັກລ້ານຊ້າງວຽງຈັນ, ຕິດພັນກັບປະຫວັດຂອງພະວໍ-ພະຕາ ຊຶ່ງເຊື່ອວ່າ ບ້ານສະໝັນ-ສັກເມືອງ ແມ່ນທີ່ໝັ້ນສຸດທ້າຍຂອງເພິ່ນ ແລະເສຍຊີວິດຢູ່ທີ່ນັ້ນ ພາຍຫຼັງທີ່ຖອຍຈາກປ້ອມທີ່ໝັ້ນ ແຫ່ງສະໜໍລະພູມເມືອງເກົ່າເກີງ (ເມືອງເກົ່າ-ສະໜໍລຽບ). ແຕ່ສາມາດສັນນິຖານໄດ້ວ່າ ບ້ານສະໝັນ ຄົງເປັນທີ່ຕັ້ງເກົ່າຂອງຊົນເຜົ່າພື້ນເມືອງ ທີ່ມີມາກ່ອນແລ້ວ ຍ້ອນວ່າ ຢູ່ບ້ານສະໝັນໃນເມື່ອກ່ອນ ເວລາຝົນຕົກ ນ້ຳຈາກຊາຍຄາເຮືອນຈະເຊາະດິນ ແລ້ວຈະພົບເຫັນກອກສູບຢາເຮັດດ້ວຍດິນເຜົາ ທີ່ເປັນລວດລາຍຂອງຊົນເຜົ່າພື້ນເມືອງ (ຂ່າ) ໄປທົ່ວບ່ອນທີ່ມີນ້ຳຝົນເຊາະ. ຜູ່ເຖົ້າ ຜູ່ແກ່ ບອກວ່າ ຄຳວ່າ ສະໝັນ ໝາຍເຖິງສັດປ່າ, ກວາງຟານ ທີ່ມີຢ່າງອຸດົມສົມບູນ ໃນເຂດບ້ານນີ້.

ບ້ານສະໝັນ, ມີແນວຄິດປຸ້ມລຸມ ລວມໝູ່ສັງຄົມນິຍົມ ມາແຕ່ດົນນານແລ້ວ (ສະໄໝໃດກໍບໍ່ຮູ້, ອາດແມ່ນຕັ້ງແຕ່ຍາມສ້າງບ້ານນີ້ຂຶ້ນໃໝ່ໆ) ຊຶ່ງເປັນລັກສະນະພິເສດຂອງບ້ານສະໝັນ ເຊັ່ນ: ບ້ານສະໝັນ ມີນາຕີນບ້ານ 2 ຜືນ, ມີໜອງປາທຳມະຊາດຂະໜາດໃຫຍ່ ທີ່ເປັນກຳມະສິດລວມຂອງບ້ານ, (ຜູ່ໃດທີ່ຖືກເລືອກເປັນພໍ່ບ້ານ ແລະຜູ່ເປັນກຳມະການບ້ານ ຈະໄດ້ຮັບມອບໃຫ້ເຮັດ, ເມື່ອຍັງຢູ່ໃນໜ້າທີ່). ເປັນນາທີ່ງາມ, ໃຫ້ຜົນຜະລິດສູງ, ເຮັດໜ້ອຍໄດ້ຫຼາຍ! ແຕ່ຜູ່ທີ່ຖືກມອບໝາຍໃຫ້ເຮັດ ຈະຕ້ອງມີພັນທະ ຫັກແບ່ງເຂົ້າເປືອກໃຫ້ເລົ້າເຂົ້າລວມຂອງບ້ານ ເພື່ອຮັບປະກັນໃຫ້ມີເຂົ້າກິນ

ຍາມອຶດຢາກ ຫຼືມີໄພທຳມະຊາດ ຫຼືເພື່ອຊ່ວຍເຫຼືອຜູ່ຂາດເຂີນຈຳເປັນແບບໃຫ້ຢືມໄປກ່ອນ ແລ້ວຈຶ່ງເອົາມາໃຊ້ແທນຄືນ ໃນລະດູການຕໍ່ໄປ (ທະນາຄານເຂົ້າ ແຕ່ບໍ່ມີດອກເບັ້ຽ) ບ້ານສະໜັນມີຈຸດພິເສດອີກອັນນຶ່ງແມ່ນການປຸກເລົ້າເຂົ້າຂອງໄທບ້ານ ແມ່ນປຸກໂຮມໄວ້ບ່ອນດຽວ ໃນບໍລິເວນຕີນບ້ານ (ເປັນຈຸ້ມດຽວ), ເມື່ອແນມມາຈາກທົ່ງນານອກບ້ານ ຈະເຫັນທັດສະນີຍະພາບ ແບບແປກຕາ ບໍ່ຄືບ້ານອື່ນ, ເຮືອນຢູ່ທີ່ປຸກໃນບ້ານ (ອ້ອມວັດ) ລະຫວ່າງເຮືອນຕໍ່ເຮືອນ ມັກຈະບໍ່ມີຮົ້ວກັ້ນ. (ຮົ້ວ ແມ່ນເພື່ອປ້ອງກັນສັດບໍ່ໃຫ້ມາທຳລາຍເຄື່ອງປູກຂອງຝັງ, ບໍ່ແມ່ນເພື່ອກັ້ນຄົນ). ອັນນີ້ຄືພື້ນຖານແນວຄວາມຄິດ ເຊື່ອໝັ້ນຕໍ່ກັນຄືຄົນເຮືອນດຽວຂອງໄທບ້ານສະໜັນ.

ໄທບ້ານສະໜັນ, ຈົນເຖິງປັດຈຸບັນ, ຫາກຍັງດຳລົງຢູ່ບ້ານ ທຸກຄອບຄົວຖືວ່າມີອາຊີບ ຫຼັກເປັນຊາວນາ ແຕ່ກໍມີວິທີຫາກິນເສີມເປັນນັກຫາປາ, ນັກຫັດຖະກຳ ຕຳຫູກ ຈັກສານ ເຮັດການບໍລິການ, ຄ້າຍ່ອຍ, ການຂົນສົ່ງທາງນ້ຳ ທາງບົກ ເປັນຊ່າງກໍ່ສ້າງ...

## ເຊື້ອສາຍລາຍລ່ອງ

ຕະກູນ "ສິມບູນຂັນ" ແມ່ນຕະກູນຫຼັກແຫຼ່ງຂອງບ້ານສະໜັນ. ໄທບ້ານ ຍອມຮັບນັບຖືວ່າ ເປັນເຊື້ອສາຍກົກເຄົ້າຂອງບ້ານ, ເປັນເຫຼົ່າກໍຂອງຜູ່ຮອບຮູ້ ມີສະຕິປັນຍາວ່ອງໄວ ໃນການແກ້ໄຂບັນຫາ ຢ່າງຄ່ອງແຄ້ວທ່ຽງທຳ ເປັນຕະກຸນທີ່ຊົງຄຸນວຸດເປັນໃຈກາງຂອງການແກ້ໄຂ ໄກ່ເກ່ຍບັນດາບັນຫາຂໍ້ຂັດຂ້ອງ ຫຼືຂັດແຍ່ງທີ່ເກີດຂຶ້ນລະຫວ່າງໄທບ້ານ. ເຊື້ອສາຍນີ້ ມີຕົ້ນຕໍ ຈາກບ້ານໃຕ້ (ຂອງວັດ) ແລ້ວແຜ່ອອກໄປສ້າງຄອບຄົວຢູ່ບ້ານເໜືອ (ຂອງວັດ) ແລະສູ່ບ້ານມ່ວງສະໜັນ (ບ້ານນ້ອຍ), ເປັນຕະກູນທີ່ດຸໝັ່ນຂະຫຍັນພຽນ ເຮັດນາຫຼາຍຜັ່ນ, ມີງົວຫຼາຍຝູງ ແລະເປັນຊ່າງສີມືຫຼາຍ

ດ້ານ (ຊ່າງຕີຄຳ, ຊ່າງແຕ້ມ, ຊ່າງຄວັດລວດລາຍ, ຊ່າງໄມ້, ຊ່າງກໍ່, ຊ່າງຫຍິບສິ້ງເສື້ອ, ຊ່າງຕຳຫູກສາວໃໝ) ຮວມທັງເປັນເຊື້ອສາຍເຮັດການຄ້າ-ການບໍລິການປະຈຳບ້ານ ແລະເຂດໃກ້ຄຽງ (ມີກຸ່ມຂາຍເຄື່ອງເທດ/ຢາຫອມ, ເຄື່ອງມື, ເຄື່ອງໃຊ້ໃນການເຮັດນາ, ໂຮງສີເຂົ້າ(ນ້ອຍ) ມີເຮືອໃຫຍ່ເຮືອກາໂນ...) ນອກນັ້ນຍັງມີຕະກູນຫາປາ ທີ່ມີຊື່ສຽງ ເປັນຕົ້ນແມ່ນຕຶກປາໃຫຍ່ ເຊັ່ນ ປາເລີມ ປາເອິນ... (ເອີ້ນວ່າ ນາຍພານປາ).

ສະໄໝປູ່ທວດ, ຜູ້ທີ່ເປັນທີ່ກ່າວຂານກວ່າໝູ່ແມ່ນ ປູ່ທວດ "ຫຼວງຊະນະ" ຊຶ່ງເປັນນາມ ມະຍົດມອບໃຫ້ ຈາກລາຊະສຳນັກ ນະຄອນຈຳປາສັກ ສະໄໝເຈົ້າຍຳຂະໜ່ອມຣາຊະດາໄນ. ໃນຖານະທີ່ເປັນນັກມວຍເອກຂອງຣາຊະສຳນັກ. ເວົ້າລວມແຕ່ລະເສັ້ນຄົນຂອງຕະກູນສິມບູນຂັນຈະມີຜູ້ໄດ້ຮ່ຳຮຽນ ສະແຫວງຫາຄວາມຮູ້ ແລະເດີນທາງໄປແດນໄກບໍ່ໄດ້ຂາດ (ໄປຄ້າຂາຍ, ໄປຮ່ຳຮຽນ, ປະກອບອາຊີບ...)

ທ່ານເຈືອງ (ຂຸນເຈືອງ) ແມ່ນຜູ້ນຶ່ງທີ່ສືບເຊື້ອສາຍໂດຍກົງ ຂອງຕະກູນສິມບູນຂັນ ໃນເສັ້ນທີ 4 ຂອງຕະກູນນັບແຕ່ປູ່ທວດ ຫຼວງຊະນະລົງມາ.

## ຊີວິດຕອນຍັງເປັນເດັກນ້ອຍ

ຢູ່ທີ່ບ້ານສະໜັນ/ບ້ານເໜືອ, ທ້າຍປີມະເມຍ ກ່ອນໜ້າປີໃໝ່ລາວແມ່ຄ່ອງ (ຄຳຄ່ອງ) ສິມບູນຂັນ ໄດ້ຄອດລູກອອກມາເປັນຜູ້ຖ້ວນສີ່ ໂດຍວິທີທຳມະຊາດຂອງໝໍຕຳແຍພື້ນບ້ານ. ທາລົກນ້ອຍ ທີ່ຄອດອອກມາ ມີສຸຂະພາບແຂງແຮງດີ ແລະໄດ້ຝັງສາຍແຫ່ແຜ່ສາຍບື ຢູ່ນະແຜ່ນດິນພະໂອກາດແຫ່ງນີ້. ພໍ່ສີແກ້ວ ສິມບູນຂັນ ພ້ອມດ້ວຍຍາດຕິພີ່ນ້ອງ ໄດ້ຕັ້ງຊື່ເດັກນ້ອຍທີ່ເກີດໃໝ່ນີ້ວ່າ ທ້າວຂຸນເຈືອງ. ຕໍ່ມາເມື່ອເຂົ້າໂຮງຮຽນ ແລະ

ເຮັດໃນວັນເກີດ ໄດ້ຕັດຊື່ໃຫ້ສັ້ນລົງເປັນ ພະຍາງດຽວວ່າ ທ້າວເຈືອງ (ດັ່ງດຽວກັນກັບຍັນດາອ້າຍເອື້ອຍນ້ອງຜູ່ອື່ນໆ ທີ່ມີຊື່ຫຼາຍພະຍາງ ກໍມັກຖືກຕັດໃຫ້ສັ້ນລົງ ແລະເຫຼືອພຽງພະຍາງດຽວ).



ປະຕູຂົງ ສົມບູນຂັນ



ເຮືອນຢູ່ຂອງພໍ່ແມ່ທ່ານເຈືອງ ເປັນທັງຮ້ານຂາຍເຄື່ອງ

ເດັກນ້ອຍເຈືອງ ໄດ້ເຕີບໃຫຍ່ຕາມວິຖີຊີວິດ ຊາວນາບ້ານນອກ ໃນຊົນນະບົດທີ່ລົດໃຫຍ່ບໍ່ສາມາດເຂົ້າເຖິງ (ບໍ່ເຄີຍໄດ້ຍິນສຽງແກລົດ). ພາຫະນະຂົນສົ່ງທີ່ທັນສະໄໝ ສະດວກສະບາຍທີ່ສຸດ ໃນເວລານັ້ນແມ່ນ ເຮືອກາໂນດ (ກາໂນ/Canot) ທີ່ໃຊ້ບັນທຸກເຂົ້າເປືອກລົງໄປຂາຍຢູ່ເມືອງເກົ່າ ຫຼືໂດຍສານໄທບ້ານໄປຕະຫຼາດປາກເຊ. ເດັກນ້ອຍຂຸນເຈືອງ ຖືວ່າເປັນຜູ້ທີ່ມີຮ່າງກາຍຄືພໍ່ຫຼາຍກວ່າໝູ່ ໃນຈຳນວນອ້າຍເອື້ອຍນ້ອງຄີງນຳກັນ 5 ຄົນ.

ທ້າວຂຸນເຈືອງ ກໍໄດ້ໃຊ້ຊີວິດລູກຊາວນາທຳມະດາ, ແຕ່ຍ້ອນການສືບທອດ ຈາກເຊື້ອສາຍທີ່ມີຫົວການຄ້າແດ່, ຄອບຄົວນີ້ນອກຈາກເຮັດນາແລ້ວ ຍັງມີໂຮງສີເຂົ້ານ້ອຍ, ມີການຕັດຫຍິບເສື້ອຜ້າ ຂາຍຝ້າຍ ນຳສີຍ້ອມຝ້າຍ ເຄື່ອງມືເຮັດນາ ແລະຂາຍເຄື່ອງເທດ/ຢາຫອມອື່ນໆ ສະໜອງຄວາມຕ້ອງການຂອງໄທບ້ານ. ຖືວ່າເປັນຮ້ານຄ້າໃຈກາງຂອງບ້ານຕ່າງໆ ແຖບນັ້ນ (ບ້ານສັກເມືອງ, ບ້ານມ່ວງສະໜັນ, ບ້ານສະໜັນໂຍນ, ບ້ານໝໍ້, ບ້ານຈິກ....)

ທ້າວເຈືອງນ້ອຍ ໄດ້ຮັບການສຶກສາຂັ້ນປະຖົມໃນເບື້ອງຕົ້ນ ຢູ່ບ້ານສະໜັນນັ້ນເອງ (ເວລານັ້ນມີຮອດແຕ່ ປ.3) ແລ້ວກໍໄປຮຽນຕໍ່ ປ.4. ຢູ່ບ້ານສັກເມືອງ ແລະທີ່ເມືອງປາກເຊ ກ່ອນທີ່ຈະຍ້າຍໄປຮຽນຕໍ່ຢູ່ວຽງຈັນ (ຢູ່ນຳອ້າຍກົກ) ຢູ່ໂຮງຮຽນປະຖົມມະວົງ ເພື່ອກຽມເສັງເຂົ້າ ວິທະຍາໄລ ວຽງຈັນ (Lycee de Vientiane) ໃນປີ 1969 (ເບິ່ງຮູບຂ້າງລຸ່ມ) ທ້າວເຈືອງຖືວ່າ ເປັນຜູ້ນຶ່ງທີ່ຮຽນດີ ແລະໃນບັນດາປະເພດເດັ່ນ ຢັ້ງຢືນໄດ້ຈາກການສອບແຂ່ງຂັນ ເຂົ້າວິທະຍາໄລ ວຽງຈັນໄດ້ ເຊິ່ງຖືວ່າເປັນການແຂ່ງຂັນສູງ ແລະກັ່ນກອງທີ່ສຸດ (ໂດຍທົ່ວໄປ ຜູ້ທີ່ສອບເຂົ້າໄດ້ ຈະມາຈາກໂຮງຮຽນຄຸນແມ່, ຄຸນພໍ່, ຈາກໂຮງຮຽນຝຣັ່ງ...). ຫຼັງຈາກນັ້ນກໍກັບລົງ ໄປຮຽນຕໍ່ທີ່ວິທະຍາໄລປາກເຊ ຈົນຈົບຂັ້ນອຸດົມແລ້ວໄປຮຽນຕໍ່ທີ່ ສະຫະພາບໂຊວຽດ ໃນປີ 1977

ທ້າວເຈືອງ ສິມບູນຂັນ ຕັ້ງແຕ່ຍັງໜຸ່ມນ້ອຍ, ນອກຈາກຈະເປັນປະເພດນັກຮຽນດີແລ້ວ ຍັງມີບຸກຄະລິກ ແລະທັດສະນະແນວຄິດ ຂອງການເປັນຜູ້ນຳຂະບວນການທີ່ກ້າວໜ້າ, ມັກມີແນວຄິດຕໍ່ສູ້ເພື່ອຄວາມເປັນທຳ ເພື່ອສັງຄົມ ເພື່ອການປະຕິວັດ ບໍ່ວ່າຈະຢູ່ໃນລະດັບໃດ ຈະຢູ່ຕ່າງປະເທດ ກໍຄືຢູ່ໃນປະເທດ.




ຮູບຖ່າຍກັບໝູ່ເພື່ອນຮ່ວມຊັ້ນ ມ.1 ທີ່ວິທະຍາໄລວຽງຈັນ ປີ 1969-70
ຄົນທີ 2 ນັບຈາກຊ້າຍຢູ່ແຖວໜ້າ

# ຄວາມຜູກພັນ ທີ່ບໍ່ມີວັນລືມ

ໂດຍ: ສົມສະນິດ ສຸວັນນະລາດ

ຂ້າພະເຈົ້າແມ່ນຜູ້ໜຶ່ງທີ່ໄດ້ໃກ້ຊິດກັບທ່ານ ເຈືອງ ສົມບູນຂັນ ດົນສົມຄວນ. ດັ່ງນັ້ນ ເພື່ອເປັນການອຸທິດເຖິງດວງວິນຍານຂອງເພິ່ນ ທີ່ລ່ວງລັບໄປແລ້ວນັ້ນ, ຂ້າພະເຈົ້າໄດ້ພະຍາມຄຶດຄືນ ເພື່ອຂຽນຄວາມຮູ້ສຶກຈາກໃຈຂອງຕົນທີ່ມີຕໍ່ທ່ານ ເຈືອງ ສົມບູນຂັນ ເພາະມັນເປັນ "ຄວາມຮູ້ສຶກ, ເປັນຄວາມຜູກພັນ ທີ່ບໍ່ມີວັນລືມ".

ຂ້າພະເຈົ້າ ໄດ້ຮູ້ຈັກກັບທ່ານເຈືອງ ສົມບູນຂັນ ທີ່ເມືອງມິນສເກີ (Minsk), ລັດເບລາຣຸດຊີ (ອະດີດ ສ.ໂຊວຽດ) ໃນສະໄໝທີ່ເປັນນັກສຶກສາດ້ວຍກັນ ເມື່ອປີ 1978

ຄວາມຜູກພັນ, ຄວາມຮັກແພງ ໄດ້ມີຂຶ້ນໃນເວລາທີ່ໄດ້ເຄື່ອນໄຫວເຮັດວຽກ ໃນອົງການຈັດຕັ້ງ ຂອງຊາວໜຸ່ມປະຊາຊົນປະຕິວັດລາວ ແລະສະມາຄົມນັກສຶກສາລາວ ປະຈຳເມືອງ Minsk

ສະຫາຍເຈືອງ ສົມບູນຂັນ ໄດ້ຖືກເລືອກ ເປັນເລຂາຊາວໜຸ່ມປະຊາຊົນປະຕິວັດລາວ ແລະເປັນປະທານສະມາຄົມນັກສຶກສາປະຈຳເມືອງ Minsk. ສ່ວນຂ້າພະເຈົ້າເອງ ໄດ້ເປັນຮອງເລຂາຊາວໜຸ່ມ ປະຊາຊົນປະຕິວັດລາວ ແລະຮອງປະທານສະມາຄົມນັກສຶກສາຂອງເມືອງ Minsk.

ຍ້ອນວ່າ ວຽກງານການຈັດຕັ້ງ ເປັນວຽກຍາກ, ເປັນວຽກທີ່ຢູ່ໃນລະບຽບ ເປັນວຽກທີ່ຕ້ອງໄດ້ເສຍສະຫຼະ ແລະເປັນວຽກທີ່ຕ້ອງໄດ້ຍົກສູງ

ຄວາມຮັບຜິດຊອບ ເປັນວຽກທີ່ຕ້ອງໄດ້ເຮັດດ້ວຍຄວາມເປັນແບບຢ່າງ. ສະນັ້ນໄປພ້ອມໆກັບການສຶກສາຮ່ຳຮຽນ, ພວກເຮົາໄດ້ເອົາໃຈໃສ່ເຄື່ອນໄຫວເຮັດວຽກ ນອກຫຼັກສູດ (ວຽກຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ວຽກຂອງສະມາຄົມນັກສຶກສາ) ຢ່າງຕັ້ງໜ້າ, ຖືເອົາຄວາມຫຍຸ້ງຍາກ ເປັນການປຸກລະດົມກຳລັງໃຈ (ທັງຮຽນທັງເຄື່ອນໄຫວນອກຫຼັກສູດ) ທ່ານເຈືອງ ສົມບູນຂັນ ຈຶ່ງໄດ້ລະດົມ ແລະໃຫ້ກຳລັງໃຈສະເໝີ ເພື່ອໃຫ້ຂ້າພະເຈົ້າມີຈິດໃຈບຸກບືນໃສ່ການຮ່ຳຮຽນ ແລະປະກອບສ່ວນໃນວຽກງານເຄື່ອນໄຫວນອກຫຼັກສູດຊ່ອຍເພິ່ນ. ທ່ານເຈືອງ ໄດ້ສັ່ງສອນວ່າ "ພວກເຮົາຕ້ອງເປັນແບບຢ່າງໃຫ້ແກ່ນັກສຶກສາທັງໝົດ" ແບບຢ່າງໃນທີ່ນີ້ ແມ່ນແບບຢ່າງຮອບດ້ານ ໝາຍຄວາມວ່າ ຢາກເປັນແບບຢ່າງໄດ້ ກ່ອນອື່ນໝົດແມ່ນຕ້ອງຕັ້ງໃຈຮ່ຳຮຽນ ແລະຕ້ອງຮຽນໃຫ້ເກັ່ງ ການເຄື່ອນໄຫວ ເຮັດວຽກນອກຫຼັກສູດ (ວຽກການຈັດຕັ້ງ) ກໍຕ້ອງໃຫ້ໄດ້ດີ ເພາະ "ການນຳພາທີ່ດີ ຄືຄວາມເປັນແບບຢ່າງ" ສະນັ້ນ ພວກເຮົາບໍ່ຈຳເປັນເວົ້າຫຼາຍ ເວົ້າໜ້ອຍແຕ່ເຮັດໃຫ້ໄດ້, ໂດຍສະເພາະແມ່ນການຄົ້ນຄວ້າຮ່ຳຮຽນ ຕ້ອງໃຫ້ເກັ່ງເພື່ອເປັນແບບຢ່າງໃຫ້ຜູ້ອື່ນ (ນັກສຶກສາ) ເຫັນ ແລະເຂົາຈະເຮັດຕາມ. ທ່ານເຈືອງ ໄດ້ອະທິບາຍຕື່ມວ່າ ຢາກຮຽນເກັ່ງ ຕ້ອງຈັດແບ່ງເວລາໃຫ້ເໝາະສົມ ແລະຮຽນຕາມການຈັດແບ່ງນັ້ນ. ໝາຍຄວາມວ່າ ຮອດເວລາຮຽນກໍຕ້ອງຮຽນ ຫາກເວລາໃດມີຄວາມຈຳເປັນໄປວຽກອື່ນ ພາຍຫຼັງກັບມາແລ້ວກໍຕ້ອງຊົດເຊີຍ ເວລາຮຽນຄືນໃຫ້ເຕັມອັດຕາຄືເກົ່າ. (ບໍ່ປະໃຫ້ເວລາເສຍໄປລ້າ).

ສະຫາຍເຈືອງ ໄດ້ມອບວຽກການຈັດຕັ້ງໃຫ້ຂ້າພະເຈົ້າເຮັດຫຼາຍຢ່າງ ແລະທັງໃຫ້ການແນະນຳລະອຽດ ເພິ່ນບໍ່ມັກເວົ້າຫຼາຍ ແຕ່ມັກລະອຽດ ແລະມີຄວາມຮອບຄອບ

ໄປພ້ອມໆກັບພຶດຕິກຳຕົວຈິງ ເພິ່ນໄດ້ມອບ ເອກະສານຕ່າງໆໃຫ້

ອ່ານຄົ້ນຄວ້າດ້ວຍຕົວເອງ ເປັນຕົ້ນ ແມ່ນເອກະສານກ່ຽວກັບວຽກງານຊາວໜຸ່ມປະຊາຊົນປະຕິວັດລາວ, ທິດສະດີຕ່າງໆ ນັບທັງແນວທາງນະໂຍບາຍຂອງພັກແລະລັດ ຈຳນວນໜຶ່ງ....

ພວກເຮົາໄດ້ໄປມາຫາສູ່ກັນດ້ວຍຄວາມຮັກແພງ ຈິງອົກຈິງໃຈຊ່ວຍເຫຼືອເຊິ່ງກັນແລະກັນ ທັງເຄົາລົບ ແລະນັບຖືກັນ ເຮັດໃຫ້ຄວາມສຳພັນນັ້ນ ນັບມື້ນັບກ້າວເຂົ້າສູ່ລວງເລິກ ແລະກາຍເປັນຄວາມ ຜູກພັນທີ່ບໍ່ມີວັນລືມສຳລັບຂ້າພະເຈົ້າ.

ກ່ອນຮຽນຈົບໃນປີ 1982, ທ່ານເຈືອງ ສົມບູນຂັນ ໄດ້ໂທລະສັບບອກຂ້າພະເຈົ້າໄປພົບ ທີ່ຫໍພັກຂອງເພິ່ນ. ຫຼັງຈາກນັ້ນ ກໍຊວນກັນໄປເລາະຮ້ານຄ້າ ຊອກຊື້ປຶ້ມອ່ານ... ເຄື່ອງໃຊ້ທີ່ຈຳເປັນຕ່າງໆ ຂາກັບຫໍພັກກໍໄດ້ແວ່ຊື້ອາຫານໄປແຕ່ງສູ່ກິນ ແລະມື້ນັ້ນ ເພິ່ນກໍໃຫ້ນອນຢາມເພິ່ນເລີຍ.

ກ່ອນນອນ ເພິ່ນໄດ້ລົມກັບຂ້າພະເຈົ້າຫຼາຍບັນຫາ ກ່ຽວກັບສະພາບການບ້ານເມືອງ ສະພາບຂອງນັກສຶກສາ ສະພາບການຢູ່ພາຍໃນປະເທດ ແລະອື່ນໆ ສຸດທ້າຍເພິ່ນເວົ້າຈ້ອນມາຮອດຕົວຂ້າພະເຈົ້າ ແລະເພິ່ນໄດ້ເວົ້າວ່າ: ນິດ! ເຮົາຮັກໂຕເດີ, ຮັກຄືນ້ອງຄີງໆຂອງເຮົາ. ໂຕຮຽນຈົບແລ້ວ, ໂຕຕ້ອງພະຍາຍາມ ເຮັດວຽກດ້ວຍຄວາມຕັ້ງໃຈ ເພື່ອປະກອບສ່ວນເຂົ້າໃນການພັດທະນາສ້າງສາ ປະເທດຊາດອັນແສນຮັກຂອງພວກເຮົາ, ອັນສຳຄັນ ແມ່ນເຮັດວຽກອັນໃດກໍຕ້ອງໃຫ້ເກີດປະ ໂຫຍດສູງສຸດແກ່ປະເທດຊາດເທົ່າທີ່ເຮັດໄດ້.

ໄດ້ຍິນຄຳເວົ້າປະໂຫຍກນີ້ ຂ້າພະເຈົ້າມີຄວາມດີໃຈຫຼາຍ ມີກຳລັງໃຈ ແລະຕື້ນຕັນໃຈຫາອັນປຽບບໍ່ໄດ້. ຄຳເວົ້ານີ້ ແມ່ນມີຄວາມໝາຍສຳຄັນແລະເປັນຄຳເວົ້າທີ່ກ້ອງດັງແລະສະຖິດຢູ່ໃນຫົວໃຈ ຂອງຂ້າພະເຈົ້າຕະຫຼອດເວລາ. ຂ້າພະເຈົ້າໄດ້ໃຫ້ສັນຍາກັບທ່ານເຈືອງວ່າ ຈະຕັ້ງໃຈເຮັດວຽກງານດ້ວຍຄວາມຮັບຜິດຊອບ ແລະຈະເຮັດໃຫ້ດີທີ່ສຸດ ໃຫ້ສົມກັບຄວາມ

ໄວ້ເນື້ອເຊື່ອໃຈຂອງເພິ່ນ ທີ່ມີຕໍ່ຂ້າພະເຈົ້າ.

ຂ້າພະເຈົ້າໄດ້ກັບຄືນສູ່ບ້ານເກີດເມືອງນອນ ດ້ວຍຄວາມອາໄລອາວອນ ແລະຄິດເຖິງ, ແຕ່ໃນໃຈ ກໍຄິດສະເໝີວ່າ ອ້າຍເຈືອງບໍ່ຕ້ອງຫ່ວງ, ນ້ອງຈະພະຍາມເຮັດຄືກັບຄຳສັ່ງສອນຂອງອ້າຍຕະຫຼອດໄປ. ເມື່ອກັບຮອດບ້ານເກີດເມືອງນອນ, ຂ້າພະເຈົ້າ ກໍໄດ້ຖືກສັບຊ້ອນ ເຂົ້າເຮັດວຽກຕາມວິຊາ ສະເພາະຂອງຕົນ ສະເພາະທ່ານເຈືອງ ກໍໄດ້ຖືກຂັ້ນເທິງ ບົ່ງຕົວໄປເປັນອາຈານແປພາສາລັດເຊຍ ໃຫ້ຜູ້ນຳຂອງພວກເຮົາຢູ່ໂຮງຮຽນທິດສະດີຂອງພັກ ກອມມູນິດແຫ່ງສະຫະພາບໂຊຫວຽດ ທີ່ໂມສະກູ (Moscow) ແຕ່ເຖິງຈະຢູ່ຫ່າງໄກກັນ ພວກເຮົາກໍໄດ້ມີການພົວພັນກັນເໝືອນເດີມ (ທາງຈົດໝາຍ ຫຼືໂທລະສັບ)

ໃນປີ 1991, ທ່ານ ເຈືອງ ສົມບູນຂັນ ພ້ອມດ້ວຍພັນລະຍາຂອງເພິ່ນ (ດາລາວັນ ພອນແກ້ວ) ໄດ້ໄປຢາມຂ້າພະເຈົ້າແລະຊວນຂ້າພະເຈົ້າໄປຊ່ວຍວຽກຢູ່ກົມເລຂາຂອງການນຳ ຫ້ອງວ່າການສູນກາງພັກ (ຫສພ) ຫຼັງຈາກນັ້ນປະມານ 2 ອາທິດ ກໍໄດ້ມີຄຳສັ່ງຍົກຍ້າຍໄປຢູ່ຫ້ອງການສູນກາງພັກ

ຂ້າພະເຈົ້າໄດ້ຖືກສັບຊ້ອນ ເຂົ້າເຮັດວຽກຢູ່ກົມເລຂານຸການຂອງການນຳ ຫ້ອງວ່າການສູນກາງພັກ (ເດືອນ 9/1991), ຊຶ່ງໃນຕອນນັ້ນທ່ານເຈືອງ ເປັນຮອງຫົວໜ້າຫ້ອງວ່າການສູນກາງພັກ ທັງເປັນເລຂາປະຈຳ ຂອງປະທານ ໄກສອນ ພົມວິຫານ. ໃນໄລຍະເຮັດວຽກຢູ່ນີ້ (ຫສພ) ທ່ານ ເຈືອງ ສົມບູນຂັນ ໄດ້ຮ້ອງເຂົ້າພົບ ແລະເວົ້າວ່າ: ນິດ ໃຫ້ໂຕຕັ້ງໃຈເຮັດວຽກເດີ 6 ເດືອນໃຫ້ໄດ້ສຳເຣົາ, ໝາຍຄວາມວ່າ ທຸກວຽກງານຕ້ອງເຮັດໃຫ້ໄດ້ຄືກັບເພິ່ນ. ຂ້າພະເຈົ້າຟ້າວຕອບເພິ່ນ "ບໍ່ໄດ້ດອກ, ນ້ອງຍັງບໍ່ມີຄວາມສາມາດ ແລະຄືຈະເຮັດບໍ່ໄດ້". ເພິ່ນເວົ້າຢ້ຳຄືນວ່າ "ຕ້ອງພະຍາຍາມຄິດໃຫ້ຫຼາຍ ຄິດໃຫ້ກວ້າງ ຄິດໃຫ້ເລິກ ແລະຕ້ອງຮອບຄອບ".

ຈາກນັ້ນ ບາງຄັ້ງເພິ່ນກໍສະໜອງເອກະສານຫຼາຍຢ່າງໃຫ້ອ່ານ,

ໃຫ້ຄົ້ນຄວ້າ ແລະທັງມອບວຽກໃຫ້ຮັບຜິດຊອບຫຼາຍຂຶ້ນ. ບາງຄັ້ງ ເພິ່ນກໍເອົາລົງເຄື່ອນໄຫວ ວຽກງານຢູ່ທ້ອງຖິ່ນ ເພື່ອຮຽນນຳຕົວຈິງ

ຕະຫຼອດໄລຍະ 13 ປີ (1991-2004) ທີ່ໄດ້ຮັບຮ່ວມວຽກຮ່ວມງານກັບເພິ່ນຢ່າງໃກ້ຊິດ, ສັງເກດເຫັນວ່າເພິ່ນໄດ້ທຸ່ມເທ ແລະອຸທິດຕົນເອງໃຫ້ກັບປະເທດຊາດຫຼາຍທີ່ສຸດ ແລະໝົດຫົວຈິດຫົວໃຈ ຈະເຮັດຫຍັງຢູ່ໃສກໍມີແຕ່ຄິດ ຄິດຫາແຕ່ວິທີແກ້ໄຂວຽກງານ ເພື່ອປະກອບສ່ວນເຂົ້າໃນການພັດທະນາສ້າງສາປະເທດຊາດ, ຢາກໃຫ້ປະເທດຊາດຂອງຕົນໄດ້ຮັບການພັດທະນາທີ່ສົມຄູ່ ແລະຫຼຸດພົ້ນອອກຈາກກຸ່ມປະເທດດ້ອຍພັດທະນາ.

ບາງຄັ້ງໄດ້ພົບກັນໃນໂມງລັດຖະການ ຫຼືຢູ່ເຮືອນຂອງເພິ່ນ ເພິ່ນມັກຖາມກັບຂ້າພະເຈົ້າເລື້ອຍໆວ່າ: “ອິງນິດ ໂຕຄິດຫຍັງ?”, “ຄິດນຳປະເທດຊາດນີ້ແລ້ວ” ຂ້າພະເຈົ້າຕອບເພິ່ນ.ໄດ້ຍິນຂ້າພະເຈົ້າ ຕອບແນວນັ້ນເພິ່ນຄືວ່າໂລ່ງໃຈຫຼາຍ. ເພິ່ນໄດ້ເວົ້າຕໍ່ວ່າ ເຮົາເອງກໍຄິດຫຼາຍຄືກັນ, ຄິດນຳປະເທດຊາດ ຄິດຢາກໃຫ້ປະເທດຊາດໄດ້ຮັບການພັດທະນາ, ຄິດຢາກຊ່ວຍປະຊາຊົນໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກຫຼ້າຫຼັງ.

ມີເທື່ອໜຶ່ງ ເພິ່ນຖາມຂ້າພະເຈົ້າວ່າ: ອິງນິດ ໂຕຄິດຫຍັງມື້ນີ້ ຂ້າພະເຈົ້າຕອບເພິ່ນວ່າ ບໍ່ໄດ້ຄິດຫຍັງ ທ່ານເຈືອງຫົວຂຶ້ນ ແລ້ວເວົ້າວ່າເປັນພະນັກງານເປັນຫຍັງຈຶ່ງບໍ່ຄິດ ? ເປັນພະນັກງານຕ້ອງ ຄິດໃຫ້ຫຼາຍຄິດໃຫ້ເລິກ ຄິດເພື່ອສ່ວນລວມ ເພື່ອຈະໄດ້ຕອບແທນບຸນຄຸນແຜ່ນດິນ. ຂ້າພະເຈົ້າບໍ່ຕອບ ແຕ່ຍ້ອນກັບຖາມເພິ່ນຄືນວ່າ: ອ້າຍເດ ຄິດຫຍັງ? ຄິດຍາມໃດ ຈຶ່ງຄິດອອກດີ ເພິ່ນຕອບວ່າ ຄິດອອກດີທີ່ສຸດແມ່ນຍາມອາບນ້ຳ (ຢູ່ໃນຫ້ອງອາບນ້ຳ) ໝາຍວ່າທັງອາບນ້ຳ ທັງຄິດ ຄິດຍາມອາບນ້ຳ ແມ່ນສະໝອງສົດຊື່ນ ແລະປອດໂປ່ງດີ, ຄິດຫຍັງກໍອອກດີ.

ທຸກຄັ້ງທີ່ພົບກັນ ນອກຈາກລົມວຽກລົມງານກັນແລ້ວ ເພິ່ນມັກຖາມເຖິງ ຄວາມສຸກ-ທຸກຂອງຄອບຄົວ ຖາມເຖິງໝູ່ຄູ່ຜູ້ອື່ນໆ. ມີຄັ້ງໜຶ່ງ

ຂ້າພະເຈົ້າໄດ້ຕັ້ງບັນຫາຖາມເພິ່ນວ່າດຽວນີ້, ຢູ່ປະເທດເຮົາ ຄົນມີຄວາມຮູ້ກໍຫຼາຍຂຶ້ນ ມີຜູ້ຮຽນຈົບປະລິນຍາຕີ ປະລິນຍາໂທ ປະລິນຍາເອກ ກໍຫຼາຍສົມຄວນ ແຕ່ເປັນຫຍັງປະເທດເຮົາຈຶ່ງບໍ່ໄດ້ຮັບການພັດທະນາເທົ່າທີ່ຄວນ ? ຄວາມຈິງແລ້ວ ມັນຄວນຈະເລີນກວ່ານີ້ ອ້າຍຄຶດວ່າແນວໃດ ? ໄດ້ຍິນຂ້າພະເຈົ້າຖາມແນວນັ້ນ ເພິ່ນກໍຫົວແລະຕອບຂ້າພະ ເຈົ້າວ່າສັງຄົມຂອງລາວເຮົາໄດ້ສໍ່ານີ້ກໍດີຫຼາຍແລ້ວ ຢາກໃຫ້ໄດ້ໃຈເຈົ້າໝົດ ມັນກໍບໍ່ໄດ້ແລ້ວອິງນິດເອີຍ, ສໍ່ານີ້ກໍດີທີ່ສຸດແລ້ວ. ຖ້າທວນຄືນປະຫວັດສາດ ຂອງຊາດເຮົາແລ້ວເຫັນວ່າບໍ່ມີຍຸກໃດ, ສະໄໝໃດຊິຈະເລີນກ້າວໜ້າ ຄືຍຸກປະຈຸບັນນີ້ດອກ. ເຈົ້າຫາລະຕັ້ງໃຈເຮັດວຽກທັ້ນໝາ! ຢ່າຄຶດຫຼາຍ!

ເມື່ອບໍ່ໄດ້ພົບກັນດົນ ໃນເວລາພົບກັນ ທ່ານເຈືອງມັກເວົ້າກັບຂ້າພະເຈົ້າວ່າ: ຈັ່ງໃດ ອິງນິດ! ຄືບໍ່ເຫັນມາຫາແດ່, ລືມເຮົາແລ້ວບໍ? ຂ້າພະເຈົ້າຕອບວ່າ: ລືມອ້າຍບໍ່ໄດ້ດອກ ເພາະອ້າຍມີບຸນຄຸນກັບນ້ອງຫຼາຍ ນ້ອງຄຶດວ່າ ບຸນຄຸນນີ້ຄົງທົດແທນບໍ່ໝົດ ບຸນຄຸນນີ້ ຈະຝັງເລິກ ຢູ່ໃນຫົວໃຈຂອງນ້ອງຕະຫຼອດໄປເຖິງບໍ່ໄດ້ມາຫາ ແຕ່ໃນໃຈກໍຄຶດຮອດ ແລະຄຶດເຖິງຄໍາເວົ້າກໍຄືຄໍາສັ່ງສອນ ຂອງອ້າຍຢູ່ສະເໝີທັ້ນລະ!

ໃນເວລາຫວ່າງ ທ່ານເຈືອງ ສົມບູນຂັນ ມັກຫຼິ້ນກິລາ ຮ້ອງເພງ ແລະມັກຕຶກເບັດ. ເພງທີ່ເພິ່ນມັກຮ້ອງແມ່ນ "ຢືນຍາມແດນຂອງ" ຂອງທ່ານບຸນປະສິງ ສາຍເຊຂະໝານ. ທຸກຄັ້ງທີ່ມີໝູ່ສະໜິດໃຫ້ຮ້ອງເພງ ເພິ່ນຈະຮ້ອງເພງ "ຢືນຍາມແດນຂອງ" ກ່ອນ ແລ້ວຈຶ່ງຮ້ອງເພງອື່ນ. ສໍາລັບກິລາທີ່ເພິ່ນມັກແມ່ນກິລາປິ່ງປ່ອງ ເຕະບານ ກິລາປີກໄກ່ ກິລາຕີບູນ.

ວັນສຸດທ້າຍທີ່ໄດ້ພົບກັນ (16-5-2014) ຫຼັງຈາກເລີກປະຊຸມຂອງອະນຸກໍາມະການ ເນື້ອໃນກຽມກອງປະຊຸມໃຫຍ່ ຄັ້ງທີ 10 ຂອງພັກແລ້ວ, ເພິ່ນໄດ້ບອກກັບຂ້າພະເຈົ້າວ່າມື້ອື່ນ (17-5-2014) ເຮົາຊິໄປຕ່າງແຂວງນໍາດວງໃຈເດີ, ກັບມາຈຶ່ງພາກັນໄປວຽກ 3 ສ້າງຢູ່ພາກກາງ, ພາກໃຕ້ໃຫ້

ໂຕກຽມຖ້າເຮົາເດີ.

ການຈາກໄປຢ່າງບໍ່ມີວັນກັບມາຂອງ ທ່ານ ເຈືອງ ສົມບູນຂັນ ຜູ່ທີ່ເປັນທັງນາຍ(ຫົວໜ້າ) ເປັນທັງອ້າຍ, ເປັນທັງເພື່ອນຄັ້ງນີ້ເປັນການສູນເສຍອັນໃຫຍ່ຫຼວງສຳລັບສ່ວນໂຕກໍຄືປະເທດຊາດ.

ດັ່ງນັ້ນໃນມື້ສົ່ງສະການຂອງເພິ່ນ ຂ້າພະເຈົ້າໄປບວດໃຫ້ເພິ່ນ ເພື່ອເປັນການຕອບແທນບຸນຄຸນ ແລະເພື່ອສະແດງເຖິງຄວາມອາໄລອາວອນທີ່ມີຕໍ່ເພິ່ນ.

ເຖິງວ່າທ່ານເຈືອງ ຈະຈາກພວກເຮົາໄປໄກແສນໄກ ແລະບໍ່ມີວັນຈະກັບມາຫາພວກເຮົາແລ້ວກໍຕາມ ແຕ່ຂ້າພະເຈົ້າຈະຈາລຶກຄຸນງາມຄວາມດີຂອງເພິ່ນໄວ້ໃນສ່ວນເລິກຂອງຫົວໃຈຕະຫຼອດໄປ ຂ້າພະເຈົ້າຄິດວ່າຊື່ສຽງຄຸນງາມຄວາມດີຂອງເພິ່ນຈະຖືກຈາລຶກໄວ້ ໃນຄວາມຊົງຈຳຂອງໝູ່ເພື່ອນ ສະຫາຍທຸກຄົນໄປຈົນເທົ່າໃດໆ... ພວກເຮົາຂໍອຳລາທ່ານເຈືອງ ສົມບູນຂັນ ເປັນຄັ້ງສຸດທ້າຍ

ຂໍໃຫ້ດວງວິນຍານຂອງທ່ານ ເຈືອງ ສົມບູນຂັນ ຈົ່ງໄປສູ່ສຸຄະຕິເຖີ້ນ!



ຖ່າຍຢູ່ຕໍ່ໜ້າມະຫາວິທະຍາໄລແຫ່ງລັດ ເບລາຣຸດຊີ



ທີມເຕະບານຂອງຊາວໜຸ່ມ ນັກສຶກສາເມືອງ Minsk
ເພິ່ນເປັນຄົນທີ 2 ຢູ່ແຖວໜ້າ ນັບຈາກຂວາ

# ເສັ້ນທາງທີ່ຈະຍ່າງຍ່ຳອີກຕໍ່ໄປ ຄວາມຊົງຈຳ ສ້ຽວນຶ່ງ ກ່ຽວກັບ ທ່ານ ເຈືອງ ສິມບູນຂັນ

ດວງເດືອນ ບຸນຍາວົງ, ປະລິນຍາເອກ ດຸດສະດີ ບັນດິດ
ນັກຄົ້ນຄວ້າວັດທະນະທັມລາວ ຮາງວັນ ຟູໂກໂອກະ ຍີ່ປຸ່ນ ປີ 2005
ນັກຂຽນຮາງວັນຊີໄຣ ປີ 2006, ສິນລະປິນດີເດັ່ນ ສາຂາວັນນະຄະດີ ປີ 2011

ຂ່າວກ່ຽວກັບການຈາກໄປຢ່າງບໍ່ຄິດບໍ່ຝັນ ຂອງ ທ່ານເຈືອງ ສິມບູນຂັນ ໃນວັນທີ 17 ພຶດສະພາທີ່ຜ່ານມາ ສ້າງຄວາມຕື່ນຕົກໃຈໃຫ້ແກ່ຂ້ອຍ ຈົນຄິດຫຍັງບໍ່ອອກ ໄດ້ແຕ່ງຶ້ງງວາ ຊົງເຊື້ຢູ່ໄລຍະນຶ່ງ.

ຂ້ອຍກັບຄອບຄົວ ຄື ມື້ລາງ ອຸທິນ ບຸນຍາວົງ ໄດ້ຮູ້ຈັກກັບ ທ່ານເຈືອງ ມາຫຼາຍທົດສະວັດແລ້ວ ຄືຕັ້ງແຕ່ຄາວພວກເຮົາໄປເຮັດວຽກທີ່ຢູ່ກອງບັນນາທິການພາສາລາວ ສຳນັກພິມກ້າວໜ້າ ທີ່ນະຄອນຫຼວງມົດສະກູ ອະດີດສະຫະພາບໂຊວຽດ ລະຫວ່າງຕົ້ນປີ 1984 ພຸ້ນແລ້ວ.

ໃນະຂະນະທີ່ຊຸ້ນຊ້ຽວ ແປປຶ້ມປັດຊະຍາການເມືອງຢູ່ນັ້ນ ນັກແປໄວໜຸ່ມຄົນນຶ່ງ ກໍປາກົດໂຕຂຶ້ນ ສ້າງຄວາມປະທັບໃຈໃຫ້ພວກເຮົາ ເພາະຜູ້ແປ ບົດຂຽນພາສາຣັດເຊຍ ມາເປັນພາສາລາວສ່ວນໃຫຍ່ ມັກຈະມີຄວາມຫຍຸ້ງຍາກໃນການໃຊ້ຄຳລາວ ບໍ່ຮູ້ຄຳສັບພຽງພໍ ບໍ່ຮູ້ນຳໃຊ້ວັດຈະນານຸກົມລາງກໍບໍ່ຍອມຮັບ ຄວາມແນະນຳຂອງ ບ.ກ.ງ່າຍໆ... ເຊິ່ງຫຼາຍເທື່ອໄດ້ເຮັດໃຫ້ວຽກບັນນາທິການແກ່ຍາວຍືດເຍື້ອ ແລະໜັກຫົວຍ້ອນ. ແຕ່ເພິ່ນຜູ້ນີ້ ບໍ່ເປັນຈັ່ງຊັ້ນ ນອກຈາກຄວາມຖະໜອມທ່ອມຕົນແລ້ວ ຍັງສະແດງອອກເຖິງຄວາມກະຫາຍໄຄ່ຮູ້ ຢາກສຶກສາພາສາລາວຕື່ມເລີຍໆ ຈື່ໄດ້ວ່າການເຮັດວຽກຮ່ວມກັບເພິ່ນ ມີບັນຍາກາດດີ ບໍ່ແກ່ຍາວຊັກຊ້າ ບໍ່ຖົກຖຽງ

ແບບໜ້າດຳຕາແດງໃສ່ກັນ, ການສົນທະນານີ້ ສາລະ ເປົ້າໝາຍຈະແຈ້ງ ເຊັ່ນ ຄວາມຄິດຢາກເຮັດວັດຈະນານຸກົມ ສັບປັດຊະຍາການ ເມືອງຣັດ ເຊຍ ຝຣັ່ງ-ອັງກິດ-ລາວ ໄວ້ໃຫ້ເປັນມາດຖານ ສຳລັບການແປໃນອະນາຄົດ ແລະອື່ນໆ.

ຄວາມແທ້ແລ້ວ ທ່ານ ເຈືອງ ບໍ່ໄດ້ເປັນນັກສຶກສາ ຫາເຮັດວຽກ ເພີ່ມດ້ວຍການຮັບແປປຶ້ມ ໃຫ້ສຳນັກພິມ ຄືກັບຄົນອື່ນໆ ແຕ່ເພິ່ນໄປເປັນ ນາຍພາສາໃຫ້ ນັກຄົ້ນຄວ້າທິດສະດີ ຈຳນວນນຶ່ງຢູ່ມະຫາວິທະຍາໄລ/ສະ ຖາບັນທິດສະດີການເມືອງ ແຕ່ຄົງແມ່ນຍ້ອນວ່າ ຊື່ສຽງໃນການແປຂອງ ເພິ່ນ ຄົງແຜ່ກະຈາຍໄປຊອດຫູ ກອງ ບ.ກ. ສຳນັກພິມກ້າວໜ້າ ເຊິ່ງຍາມ ໃດກໍເຊາະຊອກສືບຫາມືອາຊີບມາແປປຶ້ມ ໃຫ້ຖອງທັນກັບແຜນການ ຈັ່ງ ຊັ້ນມາຮອດມື້ນຶ່ງ ພວກເຮົາກໍໄດ້ຮັບຂ່າວຈາກຫົວໜ້າວ່າ ຈະມີນັກແປມາ ເຮັດວຽກນຳເຮົາຢູ່ເຮືອນກັບ ນື້ລາງ ອຸທິນ ທີ່ເປັນ ບ.ກ. ຝ່າຍປັດຊະຍາ ການເມືອງ. ເວົ້າໄດ້ວ່າ ນີ້ແມ່ນການຮູ້ຈັກກັນບົນເສັ້ນທາງແຫ່ງອັກສອນ ຂອງພວກເຮົາກັບ ທ່ານເຈືອງ ສົມບູນຂັນ ແຕ່ຫວ່າງ 30 ກວ່າປີກ່ອນ ແຕ່ ຂ້ອຍຍັງຈື່ຈຳ ແລະປະທັບໃຈໃນທ່າທີ ກິລິຍາອັນຄ່ຽມຄົມ ສຸພາບ ຄວາມ ສົນໃຈ ເອົາໃຈໃສ່ໃນການໃຊ້ພາສາ ຈົນນື້ລາງອຸທິນ ອອກປາກວ່າ "ຄົນຜູ້ ນີ້ຈະເປັນນັກແປທີ່ດີ ແລະເປັນນັກຂຽນໄດ້..." ຕໍ່ມາຂ້ອຍຈຶ່ງຮູ້ວ່າ ເພິ່ນເປັນ ລູກເຂີຍຂອງທ່ານ ຄຳເພົາ ພອນແກ້ວ ນັກວິຊາການ ດ້ານສຶກສາ ຜູ້ອາ ວຸໂສທີ່ຮູ້ຈັກຮັກແພງກັນດີຄົນນຶ່ງ.

ວັນເວລາຜ່ານໄປ ຊີວິດສ່ວນໂຕ ວຽກງານ ເຫດການບ້ານເມືອງ ສະພາບແວດລ້ອມ... ໄດ້ຊັກຈູງ ແຕ່ລະຄົນໃຫ້ກ້າວໄປຕາມພາລະບົດບາດ ຂອງຕົນ ແຕ່ຖະໜົນໜັງສື ເປັນເສັ້ນທາງຍາວກວ້າງ ນັກຂຽນທີ່ເດີນທາງ ຍ່າງຍ່ຳໄປເທິງທາງເສັ້ນນີ້ ເຖິງບໍ່ໄດ້ພົບພໍ້ໜ້າກັນ ແຕ່ກໍຮູ້ສຶກນຶກຫາກັນ ຮູ້ຈັກກັນໄປໝົດ ເຊັ່ນສິ່ງທີ່ເກີດຂຶ້ນກັບຂ້ອຍ ແລະອີກຫຼາຍໆຄົນ ທີ່ໄດ້ຍ່າງ

ຍ່ຳຢູ່ເທິງທາງເສັ້ນນີ້ມາເຫິງນານ ລະຫວ່າງພວກເຮົາ ມັນຈຶ່ງເກີດສາຍສຳພັນຊະນິດນຶ່ງ ທີ່ສານຕ່ຳດ້ວຍຕົວອັກສອນ ພາສາວັນນະຄະດີ ແລະຝັ້ນກຽວໜຽວແໜ້ນຂຶ້ນ ໂດຍທີ່ບໍ່ມີໃຜສາມາດແນມເຫັນ. ຂ້ອຍເຂົ້າໃຈວ່າ ເຖິງຈະມີ ພາລະໜັກໜ່ວງຕາມໜ້າທີ່ຕຳແໜ່ງແຕ່ທ່ານເຈືອງ ຜູ້ມັກການຂຽນການແປ ທັງເປັນນັກຄົ້ນຄວ້ານັ້ນ ຍັງເປັນນັກອ່ານຜູ້ຕິດຕາມຜົນງານຂອງນັກຂຽນນັກປະພັນລາວດ້ວຍຄວາມເອົາໃຈໃສ່ມາຕະຫຼອດ, ດັ່ງນັ້ນເມື່ອກາລະໂອກາດອຳນວຍ ທ່ານຈຶ່ງບໍ່ປ່ອຍໃຫ້ມັນຜ່ານໄປຊື່ໆ. ເມື່ອທ່ານມາຊີ້ນຳ ວຽກງານໂຄສະນາອົບຮົມ ທ່ານກໍຫັນມາເອົາໃຈໃສ່ຍົກສູງບົດບາດ ນັກຂຽນນັກປະພັນ ໂດຍສະໜັບສະໜູນການປະດິດຄິດແຕ່ງບົດວັນນະຄະດີຕ່າງໆ ທີ່ມີເນື້ອເລື່ອງກ່ຽວກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນລາວ ບັນຫາໃຫຍ່ຂອງຊາດ ແລະທ່ານເອງ ເປັນຜູ້ນຶ່ງທີ່ມີສ່ວນຊີ້ນຳວຽກງານນີ້. ເຫັນໄດ້ວ່າ ທ່ານເຈືອງ ກໍໄດ້ຢ່າງເລິກເຊິ່ງ ເຖິງເຫງົ້າ ພະລັງທາງວັດທະນະທຳພາສາ ວັນນະຄະດີ ຕໍ່ການພັດທະນາຊາດແບບຍືນຍົງ ແລ້ວບໍ່ດົນບໍ່ນານ ຜົນງານການປະດິດແຕ່ງ ວັນນະຄະດີກະວີ ທີ່ເປັນອາຫານດ້ານຈິດໃຈ ຫຼໍ່ລ້ຽງບຳລຸງວິນຍານຄົນລາວ ເປັນຜະລິດພັນນຶ່ງ ທີ່ບໍ່ອາດຊື້ຫາມາຈາກຕ່າງປະເທດໄດ້ ກໍປາກົດຕົວຂຶ້ນຢູ່ຄຽງຂ້າງ ພໍ່ແມ່ ປະຊາຊົນຄົນລາວ ໃນເຂດຊົນນະບົດ.

ທີ່ຜ່ານມາ ໄລຍະຫຼັງໆນີ້ ທຸກໆຄັ້ງທີ່ພວກເຮົາຈັດກິດຈະກຳເພື່ອວັດທະນະທຳ ສາສະໜາ ພາສາ ວັນນະຄະດີ ບໍ່ວ່າຈະຈັດໂດຍໜ່ວຍງານພາກລັດ ຫຼືເອກະຊົນເລັກໆນ້ອຍໆ... ເຊັ່ນ ໜ່ວຍງານສື່ ຂອງ ຄ.ພ.ພ. (ໂຄງການພຸດທະສາສະໜາເພື່ອສັງຄົມທີ່ຂຶ້ນກັບກຳມາ ທິການເຜີຍແຜ່ ສິລະທັມ ແລະ ວິປັດສະນາກັມມະຖານ, ອ.ພສ) ທີ່ຈັດພິມຈົດໝາຍຂ່າວ ແລະປຶ້ມຕຳລາວິຊາການ ພວກເຮົາມັກຈະໄດ້ຮັບການສະໜັບ ສະໜູນຈາກທ່ານ ແລະຄອບຄົວສະເໝີມາ. ເມື່ອກຸ່ມສິບທອດມໍລະດົກລ້ານຊ້າງ

ເລົ່າກອນສິນໄຊ(ສູນພັດທະນະຈາການສຶກສາສຳລັບເດັກ ທີ່ຂຶ້ນກັບຜະແໜກສຶກສາ ນະຄອນຫຼວງ) ຮ່ວມກັບ ກະຊວງຖະແຫຼງຂ່າວ ແລະວັດທະນະທັມ ຈັດສະແດງລະຄອນເວທີສາກໃຫຍ່ ເນື່ອງໃນໂອກາດສະຫຼອງ 450 ປີ ນະຄອນຫຼວງ ວຽງຈັນ, ທ່ານເຈືອງ ບໍ່ພຽງແຕ່ສະໜັບສະໜູນດ້ານວັດຖຸປັດໄຈ ແຕ່ທ່ານຍັງ ສະຫຼະເວລາໄປຮ່ວມຊົມການສະແດງ ຂອງບັນດານ້ອງນ້ອຍເຍົາວະຊົນ ຊາວໜຸ່ມ ນັກຮຽນ ນັກສຶກສາ ແຕ່ຕົ້ນຈົນສຸດຮ່ວມກັບຂັ້ນນຳອື່ນໆຈຳນວນນຶ່ງ, ສິ່ງນີ້ກໍໄດ້ເຮັດ ໃຫ້ຄະນະຮັບຜິດຊອບມີມານະ ມີກຳລັງໃຈ ພາກພູມໃຈ ບຸກບືນສືບຕໍ່ເຮັດພາລະ ໜ້າທີ່ຂອງຕົນຂຶ້ນອີກ.

ທັງໝົດທີ່ຂ້ອຍຮູ້ເຫັນ ແລະເລົ່າມານີ້ ຄືງຍັງເປັນພຽງສ່ວນໜ້ອຍດຽວທີ່ຢັ້ງຢືນຄວາມເຂົ້າໃຈໃນບົດບາດ ອັນສຳຄັນຂອງວັດທະນະທຳ ກໍຄືພາສາວັນນະຄະດີຂອງຊາດຂອງ ທ່ານເຈືອງ ສິນບູນຂັນ ໃນຖານະການນຳຜູ້ນຶ່ງ ທີ່ຕ້ອງຮັບຜິດຊອບວຽກງານສ້າງສາຄວາມຍືນຍົງ ໝັ້ນຄົງຂອງຊາດ. ໃນຂະນະດຽວກັນ ສິ່ງນຶ່ງທີ່ຂ້ອຍຈົດຈຳບໍ່ລືມ ກໍແມ່ນຄວາມມີນ້ຳໃຈເອື້ອເຟື້ອເຜື່ອແຜ່ ເຫັນໃຈເພິ່ນເຫັນໃຈໂຕ ດັ່ງເມື່ອຄາວຄອບຄົວຂອງຂ້ອຍມີບັນຫາຄື ເມື່ອລູກສາວຄົນນ້ອຍ ມື້ລາງນາງດວງແຂ ເຈັບປ່ວຍດ້ວຍພະຍາດຮ້າຍແຮງ ແລະຂ້ອຍກໍມີຄວາມຈຳເປັນຕ້ອງໃຊ້ຈ່າຍຫຼາຍເມື່ອຮູ້ເຖິງຄວາມຕ້ອງການຂອງຂ້ອຍ ທັງທ່ານເຈືອງ ແລະຄອບຄົວຂອງເພິ່ນກໍຍື່ນມືເຂົ້າມາຊ່ວຍທັນທີ ຄືງບໍ່ຈຳເປັນຈະເອີ່ຍຄຳວ່າ ສຸດແສນເສຽດາຍແລະຄຶດຮອດທ່ານ ທີ່ມາດ່ວນຈາກໄປຢ່າງນີ້ ດ້ວຍວ່າ ສິ່ງທີ່ທ່ານປະທັບຮອຍໃສ່ວັນເວລາທີ່ລ່ວງໄປນັ້ນ ມັນໄດ້ສິ່ງຜົນຮັບຕໍ່ເນື່ອງ ຄືຟອງຄື້ນທີ່ສຽງສຸດບໍ່ເປັນ ແລະເສັ້ນທາງສາຍອັກສອນ ທີ່ທ່ານຊ່ວຍແຜ້ວແປງໄວ້ໃຫ້ແລ້ວນັ້ນ ກໍມີແຕ່ຈະຍາວຍືດ ກວ້າງຂວາງອອກເລື້ອຍໆ ຜູ້ຄົນມາກາມາຍມາຍ່ຳຍ່າງ ຢູ່ຊົ່ວກາລະນານ....

# ເມື່ອ ນ້ອງຊາຍຄົນນຶ່ງ ຈາກໄປ

ໂດຍ: ສິມສະຫວາດ ເລັ່ງສະຫວັດ

ສະຫາຍ ເຈືອງ ສິມບູນຂັນ ໄດ້ຈາກພວກເຮົາໄປ ໂດຍບໍ່ມີວັນຈະກັບຄືນມາອີກແລ້ວ ຍ້ອນປະສົບອຸບັດເຫດເຮືອບິນຕົກໃນຂະນະທີ່ໄປປະຕິບັດໜ້າທີ່ທາງລັດຖະການທີ່ແຂວງຊຽງຂວາງ ເມື່ອວັນທີ 17 ພຶດສະພາ 2014.

ພວກເຮົາສຸດແສນເສຍດາຍ ແລະ ອາໄລອາວອນຢ່າງສຸດຊຶ້ງ ຕໍ່ສະຫາຍ ເຈືອງ ສິມບູນຂັນ.

ສະຫາຍ ເຈືອງ ສິມບູນຂັນ ບໍ່ແມ່ນຍາດຕິພີ່ນ້ອງຂອງຂ້າພະເຈົ້າ, ແຕ່ຫາກມີຄວາມສະໜິດຕິດພັນຄືອ້າຍນ້ອງກັນ. ໃນຊຸມປີ 1980 ຫາຕົ້ນຊຸມປີ 1990, ຂ້າພະເຈົ້າໄດ້ເປັນຮອງຫົວໜ້າ ແລ້ວກ້າວຂຶ້ນເປັນຫົວໜ້າຫ້ອງວ່າການສູນກາງພັກ ແລະ ສະພາລັດຖະມົນຕີ, ທັງເປັນຜູ້ຊ່ວຍທີ່ໃກ້ຊິດຂອງປະທານ ໄກສອນ ພົມວິຫານ ເຊິ່ງໃນໄລຍະນັ້ນ ເປັນໄລຍະທີ່ພັກເຮົາພວມລິເລີ່ມດຳເນີນພາລະກິດປ່ຽນແປງໃໝ່ ແລະຕ້ອງການພະນັກງານທີ່ມີລະດັບຄວາມຮູ້ທາງດ້ານທິດສະດີ ແລະພຶດຕິກຳ, ເປັນຕົ້ນແມ່ນມີຈິນຕະນາການໃໝ່; ປະທານ ໄກສອນ ພົມວິຫານ ໄດ້ແນະນຳໃຫ້ຂ້າພະເຈົ້າ ສົມທົບກັບຄະນະຈັດຕັ້ງສູນກາງ ຊອກຫາພະນັກງານຕາມມາດຕະຖານດັ່ງກ່າວ. ໃນທີ່ສຸດ, ຂ້າພະເຈົ້າໄດ້ຮູ້ຂ່າວວ່າ ສະຫາຍ ເຈືອງ ສິມບູນຂັນ ເປັນອາຈານສອນຢູ່ໂຮງຮຽນພັກສູນກາງ ທີ່ທ່າງ່ອນ, ຈຶ່ງໄປພົບກັບສະ

ຫາຍ ແລະຮູ້ຂ່າວຈາກສະຫາຍວ່າ ໄດ້ຮຽນຈົບວິຊາເສດຖະສາດການເມືອງທີ່ມະຫາວິທະຍາໄລແຫ່ງຊາດທີ່ນະຄອນມິນສເກິ, ລັດເບລາຣຸດຂອງສະຫະພາບໂຊວຽດ ແລະເຄີຍເປັນຜູ້ແປພາສາໃຫ້ຊຸດຮຽນຂອງພະນັກງານລາວທີ່ໂຮງຮຽນພັກຂອງສູນກາງພັກກອມມູນິດ ແຫ່ງສະຫະພາບໂຊວຽດ ທີ່ມົດສກູ, ຍ້ອນແນວນັ້ນ ຂ້າພະເຈົ້າ ຈຶ່ງໄດ້ສະເຫນີຂໍເອົາສະຫາຍເຈືອງ ມາເຮັດວຽກຢູ່ກົມເລຂານຸການຂອງການນຳ ເຊິ່ງຂ້າພະເຈົ້າເປັນຫົວໜ້າກົມ. ກົມນີ້ມີໜ້າທີ່ຊ່ວຍກົມການເມືອງ ເຊິ່ງໂດຍກົງແມ່ນຊ່ວຍວຽກປະທານ ໄກສອນ ພົມວິຫານ.

ນັບແຕ່ທ້າຍປີ 1986 ມາ ຂ້າພະເຈົ້າ ແລະສະຫາຍ ເຈືອງ ໄດ້ຮ່ວມວຽກຮ່ວມງານນຳກັນເປັນຕົ້ນມາ ກໍ່ຮູ້ນິດໄສໃຈຄໍກັນ, ຮູ້ຄວາມສາມາດໃນວຽກງານຂອງສະຫາຍ ເຈືອງ ສົມບູນຂັນ ແລະ ທັງສອງຄົນພວກເຮົາກໍ່ມີແບບແຜນເຮັດວຽກຄືກັນ, ເປັນຕົ້ນແມ່ນມັກອ່ານ, ມັກຄົ້ນຄວ້າທິດສະດີມາກ-ເລນິນ, ບົດຮຽນຂອງຫຼາຍໆປະເທດ, ມັກໃກ້ຊິດຕິດແທດກັບຮາກຖານ, ກັບມະຫາຊົນ. ຍ້ອນແນວນັ້ນ ສອງຄົນຈຶ່ງຮັກແພງກັນຄືອ້າຍນ້ອງ, ມີຫລາຍໆຄັ້ງທີ່ຂ້າພະເຈົ້າ ແລະສະຫາຍ ເຈືອງ ໄດ້ແລກປ່ຽນຄວາມເຫັນກັນ, ສົນທະນາວຽກງານນຳກັນ ຈົນລືມກິນເຂົ້າ, ມີເທື່ອກໍ່ຈົນເດິກຈົນດຶ່ນ, ພັນລະຍາຂອງຂ້າພະເຈົ້າເລີຍເວົ້າວ່າ ສອງອ້າຍນ້ອງນີ້ ໂອ້ລົມກັນປານຜູ້ບ່າວຜູ້ສາວລົມກັນ, ຄືວ່າຈັບອົກຈັບໃຈກັນແທ້.

ຜ່ານການເຮັດວຽກນຳກັນ ຂ້າພະເຈົ້າເຫັນແຈ້ງວ່າ ສະຫາຍ ເຈືອງເປັນຜູ້ຕັ້ງໜ້າຫ້າວຫັນໃນວຽກງານ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່, ກ້າສະເໜີຄວາມຄິດສ່ວນຕົວຂອງຕົນ; ເມື່ອໄດ້ຮັບມອບວຽກງານໃດແລ້ວ ສະຫາຍແມ່ນເຮັດຢ່າງມີຜົນສຳເລັດ ແລະສຳເລັດເປັນຢ່າງດີ. ດັ່ງນັ້ນສະຫາຍຈຶ່ງໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກການຈັດຕັ້ງ ແລະການນຳ, ໂດຍສະເພາະແມ່ນໄດ້ຮັບຄວາມເຊື່ອໝັ້ນ ໄວ້ວາງໃຈຈາກປະທານ ໄກສອນ ພົມ

ວິຫານ.

ສະຫາຍ ເຈືອງສົມບູນຂັນ ເປັນຄົນທີ່ມີມະນຸດສຳພັນດີ,ເຂົ້າຫາຊັ້ນຄົນຕ່າງໆໄດ້ດີ, ມີໝູ່ມີເພື່ອນກວ້າງຂວາງທັງພາຍໃນປະເທດ ແລະຕ່າງປະເທດ.

ຍ້ອນຄຸນລັກສະນະດັ່ງກ່າວ ສະຫາຍ ເຈືອງ ສົມບູນຂັນ ຈຶ່ງໄດ້ຖືກມອບໝາຍໃຫ້ຮັບໜ້າທີ່ວຽກງານໃນຫຼາຍຂົງເຂດ, ໄດ້ກ້າວຈາກພະນັກງານວິຊາການຂຶ້ນ ເປັນຫົວໜ້າກົມເລຂາ, ທັງເປັນເລຂາສະເພາະ ຂອງປະທານໄກສອນ ພົມວິຫານ, ກ້າວຂຶ້ນເປັນຮອງຫົວຫນ້າຫ້ອງວ່າການສູນກາງພັກ, ເປັນຜູ້ວ່າການທະນາຄານ ແຫ່ງ ສປປລາວ, ເປັນຮອງຫົວໜ້າໂຄສະນາອົບຮົມສູນກາງພັກ, ຫົວໜ້າຫ້ອງວ່າການສຳນັກງານນາຍົກ ແລະຄະນະເລຂາທິການລັດຖະບານ, ສຸດທ້າຍ ເປັນຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ; ສະຫາຍ ໄດ້ກ້າວຈາກສະມາຊິກພັກ ເປັນກຳມະການສູນກາງ ແລະເປັນຄະນະເລຂາທິການສູນກາງພັກໃນກອງປະຊຸມໃຫຍ່ຄັ້ງທີ 9 ຂອງພັກ.

ການຈາກໄປຂອງສະຫາຍ ເຈືອງ ສົມບູນຂັນ ເປັນການສູນເສຍປັນຍາຊົນປະຕິວັດຜູ້ດີເດັ່ນ ແລະ ການນຳຂັ້ນສູງທີ່ຈົງຮັກພັກດີຂອງພັກ ແລະລັດ. ສຳລັບຂ້າພະເຈົ້າແລ້ວ ແມ່ນເປັນການສູນເສຍສະຫາຍຮ່ວມອຸດົມການ ແລະນ້ອງຊາຍຜູ້ໃກ້ຊິດທີ່ສຸດຂອງຕົນ.

# ສະຫາຍ ເຈືອງ ສົມບູນຂັນ ໃນຄວາມຊົງຈຳຂອງຂ້າພະເຈົ້າ

ໂດຍ: ດຣ.ຄຳພັນ ເຜີຍຍະວົງ

ຂ້າພະເຈົ້າໄດ້ຮູ້ຈັກແກ່ວນເຄີຍກັບສະຫາຍ ເຈືອງ ສົມບູນຂັນ ໂດຍເລີ່ມແຕ່ປີ 1989 ເປັນຕົ້ນມາ, ໃນໄລຍະທີ່ຂ້າພະເຈົ້າໄດ້ມາເປັນເລຂາຂອງທ່ານ ໄມສຸກ ໄຊສົມແພງ, ອະດີດຫົວ ໜ້າຫ້ອງວ່າການສູນກາງພັກ-ສະພາລັດຖະມົນຕີ ແລະທັງເປັນຜູ່ບັນທຶກກອງປະຊຸມກົມການເມືອງ ສູນກາງພັກ.

ກ່ອນຈະມາຮູ້ຈັກສະຫາຍ ເຈືອງ ສົມບູນຂັນ ເປັນຍ້ອນຂ້າພະເຈົ້າເປັນຜູ່ບັນທຶກກອງປະຊຸມກົມການເມືອງ ແລະກອງປະຊຸມອື່ນໆທີ່ສຳຄັນຂອງສູນກາງພັກ, ຊຶ່ງພາຍຫຼັງກອງປະຊຸມແຕ່ ລະຄັ້ງຂ້າພະເຈົ້າຕ້ອງຮັບຜິດຊອບເຮັດບົດບັນທຶກ ແລະເຮັດມະຕິຂໍ້ຕົກລົງ ແລະແຈ້ງການຕ່າງໆຂອງກອງປະຊຸມ, ຊຶ່ງບັນດາເອກະສານດັ່ງກ່າວ ຕ້ອງຜ່ານສະຫາຍເຈືອງກວດຜ່ານກ່ອນ ຈະສົ່ງໃຫ້ຂັ້ນເທິງເຊັນປະກາດໃຊ້.

ເນື່ອງຈາກວ່າຕົວເອງບໍ່ທັນຮູ້ຈັກກັບວຽກງານດັ່ງກ່າວມາກ່ອນ. ດັ່ງນັ້ນ ໃນການເຮັດບົດບັນທຶກຫຍໍ້ ຫຼືຮ່າງມະຕິ, ຂໍ້ຕົກລົງ ຫຼືແຈ້ງການຕ່າງໆແຕ່ລະຄັ້ງ, ຂ້າພະເຈົ້າຕ້ອງໄປຖາມ ແລະຮຽນວິທີສັງລວມ, ວິທີເຮັດແຕ່ລະເອກະສານກັບສະຫາຍ ເຈືອງ ໃນທຸກໆຄັ້ງພາຍຫຼັງກອງປະຊຸມ. ຜ່ານການເຄື່ອນໄຫວວຽກງານດັ່ງກ່າວ ໄດ້ເຮັດໃຫ້ຂ້າພະເຈົ້າຮູ້ຈັກແນວຄິດຈິດໃຈ ແລະຄວາມຮູ້ຄວາມສາມາດຂອງເພິ່ນ ຊຶ່ງເຮັດໃຫ້ການພົວພັນ

ລະຫວ່າງຂ້າພະເຈົ້າກັບສະຫາຍ ເຈືອງ ສົມບູນຂັນ ນັບມື້ນັບຮູ້ຈັກຮັກແພງ ສະໜິດສະໜົມຍິ່ງໆຂຶ້ນ ແລະກາຍເປັນເພື່ອນສະຫາຍ ແລະໝູ່ຄູ່ຮັກແພງ ກັນສະໜິດສະໜົມຕະຫຼອດມາ. ຜ່ານໄລຍະເຄື່ອນໄຫວເຮັດວຽກກັບສະຫາຍ ເຈືອງ ໄດ້ເຮັດໃຫ້ຂ້າພະເຈົ້າ ສາມາດສຶກສາຮຽນຮູ້ ແລະຖອດຖອນບົດຮຽນນຳເພິ່ນໄດ້ຫຼາຍຢ່າງ, ເປັນຕົ້ນແມ່ນບົດຮຽນໃນການຄົ້ນຄວ້າສັງລວມ, ວິທີການຂຽນມະຕິຄຳສັ່ງແຈ້ງການ ແລະບົດຄວາມເຫັນຕ່າງໆ ໃຫ້ການນຳ. ສາມາດເວົ້າໄດ້ວ່າຍ້ອນຄຸນງາມຄວາມດີ, ຄວາມເອົາໃຈໃສ່ຊີ້ແນະ ແນະນຳຂອງເພິ່ນຈຶ່ງໄດ້ເຮັດໃຫ້ຂ້າພະເຈົ້າມີຄວາມເຕີບໃຫຍ່ ແລະສາມາດເປັນເຈົ້າຕົນເອງຄືສູ່ມື້ນີ້.

ນີ້ແມ່ນບົດຮຽນອັນປະເສີດທີ່ຂ້າພະເຈົ້າຈາລຶກໄວ້ຕະຫຼອດຊີວິດຢ່າງບໍ່ມີວັນລືມ.

ສະຫາຍເຈືອງ ສົມບູນຂັນ ເປັນພະນັກງານການນຳຜູ້ໜຶ່ງ ທີ່ໄດ້ຮັບການຫຼໍ່ຫຼອມຈາກປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກຂອງປະຊາຊົນລາວ. ເພິ່ນເປັນຜູ້ນຳຜູ້ໜຶ່ງທີ່ມີຄວາມ ເດັດດ່ຽວໜຽວແໜ້ນ, ມີຄວາມຈົ່ງຮັກພັກດີ, ສັດຊື່ບໍລິສຸດຕໍ່ພັກ ແລະປະເທດຊາດຢ່າງສູງສົ່ງ, ເປັນຜູ້ທີ່ອຸທິດເຫື່ອແຮງ ແລະສະຕິປັນຍາຢ່າງບໍ່ຮູ້ອິດຮູ້ເມື່ອຍ ເພື່ອພາລະກິດປະຕິວັດ ກໍ່ຄືອຸດົມການຂອງພັກ. ເປັນຜູ້ມີຫົວຄິດປະດິດສ້າງ, ມີຄວາມດຸໝັ່ນຂະຫຍັນພຽນໃນການຄົ້ນຄວ້າຮໍ່າຮຽນ ຊອກອັນໃໝ່ໆ ເພື່ອມາໝູນໃຊ້ໃນວຽກງານຕົວຈິງ.

ຂ້າພະເຈົ້າຍັງຈຳໄດ້ຕະຫຼອດໄລຍະຮ່ວມເຮັດວຽກກັບສະຫາຍເຈືອງຢູ່ຫ້ອງວ່າການສູນກາງພັກ ກໍ່ຄືໃນໄລຍະຢູ່ຄະນະເລຂາທິການລັດຖະບານ, ເພິ່ນຍາມໃດກໍ່ມີຄວາມເປັນຫ່ວງເປັນໃຍ ແລະໄດ້ເອົາໃຈໃສ່ແນະນຳຕັກເຕືອນພະນັກງານຢູ່ສະເໝີວ່າ: ພວກເຮົາເປັນຜູ້ຄົ້ນຄວ້າ-ສັງລວມຊ່ວຍ ການນຳຕ້ອງມີຄວາມຮູ້ສູງ, ຕ້ອງເປັນຜູ້ຄົ້ນຄວ້າຢ່າງເລິກເຊິ່ງ,

ເປັນຜູ່ເບິ່ງກວ້າງມອງໄກຈຶ່ງຈະຊ່ວຍການນຳໄດ້. ຢາກເຮັດໄດ້ແນວນັ້ນ ບໍ່ມີວິທີໃດໝົດນອກຈາກການໝັ່ນອ່ານ, ໝັ່ນຂຽນ, ມັນຄົ້ນຄວ້າ ເພື່ອຊອກຫາຄວາມຮູ້ອັນໃໝ່ໃຫ້ຕົນເອງ. ສະຫາຍເຈືອງ ບໍ່ພຽງແຕ່ເປັນຜູ່ແນະນຳຕັກເຕືອນອ້າຍນ້ອງພະນັກງານເຮົາເທົ່ານັ້ນ, ແຕ່ເພິ່ນຍັງເປັນແບບຢ່າງເລີກເຊິ່ງ ມີວິໄສທັດເບິ່ງກວ້າງ ມອງໄກ, ເພິ່ນໄດ້ທຸ້ມເທເຫື່ອແຮງ, ສະຕິປັນຍາ ແລະທຸກສິ່ງທຸກຢ່າງ ເພື່ອອຸທິດໃຫ້ພາລະກິດຂອງຊາດ.

ຜ່ານໄລຍະເຮັດວຽກ ແລະຮ່ວມຊີວິດກັບສະຫາຍເຈືອງ ມາຫຼາຍປີ ໂດຍເລີ່ມແຕ່ໄລຍະຢູ່ ຫ້ອງການສູນກາງພັກ-ສະພາລັດຖະມົນຕີ ແລະຕໍ່ມາປະຈຳການຫ້ອງວ່າການສຳນັກງານນາ ຍົກລັດຖະມົນຕີ-ຄະນະເລຂາທິການລັດຖະບານ, ຂ້າພະເຈົ້າເຫັນວ່າ ເພິ່ນເປັນພະນັກງານການນຳຜູ່ໜຶ່ງ ທີ່ມີລະບຽບແຜນການການເຮັດວຽກຢ່າງເຂັ້ມງວດ, ມີສະຕິຕໍ່ການຈັດຕັ້ງ ມີຄວາມເຄົາລົບຕໍ່ລະບຽບກົດໝາຍ, ມີແບບແຜນດຳລົງຊີວິດທີ່ລຽບງ່າຍ ປະຢັດ ແລະບໍ່ຖືໂຕ ມີທັດສະນະມະຫາຊົນທີ່ກວ້າງຂວາງ ມີຄວາມສະໜິດສະໜົມຮັກແພງກັບພະນັກງານ-ລັດຖະກອນ ແລະເພື່ອສະຫາຍແບບເປັນກັນເອງ ມີຫຼາຍຄົນເຄີຍຕັ້ງຄຳຖາມນຳຂ້າພະເຈົ້າວ່າ: ສະຫາຍເຈືອງເປັນຄົນເຄັ່ງຂຶມ, ເວົ້າແຮງເວົ້າດັງ ແລະມີຫຼາຍຄົນກໍ່ຢ້ານບໍ່ກ້າເຂົ້າພົບ ແລະພົວພັນກັບເພິ່ນ, ແຕ່ເມື່ອຂ້າພະເຈົ້າ ພາເຂົ້າພົບເພິ່ນແລ້ວ, ໝູ່ເພື່ອນຜູ່ນັ້ນຕ່າງກໍມີຄວາມຮູ້ສຶກພາກພູມໃຈ ແລະພໍອົກພໍໃຈຕໍ່ທັດສະນະທ່າທີກິລິຍາມາລະຍາດ ແລະການໂອ້ລົມແບບເປັນກັນເອງທຳມະດາ ແລະຂ້າພະເຈົ້າເຄີຍເວົ້າໃຫ້ ຫຼາຍຄົນເຂົ້າໃຈວ່າ: ເພິ່ນເປັນຄົນໄທໃຕ້ມັກເວົ້າດັງເວົ້າແຮງຊື່ໆ ແຕ່ໃນໃຈເພິ່ນເປັນຄົນງ່າຍດາຍ ມີນ້ຳໃຈເອື້ອເຟື້ອເພື່ອແຜ່ກັບໝູ່ເພື່ອນ, ມີເທື່ອເພິ່ນກໍຮ້າຍໃຫ້ພະນັກງານໃດໜຶ່ງ ທີ່ບໍ່ປະຕິບັດ ຕາມການຊີ້ນຳ ຫຼືມີອັນຜິດພາດ ແຕ່ເພິ່ນຮ້າຍໄປແລ້ວກໍແລ້ວໄປ ບໍ່ເຄີຍມີແນວຄິດອັກຄະຕິຄຽດຊັງອັນໃດຕໍ່ພະນັກງານ. ໃນເວລາພົບປະ

ໂອ້ລົມກັບພະນັກງານ-ລັດຖະກອນພາຍໃນຫ້ອງວ່າການ ເພິ່ນຍາມໃດກໍ ເອົາໃຈໃສ່ຊີ້ແນະຕໍ່ບັນຫາຕ່າງໆຢ່າງລະອຽດຈະແຈ້ງ ແລະໃຫ້ກຳລັງໃຈ ຕໍ່ພະນັກງານ-ລັດຖະກອນຢູ່ສະເໝີ.

ສະຫາຍ ເຈືອງ ສົມບູນຂັນ ໄດ້ຈາກພວກເຮົາໄປຢ່າງບໍ່ມີວັນກັບ ຄືນມາ, ແຕ່ຄຸນງາມຄວາມດີ ແລະຜົນງານຂອງເພິ່ນຍາມໃດ ກໍຍັງຝັງເລິກ ໃນດວງໃຈຂອງພະນັກງານ-ລັດຖະກອນຫ້ອງວ່າການລັດຖະບານ ແລະ ໂດຍສະເພາະຂ້າພະເຈົ້າ ໂດຍບໍ່ມີວັນຫຼົງລືມໄດ້.



# ເຮັດວຽກຫຍັງ ກໍຕ້ອງບຸກທະລຸ

ໂດຍ: ຄຳວິສັນ ແກ້ວສຸວັນ

ຂ້າພະເຈົ້າຍ້າຍມາສັງກັດຢູ່ ຄະນະໂຄສະນາອົບຮົມສູນກາງພັກ (ຄອສພ) ໃນປີ 2011 ຕາມການສະເໜີຂອງທ່ານ ເຈືອງ ສົມບູນຂັນ ເຊິ່ງເຄີຍເວົ້າກັບຂ້າພະເຈົ້າ ເວລາເພິ່ນຢູ່ສຳນັກງານນາຍົກວ່າ: ຫາກເຮົາໄປຢູ່ ຄອສພ ເຈົ້າຕ້ອງໄປຊ່ວຍວຽກເຮົາຢູ່ນັ້ນ. ເວລາຍ້າຍມາຖືກຊັບຊ້ອນຢູ່ກົມໂຄສະນາ ແຕ່ວຽກສຳຄັນແມ່ນຊ່ວຍເພິ່ນໃນການປະສານງານກັບເພື່ອນຫວຽດນາມ ກະກຽມສະເຫຼີມສະຫຼອງປີສາມັກຄີລາວ-ຫວຽດນາມ ຄົບຮອບໃຫຍ່ໃນປີ 2012, ປະສານງານ ແລະຊຽນບົດຕ່າງໆ ໃຫ້ສື່ມວນຊົນອ້ອມຂ້າງສູນກາງ.

ວຽກທີ່ເພິ່ນມອບໝາຍໃຫ້ມີຫຼາຍແທ້ໆ ແຕ່ຍາມໃດເພິ່ນກໍໃຫ້ກຳລັງໃຈ ແລະແນະນຳເລື້ອຍໆວ່າ: ເຮັດວຽກຫຍັງກໍຕ້ອງບຸກທະລຸໃຫ້ມັນສຳເລັດ ດ້ວຍການເອີ້ນຂຶ້ນໄປຖາມ, ເອີ້ນໄປແລກປ່ຽນຊີ້ນຳຕາມຫົວຂໍ້ທີ່ເພິ່ນມອບໝາຍ. ສຸດທ້າຍວຽກດັ່ງກ່າວກໍສຳເລັດລຸລ່ວງໄປດ້ວຍດີ ມີຫຼາຍອັນພົ້ນເດັ່ນ ສະເພາະການຜະລິດປຶ້ມ ກ່ຽວກັບຄວາມສາມັກຄີພິເສດ ລາວ-ຫວຽດນາມ, ຮ່ວມກັນລະຫວ່າງ ຄອສພ ແລະສະມາຄົມນັກປະພັນ ກໍມີຫຼາຍເຫຼັ້ມຄືຫຼາຍທ່ານໄດ້ເຫັນ ບໍ່ເທົ່ານັ້ນວຽກໂຄສະນາເຜີຍແຜ່ ແນວທາງພັດທະນາຊົນນະບົດ (ວຽກ 3 ສ້າງ) ກໍສາມາດຜະລິດປຶ້ມ, ຜະລິດເນື້ອໃນລະຄອນວິທະຍຸ, ສ້າງລາຍການວິທະຍຸ ຄອສພ ຢູ່ສອງສະຖານີ ແລະວຽກ

ອື່ນໆ.

ການທີ່ຍົກຂຶ້ນມາເວົ້ານັ້ນ ມີພຽງສ່ວນນຶ່ງເທົ່ານັ້ນ ມີຫຼາຍວຽກເຮັດສຳເລັດທີ່ບໍ່ໄດ້ຍົກຂຶ້ນມາ ເວົ້າໄດ້ໝົດ ຫາກທ່ານຕິດຕາມຜົນງານຂອງ ຄອສພ ໃນເວລາເພິ່ນມີຊີວິດຢູ່ ຈະເຫັນວ່າ ມີການປ່ຽນແປງຢ່າງບຸກທະລຸຫຼາຍຢ່າງ.

ສະເພາະສ່ວນຕົວແລ້ວຮູ້ຈັກເພິ່ນໃນເວລາເພິ່ນເປັນຜູ້ວ່າການທະນາຄານແຫ່ງ ສປປລາວ (ປີ 1998) ເວລານັ້ນຂ້າພະເຈົ້າເປັນນັກຂ່າວຢູ່ໜັງສືພິມປະຊາຊົນ... ຂຽນປະຈຳຄໍລຳກ່ຽວກັບບັນຫາເສດຖະກິດ ຖືກເພິ່ນຮຽກເຂົ້າພົບ ແລະແນະນຳຂໍ້ມູນຕ່າງໆກ່ຽວກັບການຂີດຂຽນ. ເພິ່ນບອກວ່າ: ເຈົ້າກຳຂໍ້ມູນບໍ່ແໜ້ນ ຂ້ອຍຈະຊ່ວຍສະໜອງຂໍ້ມູນໃຫ້ບົດເຈົ້າແໜ້ນຂຶ້ນ ແລະດີຂຶ້ນ.

ເວລາເພິ່ນຍ້າຍມາຢູ່ໃນຕຳແໜ່ງຮອງ ຄອສພ (ປີ 1999) ແຮ່ງໄປມາຫາສູ່ກັນເພື່ອແລກປ່ຽນບົດຮຽນໃນການຂີດຂຽນ ອັນໄດ້ເຮັດໃຫ້ຂ້າພະເຈົ້າໄດ້ຮັບຄວາມຮູ້ໃໝ່ຫຼາຍອັນຈາກເພິ່ນ ໂດຍສະເພາະແມ່ນຫຼັກມູນພື້ນຖານຂອງທິດສະດີ ມາກ-ເລນິນ ແນວທາງຂອງພັກໂດຍສະເພາະ ແມ່ນແນວທາງໃນຂົງເຂດວຽກງານແນວຄິດ-ການເມືອງອັນໄດ້ເຮັດໃຫ້ບົດຂຽນດີຂຶ້ນ ແລະແໜ້ນຂຶ້ນກວ່າແຕ່ເກົ່າຫຼາຍເທົ່າຕົວ.

ເກືອບ 4 ປີ ທີ່ຮ່ວມງານຢ່າງໃກ້ຊິດກັບເພິ່ນ (2011-2014) ຂ້າພະເຈົ້າເຫັນວ່າ ເພິ່ນທຸ້ມເທໃສ່ວຽກງານຢ່າງໝົດຈິດໝົດໃຈ ແລະບອກສອນວິທີເຮັດວຽກຢ່າງຈິງຈັງ ຍາມໃດເພິ່ນກໍມັກເວົ້າວ່າ: "ທຶນປະຕິວັດເຮົາມີໜ້ອຍ ສະນັ້ນຕ້ອງສ້າງຜົນງານໃຫ້ຫຼາຍ ຈຶ່ງຈະສາມາດພົ້ນຂຶ້ນໄດ້, ວຽກຂີດຂຽນຕ້ອງອ່ານຫຼາຍ ນອນໜ້ອຍ ຕ້ອງມີມານະຈິດ ອົດທົນສູ້ຊົນເປັນຄົນນັ່ງກົ້ນຕິດຕັ່ງ ຈຶ່ງຈະບັນລຸຜົນສຳເລັດ..."

ຢາກເວົ້າເຖິງການແນະນຳຊອກຮູ້ຮ່ຳຮຽນດ້ວຍການອ່ານປຶ້ມ,

24/VII ກອງນວັດຕະກຳ

ການສົນທະນາແລກປ່ຽນ ເປັນສິ່ງທີ່ເພິ່ນຈັດໃຫ້ມີຕະຫຼອດ ແລະມັກເອີ້ນໄປພົບປະຢູ່ສວນເພິ່ນເລື້ອຍໆ ໃນວັນເສົາ ຫຼືວັນອາທິດ ເພິ່ນມັກເວົ້າເລື້ອຍໆວ່າ: ຂ້ອຍຈະພາເຈົ້າຂຽນປຶ້ມອອກຫຼາຍຢ່າງ ເອົາຊື່ຕິດພັນກັບປຶ້ມເພື່ອໃຫ້ລູກຫຼານພາຍລຸນໄດ້ສຶກສາຮໍ່າຮຽນ. ເຖິງຈະບໍ່ມີລາຍຮັບສູງ ແຕ່ຄິດວ່າມີຜົນປະໂຫຍດຕໍ່ສ່ວນລວມ ຕໍ່ສັງຄົມ, ເຈົ້າວ່າແນວໃດ?.

ກ່ອນທີ່ຂ້າພະເຈົ້າຈະຮັບໜ້າທີ່ເປັນຫົວໜ້າບັນນາທິການວາລະສານໂຄສະນາ ເພິ່ນບອກວ່າ "ເວລາເຈົ້າໄປຕ້ອງເຮັດໃຫ້ວາລະສານມີການປ່ຽນແປງໃຫຍ່ໂລດ... ເຮັດໃຫ້ດີກວ່າເກົ່າ ແລະລື່ນເກົ່າຢ່າງຂາດຂັ້ນ... ເຮັດໃຫ້ເປັນທີ່ຍອມຮັບຂອງຜູ້ອ່ານ, ໃຫ້ເປັນປຶ້ມຄູ່ມືດ້ານວິຊາການ ສໍາລັບພະນັກງານໂຄສະນາ ກໍຄືຜູ້ເຮັດວຽກງານການເມືອງແນວຄິດ ແລະສາມາດຂາຍໄດ້...."

ຄໍາແນະນໍາຂອງເພິ່ນ ເຮັດໃຫ້ຂ້າພະເຈົ້າອຸກໃຈ ຈົນນອນບໍ່ຫຼັບ ເພາະຢ້ານບໍ່ຫຼອນໜ້າທີ່ ແຕ່ກໍມີກໍາລັງໃຈ ເພາະເພິ່ນຮັບຊີ້ນໍາເອງ, ຄືດວ່າ ຄົງບໍ່ເຫຼືອບ່າກວ່າແຮງ.

ຢາກເວົ້າເຖິງການຊີ້ນໍາ ເພິ່ນຊີ້ນໍາແຕ່ລະຫົວບົດ ແຕ່ລະບັນຫາບໍ່ເຂົ້າໃຈກໍຖາມໄດ້... ເອົາຂຶ້ນມາຂໍຄໍາເຫັນໄດ້ ຂຽນບໍ່ໄດ້ກໍບອກເພິ່ນຂຽນຊ່ວຍ. ສໍາລັບບົດໃຫຍ່ໆ ເພິ່ນສ້າງໂຄງຮ່າງໃຫ້ ແລ້ວຂຽນຕາມເພິ່ນ... ການຊີ້ນໍາແບບນີ້ສ່ວນຕົວຂ້າພະເຈົ້າເຫັນວ່າ ດີທີ່ສຸດສໍາລັບຜູ້ເປັນພະນັກງານວິຊາການ ເພາະຊ່ວຍໃຫ້ມີຄວາມສາມາດຂຽນເອກະສານ ຂຽນບົດຕ່າງໆ ໄດ້ດ້ວຍຕົນເອງໃນເວລາຕໍ່ມາ

ຢາກເວົ້າເຖິງການກໍ່ສ້າງພະນັກງານ ໂດຍສະເພາະແມ່ນນັກຂຽນ ເພິ່ນເອົາໃຈໃສ່ແທ້ໆ ເພິ່ນບອກວ່າການທີ່ເຮົາເອົາເຈົ້າມານີ້ ຍ້ອນວ່າເຈົ້າເຄີຍເປັນອາຈານສອນກ່ຽວກັບການຂຽນຂ່າວ ຢູ່ກະຊວງເກົ່າເຈົ້າ... ສະນັ້ນເຈົ້າຕ້ອງຝຶກຕ້ອງສິດສອນພະນັກງານຢູ່ ຄອສພ ໃຫ້ຮູ້ຈັກຂຽນ ແລະ

ຂຽນເປັນຄືເຈົ້າ... ຝຶກຫຼາຍວິທີ ໂດຍແບ່ງເປັນຫຼາຍຊຸດສຳລັບພະນັກງານໃໝ່, ພະນັກງານໂຄສະນາຢູ່ສູນກາງ, ພະນັກງານໂຄສະນາຢູ່ທ້ອງຖິ່ນ ຫຼື ໄປແລກປ່ຽນບົດຮຽນກັບເພື່ອນບ້ານຫວຽດນາມ ເຮັດເປັນປົກກະຕິ ແລະ ເຮັດຢ່າງປະຈຳບໍ່ຂັ້ນບໍ່ມີຜູ້ສືບທອດ.

ຢາກເວົ້າເຖິງແບບແຜນດຳລົງຊີວິດຂອງເພິ່ນແມ່ນລຽບງ່າຍ, ປະຢັດມັດທະຍັດ ການເຮັດວຽກແມ່ນເນັ້ນເຖິງຄຸນນະພາບເປັນຫຼັກ, ສະດຸ້ງໄວຕໍ່ບັນຫາຕ່າງໆ ໃນເວລາບັນຊາວຽກ, ມີຄວາມຮັບຜິດຊອບສູງຕໍ່ໜ້າວຽກທີ່ເພິ່ນໄດ້ຕົກລົງໃນໝູ່ຄະນະ ແລະນັບຖືການເຮັດວຽກເປັນໝູ່ຄະນະຢ່າງເຂັ້ມງວດ.

ມີຫຼາຍສິ່ງຫຼາຍຢ່າງທີ່ຢາກເວົ້າທີ່ຢາກຂຽນກ່ຽວກັບເພິ່ນ ແຕ່ວ່າຍາມນີ້ ຄຶດບໍ່ອອກບອກບໍ່ຖືກ ເພາະໃນຈິດສຳນຶກຍັງຄຶດວ່າເພິ່ນໄປເຮັດວຽກຢູ່ຕ່າງແຂວງ... ໄປເຄື່ອນໄຫວຢູ່ຕ່າງປະເທດ ບໍ່ຄຶດວ່າເພິ່ນຈາກໄປຢ່າງບໍ່ມີວັນຫວນກັບມາອີກ.

ເພິ່ນຈາກໄປໄວໂພດ ເປັນເລື່ອງທີ່ບໍ່ນຶກບໍ່ຝັນ ສະນັ້ນຈຶ່ງຍັງມີຫຼາຍວຽກທີ່ຍັງຄ້າງຄາ ຕາມຄວາມຄຶດທີ່ເພິ່ນ ຢາກເຮັດວຽກກ່ຽວກັບການຂຽນຜະລິດປຶ້ມຕ່າງໆອອກສູ່ສັງຄົມ ໂດຍໃຫ້ມີສ່ວນຮ່ວມຂອງຫຼາຍຄົນໃນວົງການຂີດຂຽນ ໂດຍສະເພາະແມ່ນ ໃນສະມາຄົມນັກປະພັນລາວ.

ເພິ່ນເປັນເພື່ອນ, ເປັນອາຈານ, ເປັນຜູ້ນຳ ທີ່ຂ້າພະເຈົ້າເຄົາລົບນັບຖື ໃນວົງການຂີດຂຽນ ດັ່ງເຊັ່ນ: ທ່ານ ບົວບານ ວໍລະຂຸນ.

ເພິ່ນຈາກໄປແລ້ວ... ຈາກໄປຢ່າງບໍ່ມີວັນຫວນກັບມາອີກ... ແຕ່ຄຸນງາມຄວາມດີຂອງເພິ່ນ ຄຳສັ່ງສອນຊີ້ແນະໃນການຂີດຂຽນ ໂດຍສະເພາະແມ່ນ ທັດສະນະຫຼັກໝັ້ນທີ່ເດັດດ່ຽວ ເພື່ອຜົນປະໂຫຍດສ່ວນລວມ, ເຮັດຕາມແນວທາງຂອງພັກວາງອອກຢ່າງເຂັ້ມງວດຈະຍັງຄົງເປັນ ແນວທາງໃນການຂີດຂຽນຂອງຂ້າພະເຈົ້າຕະຫຼອດຊົ່ວຊີວິດ.

# ທ່ານເຈືອງ ສິມບູນຂັນ ໃນຄວາມຊົງຈຳຂອງຂ້ອຍ

ໂດຍ: ຄຳກອງ ທຳມະເທວາ

ທຸກໆສັບພະສິ່ງ ທີ່ມີຊີວິດໃນໂລກນີ້ ບໍ່ມີສິ່ງໃດຈະຍືນຍົງຄົງກະພັນ ແລະຢູ່ຢ່າງອຳມະຕະຕະຫຼອດການ, ໃຫ້ເຂົ້າໃຈວ່າ ມີການເກີດກໍຕ້ອງມີສະຫຼາຍ ມີກາງເວັນກໍຍັງມີກາງຄືນເປັນຂອງຄູ່ກັນ ແຕ່ສິ່ງທີ່ບໍ່ແຕກສະຫຼາຍໄປໄດ້ມີພຽງຢ່າງດຽວເທົ່ານັ້ນຄື "ຄຸນງາມຄວາມດີ"

ທ່ານເຈືອງ ສິມບູນຂັນ ໃນຄວາມຮູ້ສຶກຂອງຂ້ອຍ ເພິ່ນແມ່ນພະນັກງານນຳພາຜູ້ໜຶ່ງ ທີ່ມີຄວາມຮູ້ຄວາມສາມາດ ແມ່ນຜູ້ທີ່ດຳລົງຊີວິດແບບລຽບງ່າຍ ແມ່ນນັກຮົບແນວຄິດທິດສະດີລ້ຳ ເລີດໃນວຽກງານການເມືອງ-ແນວຄິດ ແມ່ນນັກຄົ້ນຄວ້າທິດສະດີ-ສັງລວມພຶດຕິກຳ ທີ່ດີເດັ່ນຂອງພັກ ແມ່ນຜູ້ທີ່ບໍ່ຍອມປ່ອຍໃຫ້ເວລາ ປາຍປາກກາ ແລະໜ້າເຈ້ຍຢູ່ຫວ່າງເປົ່າ ເວລາໃດກໍຄົ້ນຄວ້າ ຂີດຂຽນໂດຍມີຄວາມຫວັງຢູ່ຂ້າງໜ້ານັ້ນຄື "ເພື່ອໃຫ້ແນວທາງ ຂອງພັກໄດ້ຖືກນຳໄປຈັດຕັ້ງປະຕິບັດຢ່າງເກີດຜົນ, ເຮັດໃຫ້ແນວຄິດຂອງປວງຊົນໄດ້ຖືກບຸກທະລຸ ເພື່ອພ້ອມກັນກ້າວຂຶ້ນ ຫຼຸດພົ້ນ ອອກຈາກຄວາມທຸກຍາກ".

ທ່ານ ເຈືອງ ສິມບູນຂັນ ແມ່ນຜູ້ທີ່ມີວາດຊົງສະຫງ່າຜ່າເຜີຍ, ເປັນຜູ້ທີ່ເວົ້າແທ້ເຮັດຈິງ ແລະເຮັດວຽກຢ່າງບໍ່ຮູ້ອິດຮູ້ເມື່ອຍ ນອກຈາກເຮັດວຽກໃນຫ້ອງການແລ້ວ ໃນວັນພັກລັດຖະການ (ວັນເສົາ-ວັນທິດ) ຈະເຫັນເພິ່ນ

ນັ່ງຂຽນເອກະສານຢູ່ກ້ອງຮົ່ມໄມ້ຢູ່ສວນຂອງເພິ່ນ (ບ້ານດ່ານຊ້າງ) ຢ່າງບໍ່ໄດ້ມີເວລາພັກຜ່ອນ ເບິ່ງແລ້ວເປັນພາບທີ່ໜ້າປະທັບໃຈຂ້ອຍທີ່ສຸດ.

ຂ້ອຍເອງຖືວ່າ ແມ່ນຜູ້ໜຶ່ງທີ່ໂຊກດີທີ່ສຸດ ທີ່ໄດ້ຮັບໃຊ້ເພິ່ນ (ໃນເວລາທີ່ເພິ່ນມີຊີວິດຢູ່) ໃນທຸກໆວັນເສົາແລະວັນອາທິດ ເພິ່ນມັກອອກມາສວນເພື່ອພັກຜ່ອນ ຖ້າເພິ່ນຫາກເຫັນຂ້ອຍ ເພິ່ນຈະບີບແກລົດ ແລະຫັນແວ່ນລົດລົງ (ເພິ່ນຂັບເອງ) ແລ້ວທັກທາຍຂ້ອຍວ່າ ເປັນແນວໃດທ່ານນາຍພົນ ຫຼືເປັນແນວໃດ ດຣ ແລະອາຈານໃຫຍ່ ? ມື້ນີ້ພວກເຮົາກິນເຂົ້າຊຸມກັນນໍ... ຂ້ອຍໄດ້ປານນ້ຳຂອງມາ ...

ແລ້ວຂ້ອຍກໍໄປເປັນພໍ່ຄົວໃຫ້ເພິ່ນເກືອບເວົ້າໄດ້ວ່າ “ເປັນພໍ່ຄົວປະຈຳກໍວ່າໄດ້” ການແຕ່ງມີບາງຄັ້ງກໍແຊບ ແລະບາງຄັ້ງກໍບໍ່ແຊບປານໃດ ແຕ່ເພິ່ນກໍມັກເວົ້າອ້ອຍໃຈຂ້ອຍວ່າ: “ເຮັດກິນແຊບອີ່ຫລີ, ຄັກເຫວີຍ”.

ມີບາງຄັ້ງ ແມ່ນພາກັນໄປຕະຫຼາດ ເພິ່ນເປັນຜູ້ຂັບລົດ ເພິ່ນມັກຈະເວົ້າຢອກວ່າ: “ພວກເຈົ້າໂຊກດີມີຂ້ອຍຂັບລົດໃຫ້ຂີ່ (ຂ້ອຍໃນທີ່ນີ້ໝາຍເຖິງທ່ານ ເຈືອງ ສົມບູນຂັນ).

ໃນເວລາກິນເຂົ້າເພິ່ນມັກເວົ້າຢອກຂ້ອຍສາລະພັດ ແລ້ວກໍຫົວຂວັນກັນຢ່າງເບີກບານມ່ວນຊື່ນ, ໃນນັ້ນ ມີມື້ໜຶ່ງເພິ່ນສອນຂ້ອຍວ່າ “ໃຫ້ຕັ້ງໃຈເຮັດວຽກເຮັດງານ ເຮັດວຽກດ້ວຍຄວາມຮັບຜິດຊອບ ພະຍາຍາມຊອກຂໍ້ມູນໃໝ່ໆ ເພື່ອເຮັດໃຫ້ຄົນສົນໃຈໃນເວລາເວົ້າ, ເວລາຂຽນເອກະສານ ຕ້ອງຄຳນຶງເຖິງຜູ້ຈະຮຽນ... ພວກເຮົາເປັນລູກຊາວໄຮ່ຊາວນາ ຕ້ອງບຸກບືນເຮັດວຽກເຮັດງານແທ້ໆ.

ມາຮອດເວລານີ້ ພາບການເຄື່ອນໄຫວ ແລະທຸກໆຄຳເວົ້າຂອງເພິ່ນນັ້ນຍັງດັງກ້ອງ, ເປັນຄະຕິເຕືອນໃຈ ແລະຢູ່ໃນຄວາມຊົງຈຳຂອງຂ້ອຍຢ່າງບໍ່ມີວັນລືມໄດ້.

ເຖິງວ່າການລໍຄອຍຂອງຂ້ອຍໃນວັນເສົາ, ວັນອາທິດທີ່ຈະໄດ້ຮັບ

ໃຊ້ເພິ່ນນັ້ນ ເຕັມໄປດ້ວຍຄວາມຫວ່າງເປົ່າ, ອ້າງວ້າງດຽວດາຍກໍຕາມ ແຕ່ພາບການເຄື່ອນໄຫວຕ່າງໆທີ່ເຄີຍເຫັນໃນອະດີດນັ້ນ ຍັງຄົງສະຖິດໃນສະໝອງຂອງຂ້ອຍ ແລະຂ້ອຍຖືວ່າ: "ເພິ່ນຄືອາຈານຜູ້ຍິ່ງໃຫຍ່"

ເຖິງແມ່ນວ່າ ເພິ່ນຈາກໄປຢ່າງບໍ່ມີວັນກັບຄືນມາ ແຕ່ໃນສ່ວນເລິກຂອງຫົວໃຈຂອງຂ້ອຍ ພຽງແຕ່ຄິດວ່າ "ເພິ່ນໄປເຮັດວຽກຢູ່ຕ່າງແຂວງ ຫຼືຢູ່ຕ່າງປະເທດເທົ່ານັ້ນ".



# ຄວາມຮູ້ສຶກ ໂສກເສົ້າ ເສຍດາຍຕໍ່ ສະຫາຍ ເຈືອງ ສົມບູນຂັນ

ໂດຍ: ດຣ.ຄຳຝັ່ນ ຄຸນບໍລິບ

ວຽງຈັນ ວັນທີ 12-6-2014

ສະຫາຍເຈືອງ ສົມບູນຂັນ ແມ່ນພະນັກງານການນຳຂັ້ນສູງຂອງພັກ-ລັດ, ສະຫາຍເປັນບຸກຄົນທີ່ໄດ້ຮັບການສຶກສາອົບຮົມເປັນລະບົບຈາກພາຍໃນແລະຕ່າງປະເທດ, ມີລະດັບຄວາມຮັບຮູ້ດ້ານເສດຖະກິດສັງຄົມທີ່ແນ່ນອນ, ມີຄວາມຮັບຮູ້, ສະດຸ້ງໄວຕໍ່ສະພາບການໃໝ່ໆເກີດຂຶ້ນຢູ່ໃນ ໂລກກໍຄືພາຍໃນປະເທດ.

ສະຫາຍມີຄວາມປະສົງຕັ້ງໃຈພັດທະນາຕົນເອງຈາກການເປັນນັກວິຊາການຮັບໃຊ້ການນຳຂັ້ນສູງ ຂອງພັກ-ລັດດ້ວຍຄວາມເສຍສະລະຜົນປະໂຫຍດຕົນເອງເພື່ອປະເທດໃຫ້ຈະເລີນຮຸ່ງເຮືອງ ແລະໃນທີ່ສຸດສະຫາຍກໍ່ໄດ້ກາຍເປັນພະນັກງານດີເດັ່ນຄົນໜຶ່ງ ຍ້ອນແນວນັ້ນສະຫາຍຈຶ່ງກາຍເປັນພະນັກງານວິຊາການ ແລະຜູ້ນຳທີ່ໄວ້ເນື້ອເຊື່ອໃຈຈາກການຈັດຕັ້ງພັກ-ລັດ ທີ່ສຳຄັນ.

ຜ່ານໄລຍະເຄື່ອນໄຫວວຽກງານໃນໜ່ວຍງານວິຊາການຮັບໃຊ້ການນຳ ຂ້າພະເຈົ້າຜູ້ຮ່ວມງານຮູ້ສຶກ ແລະເຫັນໄດ້ຄຸນທາດຂອງສະຫາຍເຈືອງ ສົມບູນຂັນ ເປັນບຸກຄົນທີ່ມີຫຼັກໝັ້ນປະຕິວັດທີ່ໜັກແໜ້ນ ມີຄວາມຊື່ສັດບໍລິສຸດ ມີຄວາມຈິງໃຈ ເວົ້າຊື່ກົງ ມີຄວາມກະຕືລືລົ້ນ ຮັບຜິດຊອບວຽກງານສູງ ມີລະດັບການຄົ້ນຄວ້າ ຂີດຂຽນເອກະສານຕ່າງໆທີ່ມີເນື້ອໃນສຳຄັນເຊັ່ນ: ປະກອບສ່ວນຄົ້ນຄວ້າ ສະເໜີແນວທາງການປັບປຸງແປງໃໝ່

ຂອງພັກ ຍຸດທະສາດການພັດທະນາປະເທດໃຫ້ຫຼຸດພົ້ນອອກຈາກການດ້ອຍພັດທະນາ, ນະໂຍບາຍພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະນະໂຍບາຍອື່ນໆ ທັງໝົດທັດສະນະ ແນວຄວາມຄິດຂອງສະຫາຍເຈືອງ ສົມບູນຂັນ ໄດ້ມີຄຸນປະໂຫຍດອັນລ້ຳຄ່າຕໍ່ການສ້າງສາພັດທະນາປະເທດລາວໃນສະເພາະໜ້າ ແລະຍາວນານ.

ການເສຍຊີວິດຂອງສະຫາຍເຈືອງ ສົມບູນຂັນໃນຄັ້ງນີ້ ເປັນການສູນເສຍອັນໃຫຍ່ຫຼວງຂອງພັກ-ລັດ ກໍຄືປະຊາຊົນບັນດາເຜົ່າ, ຂ້າພະເຈົ້າຮູ້ສຶກໂສກເສົ້າເສຍດາຍ ເກີນທີ່ຈະຫາສິ່ງໃດມາປຽບທຽບໄດ້ ຂໍໃຫ້ດວງວິນຍານຂອງສະຫາຍເຈືອງ ສົມບູນຂັນ ຈົ່ງໄປສູ່ສຸຄະຕິເທີ້ນ.

ດ້ວຍຄວາມໂສກເສົ້າເສຍດາຍຢ່າງສຸດຊຶ້ງ

# ຜູ້ບັນຊາທີ່ເຂັ້ມງວດ

ໂດຍ: ອິນທະນູ ນວນທະສິງ

ທ່ານ ເຈືອງ ສົມບູນຂັນ ເພິ່ນແມ່ນຫົວໜ້າຜູ້ສຳຄັນ ເພິ່ນແມ່ນນັກວິທະຍາສາດ, ນັກຈິນຕະນາການສູງ-ສະດຸ້ງໄວ ເພິ່ນສາມາດສະທ້ອນໃຫ້ເຫັນຫຼາຍສິ່ງຍິ່ງໃຫຍ່ ໃນການຄົງຕົວ ແລະຂະຫຍາຍຕົວ ແຫ່ງການເຄື່ອນໄຫວ - ພັດທະນາການຈັດຕັ້ງ ຂອງຄະນະໂຄສະນາອົບຮົມສູນກາງພັກເຊັ່ນ: ເພິ່ນຮັກສາທີ່ຕັ້ງແຫ່ງການນຳພາ-ຄຸ້ມຄອງ ໃນ ຄອສພ ເຮັດພາລະບົດບາດແຫ່ງການນຳພາ-ຄຸ້ມຄອງ... ສ້າງແຜນການ-ໂຄງການ; ຈັດຕັ້ງປະຕິບັດ ແລະກວດກາ-ຮູ້ທັນເປັນອັນລະອຽດໃນພາລະບົດບາດດັ່ງກ່າວ...

ເພິ່ນເປັນຜູ້ບັນຊາການທີ່ໂດດເດັ່ນ ແລະເຂັ້ມງວດຕໍ່ໜ້າທີ່ຄື: ອອກຄຳສັ່ງຕົກລົງຕັດສິນວຽກຍຸດທະສາດ-ອອກບັນດາຂໍ້ຕົກລົງຕ່າງໆ ມີຜົນສຳເລັດດີ-ມີປະສິດທິຜົນສູງ; ນຳພາຊຸກຍູ້, ປຸກລະດົມກວດກາ, ຕິດຕາມບັນດາພະນັກງານທີ່ມີຄວາມກະຕືລືລົ້ນ ເຮັດສຳເລັດໜ້າທີ່ທີ່ມອບໝາຍ... ເພິ່ນເປັນຫົວໜ້າທີ່ຮັກສາໄດ້ຄວາມຮັບຜິດຊອບອັນສຳຄັນ ໃນຂອດຈັດຕັ້ງຜັນຂະຫຍາຍ ໃນທຸກໆການເຄື່ອນໄຫວຂອງວຽກງານ; ຂອງການຈັດຕັ້ງທີ່ມີຄວາມໝາຍຕັດສິນຊີ້ຂາດ ຄວາມຄືບໜ້າຂອງແຜນ ຕະຫຼອດທັງຄຸນນະພາບ ແລະຜົນໄດ້ຮັບທົ່ວການຈັດຕັ້ງເຄື່ອນໄຫວ ບໍ່ວ່າວຽກງານການເມືອງ-ແນວຄິດໂຄສະນາເຜີຍແຜ່ແນວທາງແຜນນະໂຍບາຍ ຂອງພັກ-

ລັດ, ວຽກງານວິທະຍາສາດສັງຄົມ-ໂດດເດັ່ນທີ່ສຸດ ກໍແມ່ນວຽກງານ 3 ສ້າງ ບຸກທະລຸໄປທຸກຈອກແຈ ຂອງປະຊາຊົນທົ່ວປະເທດ.

ເພິ່ນມີຄວາມສາມາດລວບລວມ; ຊຸກຍູ້; ປຸກລະດົມພະນັກງານໃຫ້ມີຄວາມພະຍາຍາມ; ທ້າວທັນປະກອບສ່ວນທຸກກໍາລັງແຮງ; ສະຕິປັນຍາ; ຄວາມສາມາດ ເພື່ອບັນລຸຜົນສໍາເລັດຕາມເປົ້າໝາຍລວມ ຂອງການຈັດຕັ້ງ.

ເພິ່ນເປັນຫົວໜ້າບໍ່ພຽງແຕ່ ເປັນຜູ້ອອກຄໍາສັ່ງ-ອອກບັນດາ ຂໍ້ກໍານົດ ໃຫ້ພະນັກງານໃນການຈັດຕັ້ງປະຕິບັດ... ແຕ່ເພິ່ນເປັນຫົວໜ້າທີ່ມີຄວາມສາມາດ ຮູ້ເຮັດວຽກນໍາທຸກໆຄົນ... (ຕໍ່ຂ້າພະເຈົ້າແລ້ວ ເພິ່ນບອກວ່າ: ວຽກນີ້ມີຄວາມຮູ້ຂຶ້ນຕື່ມ... ສາມາດເປັນຜູ້ຊ່ຽວຊານໄດ້... ແຕ່ຢ່າບັງຄັບຕົນເອງ... ເມື່ອຍຕ້ອງພັກຜ່ອນ ເຮັດຢູ່ເຮືອນກໍໄດ້... ໃຜຈະເວົ້າຫຍັງກໍຊ່າງເຂົາ!) ຂ້າພະເຈົ້າຮູ້ສຶກພາກພູມໃຈຫຼາຍ... ໃນໃຈພຶມພໍາວ່າ: ໂອ້ຂອບໃຈສະຫວັນທີ່ ໃຫ້ຂ້າພະເຈົ້າໄດ້ມີຫົວໜ້າທີ່ແສນດີ ເພິ່ນຄືຢາ ທີ່ປົວຂ້າພະເຈົ້າ ໃຫ້ເຂັ້ມແຂງຂຶ້ນ...

ເພິ່ນເປັນເພື່ອນທີ່ດີ-ຈິງໃຈ-ເປັນບ່ອນອີງທີ່ໜັກແໜ້ນ ເປັນບ່ອນຝາກຄວາມຫວັງທີ່ໜ້າເຊື່ອຖື... ຂອງພະນັກງານທຸກໆຄົນ ເພາະຍາມໃດເພິ່ນກໍເປັນຫ່ວງເປັນໃຍຕໍ່ຜົນປະໂຫຍດຂອງເຂົາເຈົ້າ...

ທ່ານ ຫົວໜ້າເຈືອງ ສົມບູນຂັນ ເປັນຄົນເວົ້າໜ້ອຍເຮັດຫຼາຍ. "ເວົ້າໄປພ້ອມການກະທໍາ" ເວົ້າໃຫ້ຜູ້ອື່ນຕື່ນນອນ ບໍ່ເວົ້າລໍາຄານໃຫ້ຜູ້ອື່ນງຶດງິດ ເຫງົານອນ ເວົ້າໃຫ້ເຫັນຈຸດດີ ເພື່ອສົ່ງເສີມ ແລະຕໍານິຈຸດອ່ອນ, ບົກພ່ອງ, ໂດຍກົງ ແລະຊີ້ວິທີປັບປຸງແປງໄປພ້ອມໆ ບໍ່ແກ່ຍືດແກ່ຍາວ ມອບໝາຍວຽກອຸດົມສົມບູນດ້ວຍເນື້ອໃນວິທີແນະນໍາເຕັມໄປດ້ວຍການເມືອງ-ແນວຄິດມີບັນຍາກາດທີ່ເປັນກັນເອງທີ່ສຸດ...

ເວົ້າລວມແລ້ວ ເພິ່ນບໍ່ແມ່ນເປັນຄົນເກັ່ງພຽງຄົນດຽວ ແຕ່ເພິ່ນຍັງ

ເຮັດໃຫ້ພະນັກງານແຕ່ລະຄົນກໍເກັ່ງ ແລະຮັບປະກັນໃນການຈັດຕັ້ງພ້ອມໆ ກັນ; ໃຫ້ມີໂອກາດກ້າວໄປເຖິງຜົນສໍາເລັດຢ່າງສະຫງ່າງາມ "ທ່ານສົມ ແລ້ວທີ່ເປັນແວ່ນແຍງທີ່ແຈ້ງໃສ ທີ່ຍາມໃດກໍສະທ້ອນແສງ ໃຫ້ພວກເຮົາ ເດີນຕາມ..."

ໂອ. ທ່ານ ເຈືອງ ທ່ານຈາກໄປບໍ່ມີວັນຫວນຄືນ ປະເທດຊາດກໍ ສູນເສຍນັກບຸກເບີກທີ່ເຂັ້ມແຂງ ພວກເຮົາກໍເໝືອນຕົ້ນກ້ວຍທີ່ຂາດໄມ້ຄໍ້າ ທີ່ແຂງແກ່ນ...ດ້ວຍຄວາມຄິດເຖິງ...



ພິທີມອບຮາງວັນໃຫ້ແກ່ນັກປະພັນ ໃນບັ້ນກວດສອບບົດເພື່ອການພັດທະນາ

# ທ່ານເຈືອງ ສົມບູນຂັນ ຜູ້ນຳທີ່ຫ່ວງໃຍ ໃກ້ຊິດນັກປະພັນລາວ

ໂດຍ ຜົວລາວັນ ຫຼວງວັນນາ

ມື້ໜຶ່ງຂອງເດືອນ 2 ປີ 2012 ຂ້າພະເຈົ້າໄດ້ຮັບບັດເຊີນ ທີ່ລົງນາມທ່ານ ເຈືອງ ສົມບູນຂັນ ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ. ຜູ້ທີ່ຖືກເຊີນຂຽນໄວ້ໃນບັດ ມີຂ້າພະເຈົ້າໃນນາມ ຜູ້ຮັກສາການປະທານສະມາຄົມນັກປະພັນລາວ, ທ່ານ ປີ່ນ ປາຖະໜາ ໃນນາມຫົວໜ້າກົມສື່ມວນຊົນກະຊວງຖະແຫຼງຂ່າວ ວັດທະນະທຳ ແລະທ່ອງທ່ຽວ ແລະທ່ານ ສົມສະນຸກ ມີໄຊ ໃນນາມຮອງປະທານ ສະມາຄົມນັກຂ່າວລາວ, ຈຸດປະສົງການເຊີນແມ່ນເພື່ອປຶກສາຫາລື ແລກປ່ຽນຄຳເຫັນກ່ຽວກັບວຽກງານໂຄສະນາອົບຮົມ. ຂ້າພະເຈົ້າຮູ້ສຶກແປກໃຈ ທັງດີໃຈ ເມື່ອໄດ້ຮັບການຮັບຮູ້ ແລະໄດ້ຮັບກຽດດັ່ງກ່າວໃນນາມສະມາຄົມນັກປະພັນ.

ທ່ານເຈືອງ ສົມບູນຂັນ ຕ້ອນຮັບ 3 ຄົນພວກຂ້າພະເຈົ້າແບບອົບອຸ່ນ ແລະເປັນກັນເອງ ເປັນຄັ້ງທຳອິດທີ່ຂ້າພະເຈົ້າໄດ້ຍິນຄຳເວົ້າ, ໄດ້ເຫັນໜ້າທ່ານເຈືອງໃກ້ໆ. ເພິ່ນເວົ້າຊ້າ ຈະແຈ້ງ, ມີຄວາມໝາຍເນັ້ນໜັກທຸກໆຄຳສັບ, ບໍ່ມີຄຳເຫຼືອ ແລະເວົ້າດ້ວຍທ່າທີຈິງຈັງ, ເວົ້າແທ້ ແລະເຮັດແທ້. ແຕ່ກໍເວົ້າຖ່ອມໂຕໃນສິ່ງທີ່ເພິ່ນບໍ່ຮູ້ຈັກດີ. ມື້ນັ້ນເພິ່ນເວົ້າເຖິງຖານະບົດບາດຄວາມສຳຄັນຂອງວັນນະຄະດີ ແລະນັກປະພັນ ເຖິງວ່າຈະໄດ້ຮັບໜ້າທີ່ໂຄສະນາອົບຮົມ ກໍໄດ້ເອີ້ນນັກປະພັນອາວຸໂສຄື ທ່ານທອງຄຳອ່ອນມະນີສອນ, ທ່ານດາລາ ກັນລະຍາ ມາພົບປະແລກປ່ຽນຄຳເຫັນ

ກ່ອນແລ້ວ, ການພົບປະຄັ້ງນີ້ເພິ່ນກໍຕັ້ງຄຳຖາມ ໃຫ້ 3 ຄົນພວກເຮົາຕອບ "ໃນຖານະຜູ້ເຮັດວຽກງານໂຄສະນາສຶກສາອົບຮົມມວນຊົນຄືກັນ ພວກສະຫາຍເຫັນວ່າວຽກງານໂຄສະນາອົບຮົມທີ່ຜ່ານມາ ເຮັດໄດ້ດີແນວໃດ ແລະຍັງບໍ່ທັນໄດ້ດີແນວໃດ ແລະຕໍ່ໄປຄວນເຮັດແນວໃດໃຫ້ວຽກງານນີ້ໄດ້ຮັບຜົນດີ?".

ທ່ານເຈືອງ ສົມບູນຂັນ ຈົດເອົາຄຳຕອບ ແລະຄຳເຫັນຂອງແຕ່ລະຄົນ ທັງຖາມເຈາະຈີ້ມໄປນຳ ແລະກໍຍັງຕັກເຕືອນພວກເຮົາແລະໃຫ້ມີຄຳໝັ້ນສັນຍາ ຈະຊຸກຍູ້ສົ່ງເສີມວຽກງານສື່ມວນຊົນ ແລະການປະພັນໃຫ້ດີກວ່າເກົ່າ. ເວລາຕໍ່ໆມາຂ້າພະເຈົ້າໄດ້ຍິນທ່ານເຈືອງເວົ້າວ່າ ທ່ານໄດ້ເຊີນຫຼາຍໆຄົນທີ່ມີບົດຮຽນ, ປະສົບການກ່ຽວກັບການເຮັດວຽກໂຄສະນາອົບຮົມ ແລະເພິ່ນໄດ້ປັບປຸງການເຮັດວຽກ ແລະການຈັດຕັ້ງໂຄສະນາອົບຮົມແຕ່ລະຂັ້ນ ໄປຕາມຄຳຄິດເຫັນຂອງຄົນເຫຼົ່ານັ້ນ.

ປະມານ ໜຶ່ງເດືອນຫຼັງຈາກພົບປະທ່ານເຈືອງ ເປັນຄັ້ງທຳອິດເພິ່ນກໍເອີ້ນຂ້າພະເຈົ້າໄປສະເໜີໃຫ້ເພິ່ນຮູ້ ກ່ຽວກັບສະພາບນັກປະພັນລາວ ເພາະເພິ່ນຢາກໃຫ້ນັກປະພັນຊ່ວຍໂຄສະນາບາງວຽກງານ. ເພິ່ນຢາກພົບປະນັກປະພັນຫຼາຍໆຄົນຈັກຄັ້ງໜຶ່ງ ເພິ່ນຈະໄດ້ລະດົມໃຫ້ຂະເຈົ້າຂຽນ ຫຼືຈັດຕັ້ງການກວດສອບຂຽນເລື່ອງ ແລະກາບກອນ ໂຄສະນາໃຫ້ປະຊາຊົນໃນເຂດຊົນນະບົດ ໃຫ້ຮູ້ພັດທະນາຕົວ ແລະແກ້ໄຂຄວາມທຸກຍາກ. ວັນທີ 4-12-2011, ນັກປະພັນ 80 ກວ່າຄົນໄດ້ມາເຕົ້າໂຮມກັນທ່ານເຈືອງ ສົມບຸນຂັນຟັງບົດລາຍງານສະພາບການເຄື່ອນໄຫວຂອງສະມາຄົມນັກປະພັນລາວໄລຍະ 2 ປີ ແລະບາງວຽກງານທີ່ຈະດຳເນີນໃນຕໍ່ໜ້າພ້ອມດ້ວຍຂໍ້ສະເໜີຂອງນັກປະພັນລາວ 9 ຂໍ້ ແລະໃຊ້ເວລາສ່ວນຫຼາຍໃນການປະຊຸມຟັງຄຳຄຶດເຫັນຂອງນັກປະພັນອາວຸໂສ, ນັກປະພັນໜຸ່ມສິບປາຍທ່ານ ຊຶ່ງຄວາມເຫັນສ່ວນຫຼາຍແມ່ນກ່ຽວກັບສະພາບວັນນະຄະດີ

ແລະນັກປະພັນ ທີ່ຜ່ານມາມີຫຼາຍຢ່າງຄວນໄດ້ເອົາໃຈໃສ່ ພັດທະນາສິ່ງເສີມໃຫ້ສົມຄວນ. ທ່ານເຈືອງຮັບຄຳເຫັນເຫຼົ່ານັ້ນແລະໃຫ້ຄຳເຫັນ ໝາຍຄວາມວ່າຈະນຳໄປສະເໜີຂັ້ນເທິງ ແລະພິຈາລະນາຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ, ຕໍ່ມາໄດ້ປະຕິບັດຄຳໝັ້ນໝາຍນັ້ນຢ່າງຈິງຈັງ ອັນເຮັດໃຫ້ນັກປະພັນທັງຫຼາຍຕ່າງກໍຊື່ນຊົມ ແລະມີຄວາມນັບຖື ເຊື່ອໝັ້ນເພິ່ນນັບມື້ຫຼາຍຂຶ້ນ ມື້ນີ້ທ່ານເຈືອງໄດ້ໂອ້ລົມນັກປະພັນ ແຕ່ເພິ່ນເວົ້າຕາມບົດທີ່ເພິ່ນກຽມເອງ ພຽງສາມໜ້າປາຍ ສ່ວນບົດທີ່ເພິ່ນບອກຂ້າພະເຈົ້າຂຽນໃຫ້ຕາມຈິດໃຈທີ່ຢາກໃຫ້ເພິ່ນເວົ້າກັບນັກປະພັນນັ້ນ ເພິ່ນບໍ່ເອົາ, ທັງໆທີ່ເພິ່ນເວົ້າກັບຂ້າພະເຈົ້າວ່າ "ເຮົາກະເອົາຕາມຈິດໃຈທີ່ເຈົ້າກຽມໃຫ້ ແຕ່ເຮົາປ່ຽນເວົ້າແບບເຮົາ" ຄວາມຈິງທ່ານເຈືອງຂຽນຄືເວົ້າ ເວົ້າຄືຂຽນ ເຂົ້າໃຈງ່າຍ ແລະເປັນເອົາໝົດທຸກຄວາມ ເພິ່ນເວົ້າເຖິງບົດບາດຄວາມສຳຄັນຂອງວັນນະຄະດີ ແລະນັກປະພັນ ດ້ວຍການຍົກໃຫ້ເຫັນຕົວຈິງ ໃນສະໄໝຕໍ່ສູ້ກູ້ຊາດ ປະເທດເຮົາໄດ້ຮັບໄຊຊະນະຍ້ອນຫຼາຍປັດໃຈ ໜຶ່ງໃນນັ້ນແມ່ນການໂຄສະນາດ້ານບົດວັນນະຄະດີ ສິລະປະ ຮ້ອງລຳບົດເພງ ປຸກລະດົມມວນຊົນຕື່ນຕົວຕໍ່ສູ້ ໂຄສະນາສັດຕູຫັນມາຮ່ວມການປະຕິວັດ, ພວກເຮົາເຮັດວຽກງານນີ້ໄດ້ດີລື່ນສັດຕູ, ຖ້າອີງໃສ່ແຕ່ ດ້ານກຳລັງພົນ, ກຳລັງອາວຸດ ແລະຄວາມທັນສະໄໝຂອງການສູ້ຮົບ ແມ່ນສັດຕູລື່ນເຮົາຫຼາຍ. ດັ່ງນັ້ນມາໃນສະໄໝໃໝ່ນີ້ ຍຸກແຫ່ງການສ້າງສາພັດທະນາ ແລະເຊື່ອມໂຍງກັບສາກົນ, ສະໜາມຮົບດ້ານແນວຄິດ, ເສດຖະກິດ, ວັນທະນະທຳ-ສັງຄົມ ມີຄວາມສັບສົນດຸເດືອດ ກວ່າເວລານັ້ນ ພວກເຮົາຈະຖືເບົາວຽກງານນີ້ບໍ່ໄດ້, ຫາກເຮົາບໍ່ເຮັດວຽກໂຄສະນາ ແນວຄິດ ແຕ່ລະບຸກຄົນໃນທຸກຊັ້ນຄົນ ທຸກລະດັບບໍ່ໄດ້ດີ, ພາລະກິດຮ່ວມຂອງຊາດເຮົາປັດຈຸບັນ ແລະຕໍ່ໜ້າກໍຍາກທີ່ຈະບັນລຸຜົນ...

ທ່ານເຈືອງຮຽກຮ້ອງການຮ່ວມມືຂອງນັກປະພັນແບບສັ້ນໆ ແລ້ວ

ກໍ່ສະເໜີວຽກງານສະເພາະໜ້າຄື: ໃຫ້ນັກປະພັນຂຽນບົດເລື່ອງງ່າຍໆ, ຂຽນຕົວແບບ, ວຽກດີຄົນເດັ່ນ ການພັດທະນາດ້ານຕ່າງໆ ໃນຊົນນະບົດ ແລະແນະນຳໃຫ້ຄະນະສະມາຄົມ ຮ່າງແຜນການຈັດຕັ້ງ ບັ້ນກວດສອບການຂຽນບົດວັນນະຄະດີ ພາຍໃຕ້ຫົວເລື່ອງ ພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກ.

ການພົບປະໂອ້ລົມຂອງທ່ານ ເຈືອງ ສົມບູນຂັນ ຄັ້ງນີ້ເຮັດໃຫ້ຖັນແຖວນັກປະພັນລາວ ມີກຳລັງໃຈ, ມີຄວາມຫວັງໃນການປະດິດຄິດແຕ່ງ ສົ່ງເສີມວັນນະຄະດີ ຢ່າງບໍ່ເຄີຍນຶກຝັນມາກ່ອນ ແຕ່ນັ້ນມານັກປະພັນຫຼາຍທ່ານ ກໍໄດ້ຮັບເຊີນເຂົ້າໄປພົບປະ ກິນເຂົ້າຮ່ວມພາກັບທ່ານເຈືອງ ແລະ ລົມກັນແບບເປັນກັນເອງ ກ່ຽວກັບການຂຽນ ການພິມປຶ້ມ ການສົ່ງເສີມການອ່ານວັນນະຄະດີ

ທຸກວຽກງານທີ່ທ່ານເຈືອງ ສົມບູນຂັນ ຊີ້ນຳ ຮວມທັງເຮັດຕົວຈິງ ນຳລ້ອນແຕ່ເກີດຜົນ ຕາມຄາດໝາຍເວລາ ແລະຄາດຜົນໄດ້ຮັບ. ວຽກທຳອິດ ແມ່ນບັ້ນປຸກລະດົມນັກປະພັນຂຽນບົດ ເຂົ້າກວດສອບ ເລື່ອງສັ້ນ ເລື່ອງບັນທຶກ ແລະກາບກອນ ໄດ້ຮັບບົດເລື່ອງເກືອບ 300 ບົດ, ພິມເປັນປຶ້ມໄດ້ 4 ເຫຼັ້ມ (ບົດເລື່ອງ ກະວີ ຫຼືກາບກອນ 2 ເຫຼັ້ມ ແລະເລື່ອງ ແລະກາບກອນຂອງນັກປະພັນກິດຕິມະສັກ ທີ່ບໍ່ເຂົ້າຮ່ວມກວດສອບຂຽນຮວມກັນໄດ້ 2 ເຫຼັ້ມ) ພິມນັບ 8.000 ຫົວ ແລະຈັດສົ່ງລົງສູ່ບ້ານ ຈຸດສຸມພັດທະນາຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກເກືອບທົ່ວທຸກເມືອງ. ວຽກງານນີ້ ທ່ານເຈືອງ ເອົາໃຈໃສ່ຊີ້ນຳພິເສດ ຕັ້ງແຕ່ການຈັດຕັ້ງ ແຕ່ງຕັ້ງຜູ້ປະຕິບັດ ຈັດຕັ້ງໂຄສະນາປຸກລະດົມກວດກາບົດ, ບັນນາທິການແຈກຢາຍປຶ້ມ, ສົມທົບກັບກະຊວງຖະແຫຼງຂ່າວ ວັດທະນະທຳ ແລະທ່ອງທ່ຽວ ຄະນະພັດທະນາຊົນນະບົດສູນກາງ ເປັນປະທານພິທີ ແລະມອບລາງວັນໃຫ້ບົດດີເດັ່ນ, ນັກປະພັນດີໃຈຫຼາຍ ທີ່ໄດ້ຫົນລັດມາດຳເນີນໂຄງການດັ່ງກ່າວ.

ຕໍ່ຈາກນັ້ນມາ ເດືອນ 3-2012 ທ່ານເຈືອງ ສິມບູນຂັນໄດ້ສະເໜີໃຫ້ສະມາຄົມນັກປະພັນລາວ ຮ່ວມເປັນເຈົ້າການຈັດບັ້ນກວດສອບເລື່ອງສັ້ນ ເລື່ອງບັນທຶກແລະກາບກອນກ່ຽວກັບຫົວເລື່ອງ “ຄວາມສາມັກຄີມິດຕະພາບລາວ-ຫວຽດນາມ” ເພື່ອສະເຫຼີມສະຫຼອງ 2 ວັນປະຫວັດສາດການພົວພັນສາມັກຄີລາວ-ຫວຽດນາມ ແລະສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດ 2012. ບັ້ນກວດສອບຄັ້ງນີ້ ໄດ້ບົດປະພັນ 100 ກວ່າບົດ ແລະໄດ້ພິມເປັນປຶ້ມ 4 ເຫຼັ້ມ 8.000 ຫົວ ພ້ອມທັງປຸກລະດົມນັກຂຽນອາວຸໂສຜູ້ບໍ່ເຂົ້າຮ່ວມການກວດສອບ 26 ຄົນ ຂຽນບົດ 35 ບົດ ແລະພິມເປັນເຫຼັ້ມໄດ້ 2 ເຫຼັ້ມ 4.000 ຫົວ. ໃນໂອກາດນີ້ທ່ານເຈືອງ ສິມບູນຂັນ ຍັງໄດ້ຊີ້ນຳໃຫ້ສະມາຄົມນັກປະພັນຂຽນແຜນການ ຂຽນແລະພິມປຶ້ມບັນທຶກມູນເຊື້ອ ຫົວເລື່ອງຕາມຮອຍປະຫວັດສາດ. ທ່ານເປັນຜູ້ເລືອກ ແລະເຊີນນັກປະພັນ ບຸນທະນອງ ຊົມໄຊຜົນ ຜູ້ເຊິ່ງລິເລີ່ມເກັບກຳຂໍ້ມູນກ່ຽວກັບເສັ້ນທາງໂຮ່ຈິມິນມາແຕ່ແລ້ວມາພົບ ແລະບອກໃຫ້ເປັນຫົວໜ້າຈຸຂຽນປຶ້ມນີ້. ປຶ້ມດັ່ງກ່າວໄດ້ພິມສຳເລັດໂດຍມີການປັບປຸງດ້ານໂຄງຮ່າງຈົນເຖິງເນື້ອໃນບົດ ເພິ່ນໄດ້ຊີ້ນຳການແປປຶ້ມນີ້ ເປັນພາສາຫວຽດນາມກໍສຳເລັດ ແຕ່ບໍ່ທັນໄດ້ພິມ. ໃນໂຄງການນີ້ ເພິ່ນແນະນຳໃຫ້ນັກປະພັນ ຫັນແນວຄິດຂອງພັກ ແຜນການຂອງລັດ ມະຕິຄຳສັ່ງ, ກົດໝາຍ... ເປັນບົດປະພັນວັນນະຄະດີ ເພື່ອເຜີຍແຜ່ໃຫ້ເຖິງປະຊາຊົນຢ່າງທົ່ວເຖິງ. ໃນກອງປະຊຸມວຽກງານໂຄສະນາອົບຮົມທົ່ວປະເທດປະຈຳປີ 2013 ທ່ານເຈືອງ ສິມບູນຂັນ ກໍໄດ້ອອກຂໍ້ຄິດ ເຊີນນັກກະວີ ທອງຄຳ ອ່ອນມະນີສອນ ໃນນາມຜູ້ຂຽນກອນໂຄສະນາ ແນວທາງນະໂຍບາຍຂອງພັກຫຼາຍທີ່ສຸດ ເຊີນນາງພອນພິລຸນ ນັກກະວີ ອາຍຸ 13 ປີ ໃນນາມຜູ້ຂຽນແລະພິມປຶ້ມກະວີຂອງ ຕົນອອກຫຼາຍເຫຼັ້ມ ແລະເຄີຍໄດ້ຮັບລາງວັນກະວີກວດສອບ, ເຊີນອາຈານບຸນເຕີມ ສີບຸນເຮືອງ ໃນນາມຜູ້ຂຽນກະວີ ແລະທັງເປັນໝໍພອນ

(ການເມືອງ) ທັງເປັນຜູ່ສະຫຼະທຶນສ່ວນຕົວ ອັນມີທັງດິນ ແລະປຸກອາຄານເປັນສູນອົບຮົມທຳມະ ສາສະໜາ ແລະອົບຮົມຊຽນກາບກອນ ແລະຜູ່ທີສີ່ທີ່ທ່ານເຈືອງ ສົມບູນຂັນ ເຊີນແມ່ນ ທ່ານອາຈານ ສີຈັນ (ສ.ແພງຄຳຣັກ) ໂຄສົກ ຫຼືພິທີກອນອາວຸໂສ ເຜີຍແຜ່ແນວທາງການເມືອງອອກທາງວິທະຍຸ "ລາຍການຜັນຂະຫຍາຍແນວທາງຂອງພັກ" ທັງເປັນນັກແຕ່ງກາບກອນ ແລະເປັນໝໍພອນ, ທັງ 4 ທ່ານດັ່ງກ່າວນີ້ໄດ້ຖືກເຊີນຂຶ້ນນັ່ງເທິງເວທີ ກອງປະຊຸມໃຫຍ່ໂຕສຳຄັນນັ້ນ, ທ່ານເຈືອງ ສົມບູນຂັນ ເປັນຜູ່ສະເໜີຜົນງານ ນ້ຳໃຈຄວາມສາມາດອັນເປັນແບບຢ່າງຂອງທັງ 4 ທ່ານ ແລະແນະນຳໃຫ້ພະນັກງານນຳວຽກງານໂຄສະນາອົບຮົມຂັ້ນສູນກາງ, ແຂວງ, ເມືອງ, ກະຊວງ, ອົງການຕ່າງໆນຳເອົາ ຢ່າງນັ້ນໄປປຸກລະດົມ, ສົ່ງເສີມນຳໃຊ້ຜູ່ມີພອນສະຫວັນ ການໂຄສະນາດ້ານວັນນະຄະດີ ເຊິ່ງເປັນວິທີການ, ຮູບການໂຄສະນາສຶກສາອົບຮົມການເມືອງແນວຄິດ, ຄຸນສົມບັດສິນທຳປະຕິວັດໃຫ້ມວນຊົນ.

ທ່ານເຈືອງ ສົມບູນຂັນ ມີຫົວຄິດປະດິດສ້າງຫຼາຍຢ່າງ ໃນການນຳໃຊ້ວັນນະຄະດີ ເຂົ້າໃນການໂຄສະນາແນວທາງການເມືອງ ແລະສຶກສາອົບຮົມແນວຄິດຄຸນສົມບັດຂອງຄົນ. ມີຄັ້ງນຶ່ງເພິ່ນ ເອີ້ນຂ້າພະເຈົ້າໄປພົບ ແລະເວົ້າຢາກເຮັດລາຍການລະຄອນວິທະຍຸ ອອກວິທະຍຸແຫ່ງຊາດເປັນປະຈຳ ເພາະປະຊາຊົນຢູ່ຊົນນະບົດມັກຟັງ ແລະເຂົ້າໃຈດີກວ່າການໂຄສະນາດ້ວຍວິທີອື່ນ. ເພິ່ນບອກໃຫ້ຂ້າພະເຈົ້າປັບບົດເລື່ອງສັ້ນ "ປູກຕົ້ນຟືນ" ຂອງຂ້າພະເຈົ້າທີ່ພິມອອກໃນປຶ້ມເລື່ອງສັ້ນ ຂອງນັກປະພັນກິດຕິມະສັກ ເພື່ອພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກນັ້ນ ເປັນລະຄອນເວທີລອງເບິ່ງ, ເພິ່ນໄດ້ນຳເອົາບົດລະຄອນນັ້ນໄປສະເໜີຢູ່ກອງປະຊຸມຄະນະຮັບຜິດຊອບໂຄງການ ລະຄອນວິທະຍຸ (ຕໍ່ໆໄປຈະມີທັງລະຄອນໂທລະພາບ) ເຊິ່ງເພິ່ນເປັນຜູ່ແຕ່ງຕັ້ງຂຶ້ນ, ໃນເວລາດຳເນີນໂຄງ

ການຢູ່ນັ້ນ ທ່ານເຈືອງ ສິມບູນຂັນ ໄດ້ຖາມກ່ຽວກັບຄວາມຄືບໜ້າຂອງວຽກງານຢ່າງລະອຽດ ໃນທີ່ສຸດລະຄອນວິທະຍຸ ເພື່ອສາມສ້າງ ກໍໄດ້ສະແດງອອກອາກາດເຖິງ 13 ເລື່ອງ, ທຶນຮອນດຳເນີນວຽກງານນັ້ນ ສ່ວນໜຶ່ງກໍແມ່ນເພິ່ນເປັນຜູ້ຂົນຂວາຍ ຫຼືຂໍອຸປະຖຳນຳສັງຄົມມາຊ່ວຍ.

ທ່ານເຈືອງ ສິມບູນຂັນເປັນຜູ້ມີຄວາມຫ່ວງໃຍ ແລະຕັ້ງໜ້າຊຸກຍູ້ສົ່ງເສີມນັກປະພັນກໍຄື ສະມາຄົມນັກປະພັນແທ້ໆ. ເພິ່ນເຄີຍເວົ້ານຳຂ້າພະເຈົ້າວ່າ ເຮົາບໍ່ແມ່ນນັກປະພັນ ແຕ່ເຮົາມັກອ່ານວັນນະຄະດີ ແລະມັກສົ່ງເສີມເສີມຄົນທີ່ມີພອນສະຫວັນດ້ານນີ້. ເຖິງວ່າການຈັດຕັ້ງນັກປະພັນບໍ່ໄດ້ ຂຶ້ນກັບຄວາມຮັບຜິດຊອບໂດຍກົງຂອງຄະນະໂຄສະນາອົບຮົມ, ແຕ່ໃນແງ່ຄວາມຮັບຜິດຊອບ ທາງການໂຄສະນາການເມືອງ, ການຂຽນວັນນະຄະດີກໍແມ່ນການໂຄສະນາ ສຶກສາອົບຮົມການເມືອງ ແນວຄິດຮູບແບບນຶ່ງ ຊຶ່ງພັກຕ້ອງຕິດຕາມຊີ້ນຳ, ປຸກລະດົມຊຸກຍູ້ ເພື່ອໃຫ້ດຳເນີນໄປຕາມທິດທີ່ຖືກຕ້ອງ ແລະໄດ້ຮັບຜົນດີ. ໃນຕົວຈິງທ່ານເຈືອງ ສິມບູນຂັນໄດ້ເຮັດຄືໄດ້ເວົ້າເປັນຕົ້ນ ເພິ່ນໄດ້ເຮັດດັ່ງນີ້:

- ໄດ້ເວົ້າວ່າ ຈະສົມທົບປຶກສາຫາລືກັບກະຊວງຖະແຫຼງຂ່າວ ວັດທະນະທຳພິຈາລະນາ, ສະເໜີຂັ້ນເທິງ ເພື່ອມີຊ່ອງທາງປັບປຸງ ແລະຍົກບົດບາດ, ຖານະການຈັດຕັ້ງສະມາຄົມນັກປະພັນໃຫ້ເໝາະສົມ ແລະເຂັ້ມແຂງ. ເພິ່ນໄດ້ແນະນຳໃຫ້ຂ້າພະເຈົ້າ ນຳເອົາກົດລະບຽບຂອງສະມາຄົມນັກປະພັນລາວໄປໃຫ້ເບິ່ງ, ໃຫ້ແປເອກະສານກ່ຽວກັບສະມາຄົມນັກປະພັນຫວຽດນາມ ແລະປະເທດອື່ນໆ ໃຫ້ເພິ່ນອ່ານ
- ແນະນຳໃຫ້ຂ້າພະເຈົ້າຈັດຕັ້ງຝຶກອົບຮົມນັກຂຽນໜຸ່ມນ້ອຍ, ຜູ້ສືບທອດ
- ແນະນຳໃຫ້ຂ້າພະເຈົ້າສ້າງໂຄງການລາງວັນ ວັນນະກຳລະດັບຊາດຍື່ນໃຫ້ເພິ່ນ ເພື່ອເພິ່ນຈະສະເໜີຂັ້ນເທິງພິຈາລະນາ ແລະຈະຂໍທຶນນຳສັງຄົມເພື່ອອຸປະຖຳລາງວັນ, ແຕ່ຂ້າພະເຈົ້າຫາກໍນຳເອົາຮ່າງແຜນໂຄງການໄປ

ຜ່ານເພິ່ນ ແລະເພິ່ນໄດ້ມີຄຳເຫັນໃສ່ໃຫ້ຂຽນເປັນອັນລະອຽດ (ແຕ່ຂ້າພະເຈົ້າບໍ່ທັນເຮັດສຳເລັດ ແລະບໍ່ທັນຜ່ານໝູ່ຄະນະ)

- ໄດ້ແນະນຳໃຫ້ສະມາຄົມ ນຳເອົາປຶ້ມຈຳນວນນຶ່ງທີ່ຄະນະໂຄສະນາອົບຮົມ ແລະໃນນາມຄະນະກຳມະການລະດັບຊາດ ເພື່ອຈັດຕັ້ງສະເຫຼີມສະຫຼອງວັນປະຫວັດສາດຕ່າງໆ ມອບໃຫ້ສະມາຄົມນັກປະພັນພິມ ໂດຍແມ່ນທຶນຂອງລັດນັ້ນ ນຳໄປຂາຍສ່ວນນຶ່ງ ເພື່ອເອົາເຂົ້າຄັງ ຂອງສະມາຄົມ ເພື່ອໃຫ້ສະມາຄົມມີທຶນບໍລິຫານ ແລະເຮັດກິດຈະກຳອື່ນໆ.

- ໄດ້ໃຫ້ໂອກາດນັກປະພັນທັງຫຼາຍເຂົ້າພົບປະ, ຂໍທິດຊີ້ນຳກ່ຽວກັບການເຄື່ອນໄຫວທີ່ພົບກັບການຂີດຂຽນ, ການພິມປຶ້ມວັນນະກຳ ແລະເພິ່ນກໍໄດ້ໂອ້ລົມສົນທະນາແບບເປັນກັນເອງ ກັບນັກປະພັນໃຫ້ຄຳປຶກສາ, ແນະນຳຕາມຄຳເຫັນສ່ວນຕົວ ແລະຕາມຂອບເຂດ ຄວາມຮັບຜິດຊອບຂອງເພິ່ນ

- ປຶ້ມບົດປະພັນທີ່ສະມາຄົມນັກປະພັນຈັດຕັ້ງຂຽນ ຈັດພິມ ແລະນຳໄປມອບໃຫ້ເພິ່ນ ແຕ່ລະເຫຼັ້ມ ເພິ່ນກໍແນະນຳໃຫ້ຈັດສົ່ງໃຫ້ຜູ້ນຳພັກລັດຜູ່ອື່ນໆນຳ ເພື່ອໃຫ້ເພິ່ນຮັບຮູ້ຜົນງານ, ຄວາມສາມາດຂອງການຈັດຕັ້ງແລະນັກປະພັນ.

-ໄດ້ແນະນຳໃຫ້ຂ້າພະເຈົ້າຂຽນຫຼາຍໂຄງການ ກ່ຽວກັບການຂຽນ ແລະຈັດພິມປຶ້ມວັນນະກຳ, ປຶ້ມບັນທຶກມູນເຊື້ອ ເພື່ອເພິ່ນຈະໄດ້ນຳສະເໜີຂໍທຶນນຳລັດມາດຳເນີນ, ເພື່ອໃຫ້ນັກປະພັນໄດ້ຄ່າປາກກາ, ໄດ້ລາງວັນນັກປະພັນລາວຫຼາຍທ່ານຈຶ່ງໄດ້ຄ່າປາກກາ, ໄດ້ລາງວັນ ໄດ້ມີບົດປະພັນພິມເຂົ້າປຶ້ມຫຼາຍ ແລະໄວສົມຄວນ. ໂຄງການຂຽນ ແລະພິມປຶ້ມຂອງສະມາຄົມເພື່ອຮັບໃຊ້ງານສະເຫຼີມສະຫຼອງວັນປະຫວັດສາດ 60 ປີ ສ້າງຕັ້ງພັກ ແລະ 40 ປີ ສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມການມອບໝາຍ ຂອງທ່ານເຈືອງກໍຄືຄະນະກຳມະການລະດັບຊາດໂດຍແມ່ນທ່ານເຈືອງເປັນຫົວໜ້າອະນຸກຳມະການ ໂຄສະນານັ້ນ

ສະມາຄົມນັກປະພັນລາວ ໄດ້ພວມດໍາເນີນປັ້ນກວດສອບ ຂຽນບົດບັນທຶກ ແລະເລື່ອງສັ້ນທົ່ວປະເທດ ແລະຈະພິມປື້ມບົດກວດສອບ 2 ເຫຼັ້ມ, ຈັດຕັ້ງນັກປະພັນຂຽນນະວະນິຍາຍ 1 ເຫຼັ້ມ, ຈັດຕັ້ງນັກປະພັນຂຽນປື້ມມູນເຊື້ອເມືອງວຽງໄຊສູນກາງ ທີ່ໝັ້ນຂອງການປະຕິວັດລາວ, ປື້ມເລື່ອງສັ້ນ ແລະບັນທຶກມູນເຊື້ອປະຕິວັດ, ຜົນງານການປົກປັກຮັກສາ, ສ້າງສາປະເທດຊາດໂດຍແມ່ນນັກປະພັນ ອາວຸໂສຂຽນ 1 ເຫຼັ້ມ. ປື້ມທັງໝົດພວມດໍາເນີນຂຽນຢູ່ ເພິ່ນກໍຈາກພວກເຮົາໄປຊົ່ວກາລະນານ- ເຖິງຢ່າງໃດວຽກງານທັງໝົດ ຍັງສືບຕໍ່ບົນພື້ນຖານການຊີ້ນໍາຢ່າງລະອຽດຂອງເພິ່ນ.

ທ່ານເຈືອງເປັນຜູ້ນໍາ ສະຫຼາດ ວ່ອງໄວ, ມີຫົວຄິດປະດິດສ້າງ ກ້າຄິດກ້າເຮັດ, ກ້າຜິດກ້າຖືກ, ນັກຄົ້ນຄວ້າຊອກຫາເຫດແລະຜົນ ຂອງວຽກງານທີ່ຕົນຮັບຜິດຊອບ ແລະວຽກງານອື່ນໆທີ່ເປັນປະໂຫຍດໃຫ້ປະເທດຊາດແລະສັງຄົມ ທ່ານຍັງເປັນຜູ້ມີຄວາມສາມາດພິເສດດ້ານການນໍາພາ ແລະວິຊາການຫຼາຍດ້ານ ສະເພາະດ້ານບັນນາທິການປື້ມ ບົດຂຽນປະເພດຕ່າງໆ ແມ່ນມີຄວາມແນ່ນອນສົມຄວນ ສະເພາະດ້ານພາສາລາວ ເພິ່ນກໍມີຄວາມຮູ້ ແລະພິຖີພິຖັນທັງ ການເວົ້າການຂຽນ ເລືອງໃຊ້ສັບສໍານວນປະໂຫຍກທີ່ເໝາະສົມ, ຂ້າພະເຈົ້າຜູ້ມັກຮັກການຂຽນ ໄດ້ຮຽນຫຼາຍສິ່ງຢ່າງຈາກການແປງເອກະສານຕ່າງໆຂອງເພິ່ນ ຊຶ່ງຂ້າພະເຈົ້າເປັນຜູ້ຮ່າງໄປຜ່ານ ແລະຂໍລາຍເຊັນ.

ແບບຢ່າງທີ່ດີທີ່ສຸດຂອງທ່ານເຈືອງ ສົມບູນຂັນ ແມ່ນຄວາມຊື່ສັດຈິງໃຈ ຈິງຈັງ ກະຕືລືລົ້ນຫ້າວຫັນວ່ອງໄວໃນການເຮັດວຽກງານຊຶ່ງສະແດງອອກຄໍາເວົ້າ ແລະພຶດຕິກໍາ ທ່າທາງຂອງເພິ່ນ ອັນເຮັດໃຫ້ພວກນັກປະພັນມີຄວາມນັບຖື ຮັກແພງ ແລະມີຄວາມຫວັງສູງຕໍ່ອະນາຄົດຂອງພາລະກິດ ວັນນະຄະດີ ສິລະປະກໍາ ສື່ມວນຊົນ ການຄົ້ນຄວ້າທິດສະດີ ພຶດຕິກໍາ ຂອງລາວຍິ່ງຂື້ນ.


ໂຮມເລື່ອງສັ້ນ
ເສັ້ນທາງ
ສູ່ຄວາມຢູ່ດີມີສຸກ


ຄວາມສາມັກຄີພິເສດ
ລາວ-ຫວຽດນາມ
ຄວາມຊົງຈຳ
2012

# ວັນເວລາຊີວິດຄຸນຄ່າທີ່ສຸດ

ໂດຍ: ພຣະ ໄພວັນ ມາລາວົງ

ອາຕະມາຮູ້ຈັກຊື່ ທ່ານ ເຈືອງ ສົມບູນຂັນ ມາແຕ່ດົນນານແລ້ວ, ແຕ່ບໍ່ໄດ້ຮູ້ໃນນາມສ່ວນຕົວກັບເພິ່ນ, ເນື່ອງຈາກວ່າໄດ້ອ່ານຜົນງານການແປ ການຂີດຂຽນ ຈຶ່ງເຮັດໃຫ້ຮູ້ຈັກ. ຄືໄລຍະທີ່ອາຕະມາຍັງເປັນສາມະເນນນ້ອຍຮຽນຢູ່ມັດທະຍົມຕອນຕົ້ນ ໄລຍະນັ້ນອາຕະມາມີເປົ້າໝາຍໃນຊີວິດວ່າ ຖ້າຮຽນຈົບມັດທະຍົມຕອນປາຍເມື່ອໃດ ຈະໄປຮຽນຕໍ່ນິຕິສາດ, ລັດຖະສາດ ຮຸ່ນອ້າຍເຂົາເລີຍແນະນຳໃຫ້ອ່ານປຶ້ມການເມືອງ ແລ້ວຮຸ່ນອ້າຍຍັງພາໄປຫ້ອງສະໝຸດເພື່ອຊອກປຶ້ມອ່ານ ແລະທັງແນະນຳປຶ້ມດີໆ. ອາຕະມາອ່ານບົດຄວາມຂອງເພິ່ນຂຽນອອກໜັງສືພິມຕ່າງໆ ເມື່ອໃດທີ່ເຫັນຢູ່ໃນໜັງສືພິມ ອາຕະມາກໍຈະໄປຊື້ແລ້ວມາຕັດປະໄວ້ ເພາະເຊື່ອໃນສີມືການຂີດຂຽນ ອ່ານເຂົ້າໃຈງ່າຍ, ສັບງ່າຍໆ...

ເມື່ອອາຕະມາມາຮູ້ຈັກກັບ ດຣ. ທອງຄຳ ອ່ອນມະນີສອນ ເພິ່ນກໍໄດ້ແນະນຳໃຫ້ຮູ້ຈັກນັກປຣາດອາຈານ, ປັນຍາຊົນລາວ. ຮ່ວມທັງທ່ານເຈືອງ ສົມບູນຂັນ. ເພິ່ນບອກວ່າ ທ່ານເຈືອງ ແຕ່ກ່ອນແມ່ນເລຂາສະເພາະປະທານໄກສອນ ພົມວິຫານ ເພິ່ນເປັນນັກຮຽນດີ ຮຽນເກັ່ງ ເປັນປັນຍາຊົນຂັ້ນຕົ້ນໆຂອງປະເທດໄດ໋ ຫາຕົວປຽບໄດ້ຍາກ ທ່ານນີ້ ເພິ່ນຮຽນຈົບປະລິນຍາໂທມາແຕ່ໂຊວຽດ ກ່ຽວກັບເສດຖະສາດການເມືອງ, ເລື່ອງເສດຖະກິດແນ່ນອນແຫຼະ. ອາຕະມາກໍນຶກໃນໃຈວ່າ ທ່ານຜູ້ນີ້ຕ້ອງພົບໃຫ້ໄດ້

ໃນນາມສ່ວນຕົວ ອາຕະມາກໍບໍ່ໄດ້ລົດລະໃນການຕິດຕາມຜົນງານເພິ່ນ ຂຽນອອກພັງສືພິມ ແລະກໍໄດ້ອ່ານຜົນງານປຶ້ມຊື່ "ໂລກາພິວັດທາງເສດຖະກິດກັບການພັດທະນາປະເທດເຮົາ" ກໍຍິ່ງໄດ້ເຫັນຄວາມຄິດການເບິ່ງໂລກກວ້າງຂອງປັນຍາຊົນລາວ.

ມາໃນທ້າຍປີ 2012 ຄະນະໂຄສະນາອົບຮົມສູນກາງພັກໄດ້ເຊີນສະມາຄົມນັກປະພັນລາວ ເພື່ອຈະໄດ້ມີການປະກວດແຂ່ງຂັນບົດກະວີ, ເລື່ອງສັ້ນ ພັດທະນາຊົນນະບົດ ເພື່ອລົບລ້າງຄວາມທຸກຍາກຂອງປະຊາຊົນ ອາຕະມາຈຶ່ງໄດ້ພົບກັບເພິ່ນ.

ຈາກນັ້ນ ວັນເວລາແຫ່ງການມອບລາງວັນຕັດສິນກໍມາເຖິງ ອາຕະມາໄດ້ຮັບລາງວັນ ສອງປະເພດຄື ເລື່ອງສັ້ນ ແລະກະວີ ປະເພດຊົມເຊີຍ. ຫຼັງຈາກເສັດສິ້ນພິທີມອບລາງວັນ ບັນດາແຂກຕ່າງໆກໍໄດ້ທະຍອຍອອກເມືອ ບາງທ່ານກໍດື່ມກາເຟ, ນ້ຳຊາພົບປະສັງສັນ ທັກທາຍກັນແລະກັນ. ຕອນທີ່ອາຕະມາຍັງຢືນລົມກັບທ່ານ ພ. ຄຳມຸນເຮືອງ ເພິ່ນກໍໄດ້ເຂົ້າມາທັກທາຍຖາມວ່າ:

"ຄູບານີ້ບໍ ນາມປາກກາລູກດອນກະເດັນ ?"

"ຈະເລີນພອນ ແມ່ນແລ້ວ" ອາຕະມາຕອບ

"ມາຈາກແຂວງໃດ ?" ເພິ່ນຖາມຕື່ມ

"ເມືອງໂຂງ, ຈຳປາສັກ"

"ຮວ້າຍ! ຄົນໄທໃຕ້ບ້ານດຽວກັນຕະວ່າ, ພໍ່ເຄີຍອ່ານກະວີມາດົນແລ້ວ ແຕ່ບໍ່ຮູ້ວ່າຄູບາເປັນຜູ້ຂຽນ ວັນນີ້ໄດ້ເຫັນຕົວຈິງ, ບ້ານພໍ່ເຖົ້າພໍ່ ກໍຄົນໄທໃຕ້ ບ້ານຄອນ ຮູ້ຢູ່ບໍພໍ່ເຖົ້າຄຳເພົາ ພອນແກ້ວ"

"ຈະເລີນພອນ ຮູ້ລະບໍ ເຄີຍອ່ານຜົນງານເພິ່ນ"

"ເອົາເບີໂທໃຫ້ພໍ່ແນ່ ມື້ໜ້າຊິມີນເມືອສັນເພນຢູ່ເຮືອນ"

ແຕ່ກ່ອນອາຕະມາເຄີຍອ່ານແຕ່ຜົນງານເພິ່ນ ວັນນີ້ໄດ້ພົບເຫັນຕົວ

ຈຶ່ງທັງໄດ້ສົນທະນາດ້ວຍ ຮູ້ສຶກວ່າເປັນກຽດຢ່າງຍິ່ງ ແລະເພິ່ນກໍເປັນຄົນງ່າຍໆອ່ອນນ້ອມຖ່ອມຕົນຕໍ່ທຸກໆຄົນ ສົມກັບເປັນການນຳຂັ້ນສູງ ບຸກຄະລິກທ່າທາງທຳມະດາໆ ຢູ່ຢ່າງຕ່ຳ ແຕ່ວ່າທຳຢ່າງສູງ ເພື່ອປະເທດຊາດ ແລະປະຊາຊົນ.

ຫຼາຍວັນຕໍ່ມາເພິ່ນກໍໄດ້ໂທມານິມົນເມືອສັນເຂົ້າ ແລ້ວເພິ່ນກໍໃຫ້ອ້າຍກະຕ່າຍ ລູກຊາຍຂອງເພິ່ນມາຮັບ, ວັນນັ້ນຈຶ່ງໄດ້ດີແມ່ນໄປສັນເຂົ້າຢູ່ໃນສວນດ່ານຊ້າງ ພ້ອມດ້ວຍພະນັກງານຫ້ອງການຂອງເພິ່ນຈຳນວນໜຶ່ງ...

ຈາກນັ້ນມາ ຄວາມສຳພັນລະຫວ່າງເພິ່ນກັບອາຕະມາກໍນັບຖື ຮັກແພງກັນມາຕະຫຼອດທຸກໆອາທິດ ເພິ່ນກໍມັກໂທຕອນແລງວັນສຸກ ຫຼືຕອນເຊົ້າວັນເສົາ. ບາງເທື່ອອາຕະມາກໍໂທໄປຫາຖາມຂ່າວຄາວເພິ່ນ. ບາງອາທິດອາຕະມາກໍບໍ່ໄດ້ໂທໄປຫາ ຄາວຽກນັ້ນວຽກນີ້ ເພິ່ນກໍໂທຫາທັງເວົ້າຢອກວ່າ ລູກລ້ຳລວຍລະບໍ ຄືມິດໄປດົນແລ້ວ ຄືບໍ່ໂທມາຫາພໍ່ແມ່ ມີວຽກລົມນຳ...

ບາງເທື່ອກໍໄປສັນເຂົ້າຢູ່ເຮືອນເພິ່ນກໍຖາມເລື່ອງນັ້ນເລື່ອງນີ້ ໂດຍສະເພາະຕອນແຕ່ງຕັ້ງກຳມະການຮຽບຮຽງ ປື້ມພຸດທະປະຫວັດ ສະບັບທີ່ອ່ານງ່າຍທີ່ສຸດ ອາຕະມາກັບອາຈານຊາຍຄຳ ຈຳປາອຸທຸມໄດ້ຮັບປາກເພິ່ນ, ເພິ່ນບອກວ່າ ໃຫ້ລູກກັບຊາຍຄຳເປັນຜູ້ຮຽບຮຽງເດີ ຂຽນແບບລັກສະນະວັນນະຄະດີ ບໍ່ໃຫ້ມີພາສາທຳຫຼາຍເກີນໄປ ຄົນທົ່ວໄປອ່ານຊິບໍ່ເຂົ້າໃຈ. ອາຕະມາກໍຮັບປາກ ຈາກນັ້ນເພິ່ນກໍແນະນຳຢ່າງໃກ້ຊິດ ໂດຍສະເພາະການໃຊ້ພາສາໃຫ້ມັນອ່ານງ່າຍ ເຂົ້າເຖິງເຍົາວະຊົນຫຼາຍທີ່ສຸດ.

ອາຕະມາເຄີຍຖາມເພິ່ນຫຼາຍເລື່ອງ ໂດຍສະເພາະກ່ຽວກັບປະທານ ໄກສອນ ພົມວິຫານ ເພິ່ນກໍບອກວ່າ ໃຫ້ອ່ານນິພົນ ພໍ່ເຖົ້າໄກສອນທັງ 4 ເຫຼັ້ມ, ກຳແໜ້ນແນວທາງການປະຕິຮູບການເມືອງ ເພິ່ນຍັງແນະນຳອ່ານໜັງສືເປັນພາສາອັງກິດ ໂດຍສະເພາະການເມືອງ, ເສດຖະກິດ, ນະ

ໂຍບາຍຕ່າງໆ. ເລີຍບອກເພິ່ນວ່າ ລູກບໍ່ເກັ່ງພາສາອັງກິດປານໃດ. ຮວ້າຍ! ວັດຈະນານຸກົມກະເປີດໃສ່ ຝຶກເອົາ ເພາະເຮົາອ່ານໜັງສືພວກຕາເວັນຕົກ ເຮົາຈະໄດ້ຄວາມຄິດຈາກເຂົາ ເອົາມາເປັນບົດຮຽນ. ພາສາໄທເຂົາກໍແປມາຫຼາຍແລ້ວນ່າ ມີນັກຂຽນໄທຫຼາຍຄົນໄດ່ຂຽນດີ ທີ່ເຂົາຂຽນເນັ້ນມາທາງບ້ານເຮົາ. ເພິ່ນຍັງບອກອາຕະມາກ່ຽວກັບການບັນຍາຍທຳມະໃນວິທະຍຸຍາມເຊົ້າ ເອົາຫຼັກທຳມະງ່າຍໆກັບການຄອງເຮືອນຊາວບ້ານທົ່ວໄປ. ບາງເທື່ອເພິ່ນກໍໂທມາບອກວ່າ "ເອີ...ລູກບັນຍາຍຫລັກທຳແບບນັ້ນແຫຼະ" ສະແດງວ່າຍາມເຊົ້າເພິ່ນມັກຟັງລາຍການທຳມະ

ອາຕະມາເຄີຍຖາມເພິ່ນວ່າ ພໍ່ບັນຍາຍໃຊ້ຫຼັກການແນວໃດ ? ເພິ່ນບອກວ່າ ກ່ອນອື່ນຕ້ອງກຳແໜັນແນວທາງກ່ອນ ແລະປະເດັນທີ່ເຮົາຈະເວົ້າ ພໍ່ຝຶກມາດົນ ໃນການເວົ້າໂຍງປະເດັນໂດຍບໍ່ໃຫ້ມັນອອກນອກເລື່ອງ. ຕະຫຼອດຮອດນ້ຳສຽງ ລີລາການເວົ້າ ວ່າບ່ອນໃດຈະເນັ້ນບໍ່ເນັ້ນກໍຕ້ອງຝຶກ. ເພິ່ນຍັງຢ້ຳອີກວ່າ "ລູກຕ້ອງກິນໃຫ້ອີ່ມ, ນອນໃຫ້ໜ້ອຍ ແລະອ່ານຄົ້ນຄວ້າ/ຄິດໃຫ້ຫຼາຍໆ" ຄົນທຸກມື້ນີ້ເຂົາບໍ່ມັກອ່ານມັກຄົ້ນຄວ້າດອກ ມີແຕ່ມັກໄປຫຼິ້ນກິນໄປວັນໆ ແລ້ວຊິເອົາປັນຍາມາແຕ່ໃສ ?.

ພໍ່ເພິ່ນມາຮັບສົ່ງອາຕະມາໄປເຮືອນໄປສວນຫຼາຍເທື່ອ ເພິ່ນບອກວ່າ ຄົນອື່ນຂັບລົດ ຢ້ານພາລູກໄປເກີດອຸປະຕິເຫດ ບໍ່ຮັບປະກັນນ່າ ໃຈຮ້ອນຫຼາຍເດັກນ້ອຍນີ້. ເບິ່ງແຕ່ຄົນຂັບລົດນຳທາງຫັ້ນມັນແຂ່ງຂັນກັນໄປ, ແຫຍ້ກັນໄປ ໂດຍບໍ່ໃຫ້ກຽດກັນ ຄັນມັນຟ້າວແບບນີ້ເຮັດວຽກເຮັດງານຄືງຈະດີ ພາປະເທດຊາດບ້ານເມືອງຈະເລີນຮຸ່ງເຮືອງໄວ ແຕ່ກົງກັນຂ້າມບາດເຮັດວຽກຊ້າຄືຫຍັງນີ້. ເພິ່ນຍັງຖາມວ່າ ຊີວິດແຕ່ລະວັນເຮັດຫຍັງ ? ອາຕະມາຕອບວ່າ ເຮັດກິດຈະວັດປະຈຳວັນ ໄປສອນໜັງສື, ອ່ານໜັງສືຄົນຄວ້າຫັ້ນແຫຼະເປັນສ່ວນຫຼາຍ. ເພິ່ນຕອບວ່າ ໂອ ດີໆ. ເພິ່ນຍັງຖາມຕໍ່ໄປອີກວ່າ ລູກມັກອ່ານໜັງສືແບບໃດ ? ອາຕະມາເລີຍຕອບເພິ່ນວ່າ ລູກ

ອ່ານໜັງສືທຸກຊະນິດສາສະໜາ, ປັດຊະຍາ, ການເມືອງ, ເສດຖະກິດ.

ອາຕະມາເຄີຍເອົາປະເດັນການຄົ້ນຄວ້າເສດຖະກິດຂອງຊາດລາວໄປຖາມ ເພິ່ນບອກວ່າ ປະເທດເຮົາເປັນປະເທດທີ່ອຸດົມສົມບູນ ກໍຕ້ອງອີງໃສ່ທຳມະຊາດພູມີປະເທດເປັນຫຼັກ ຊິໃຫ້ຕາຍຕົວແບບຊາດອື່ນບໍ່ໄດ້ ແລະແຕ່ລະແຂວງແມ່ນແຕກຕ່າງກັນ ທາງດ້ານທ່າແຮງ ເພາະປະທານໄກສອນ ເພິ່ນກໍເຄີຍຄົ້ນຄວ້າມາແລ້ວ. ອາຕະມາຟັງແລ້ວ ກໍງຶກຫົວ... ເພິ່ນຍັງບອກອາຕະມາ ຊອກກຸ່ມນັກຄົ້ນຄວ້າພາສາສາດ ແລະວັນນະຄະດີ ພໍ່ຈະເປັນທີ່ປຶກສາ ເພິ່ນເປັນຫ່ວງເປັນໃຍນຳພາສາ, ວັນນະຄະດີບູຮານຂອງຊາດບໍ່ມີຜູ້ສືບຕໍ່ຄົ້ນຄວ້າ...

ເພິ່ນເປັນຫ່ວງເປັນໃຍທີ່ສຸດກັບການສຶກສາອາຕະມາ ເພິ່ນຖາມຢູ່ຕະຫຼອດເລື່ອງການຮຽນປະລິນຍາໂທ... ຍາມມີວຽກເພິ່ນຈະໂທຫາໂດຍກົງ ເພິ່ນຈະບໍ່ໃຫ້ຄົນອື່ນໂທ... ສ່ວນຫຼາຍຈະແມ່ນວັນສຳຄັນຕ່າງໆ. ຄວາມຜູກພັນຮັກແພງຖືເພິ່ນຄືພໍ່ ເພິ່ນກໍນັບຖືອາຕະມາຄືກັບລູກ ຫຼາຍເທື່ອເພິ່ນກໍຊວນໄປຫັ້ນໄປນີ້ ເພິ່ນຍັງຊວນເມືອບ້ານເກີດອາຕະມາ ໄປຢາມພໍ່ແມ່...

ອາທິດນັ້ນຜິດປົກກະຕິເຫຼືອເກີນ ທີ່ເພິ່ນໂທຫາຫຼາຍເທື່ອ ຖາມເລື່ອງນັ້ນເລື່ອງນີ້ ໂດຍສະເພາະເລື່ອງທີ່ບໍ່ເຄີຍຖາມພໍ່ກໍຖາມ. ຄືຖາມເລື່ອງໄປສອນໜັງສືຢູ່ນຳແມ່ ອາຕະມາກໍສົງໄສ ສອນມາຫຼາຍເດືອນຈົນຈະຈວບປີ ກໍບໍ່ເຫັນຖາມຈັກເທື່ອ ອາທິດນີ້ພັດມາຖາມ ເລື່ອງນັ້ນເລື່ອງນີ້ ສິ່ງແປກໆທີ່ສຸດສຳລັບແຕ່ຮູ້ຈັກກັບເພິ່ນມາ... ເພິ່ນຖາມວ່າ

"ຍັງໄປສອນກັບແມ່ບໍ ?"

"ສອນປົກກະຕິ ອີພໍ່" ອາຕະມາຕອບ

"ມີຫຍັງກະສອນນຳແມ່ ຖາມແມ່ຫັ້ນແຫຼະ" ແລ້ວເພິ່ນຍັງຖາມອີກວ່າ

"ຍັງອີກດົນຕີ່ຊິສິກອອກມາ"

"ຄິດວ່າບາດຮຽນຈົບປະລິນຍາໂທ ພຸ້ນແຫຼະ"

"ດີໆ ຕັ້ງໃຈຮຽນໃຫ້ມັນຈົບ"

ອາຕະມາບໍ່ນຶກບໍ່ຝັນໃນຊີວິດເລີຍວ່າ ຄຳຖາມຂອງພໍ່ຈະເປັນຄຳຖາມຄັ້ງສຸດທ້າຍທີ່ຖາມພຣະລູກຊາຍ ກ່ອນທີ່ຈະຈາກໄປໂດຍບໍ່ມີວັນຫວນກັບມາຖາມອີກ, ອາຕະມາຍັງຈື່ໄດ້ ຢ່າງສະໜິດວ່າ ວັນສຸກເວລາປະມານ 11 ໂມງເພິ່ນໂທຖາມ ແລ້ວນິມົນມາເຮືອນ (ສົມເພນ) ມື້ວັນອາທິດ ແລະເວລາຕອນ 2 ໂມງກວ່າເພິ່ນໂທກະຖາມອີກ ແລະເວລາຄ່ຳເພິ່ນກະໂທອີກ. ອັນນີ້ແຫຼະອາຕະມາສົງໄສລະແວງໃນໃຈທີ່ສຸດ.

ສິ່ງທີ່ບໍ່ໜ້າຈະເກີດມັນກໍເກີດຂຶ້ນ ອັນນີ້ແຫຼະພຣະພຸດທະອົງບອກວ່າ ມະນຸດຢູ່ໃນວົງວຽນແຫ່ງຄວາມຕາຍທຸກບາດຍ່າງ ພະຍາມັດຈຸລາດມັນຕາມຂ້າທຸກວິນາທີ ແລະພຣະພຸດທະອົງຍັງຕັດອີກວ່າ ມະນຸດເຮົາຖ້າບໍ່ຕາຍໃນຕອນໜຸ່ມນ້ອຍ ກໍຕາຍໃນຕອນກາງ ແລະຖ້າບໍ່ຕາຍໃນຕອນກາງ ກໍແມ່ນຕອນແກ່ເຖົ້າ ເພາະການຕາຍແມ່ນສາກສຸດທ້າຍຂອງຊີວິດມະນຸດເຮັດໃຫ້ສົມບູນແບບ ເພາະສັດຈະທຳຂອງໂລກແມ່ນເກີດ, ແກ່, ເຈັບ ແລະຕາຍ. ວັນເວລາແຫ່ງຄວາມໂສກາອາດູນທີ່ສຸດໃນຊີວິດກໍໄດ້ມາເຖິງ, ພໍແຕ່ຮູ້ເລື່ອງວ່າຍິນຕົກ ອາຕະມາກໍບໍ່ເຊື່ອດອກວ່າ ຈະແມ່ນພໍ່ຂີ່ໄປນຳຍິນຄັນນັ້ນ ນຶກວ່າຍິນໂດຍສານທຳມະດາ. ຕອນແມ່ບອກອ້າຍຕ່າຍໂທຫາອາຕະມາປາກບໍ່ອອກ ເໝືອນໂລກໄດ້ດັບລົງຕໍ່ໜ້າຕໍ່ຕາ ນ້ຳຕາທີ່ບໍ່ໄດ້ຮັບເຊີນມັນກໍໄຫຼອອກມາແບບບອກບໍ່ຖືກ ອາຕະມາບໍ່ນຶກເລີຍວ່າໂຍມພໍ່ຈະຈາກໄປແບບນີ້ ເພາະມື້ວານຍັງໂທນັດພຣະລູກຊາຍມາສັນເຂົ້າຢູ່ເຮືອນມື້ວັນທິດ.

ສິ່ງທີ່ອາຕະມາຮ້ອງໄຫ້ ບໍ່ແມ່ນອາຕະມາບໍ່ເຂົ້າໃຈກົດເກນທຳມະຊາດສັງຂານມະນຸດ ບໍ່ແມ່ນອາຕະມາບໍ່ຮູ້ຈັກທຳມະອັນປະເສີດຂອງພຣະພຸດທະເຈົ້າ ອາຕະມາເຄີຍເອົາຫຼັກທຳຄວາມພັດພາກຈາກກັນດ້ວຍຄວາມຕາຍໄປເທດໄປສອນຈົນນັບເທື່ອບໍ່ໄດ້ ໃນເມື່ອຖືກອາຕະມາເອງ ນ້ຳຕາ

ມັນກັ້ນບໍ່ຢູ່ ຄັນພໍ່ຈາກໄປໂດຍໝົດອາຍຸສັງຂານເຖົ້າຊະແລແກ່ຊະລາ ອາຕະມາຄົງບໍ່ຮ້ອງໄຫ້ເພາະເຂົ້າໃຈກົດເກນທຳມະຊາດເປັນຢ່າງດີ. ແຕ່ອາຕະມາກິນແໜງແຄງໃຈ ທີ່ອາຕະມາເປັນໜີ້ບຸນຄຸນເພິ່ນຫຼາຍ ອາຕະມາຍັງບໍ່ທັນໄດ້ຕອບແທນເທື່ອ ຫຼາຍສິ່ງຫຼາຍຢ່າງອາຕະມາຍັງບໍ່ທັນສຳເລັດ ຢາກເຮັດຢາກກະທຳສິ່ງທີ່ເປັນປະໂຫຍດໃຫ້ກັບສັງຄົມ ໂຍມພໍ່ຍັງບໍ່ທັນເຫັນຜົນງານພຣະລູກຊາຍ.

ອາຕະມາຂຽນບົດນດ້ວຍນ້ຳຕານອງໜ້າ ຫາກຈິດວິນຍານຂອງພໍ່ຮັບຮູ້ ບຸນກຸສົນທີ່ພຣະລູກຊາຍໄດ້ອຸທິດເຫື່ອແຮງທັງກາຍ ແລະໃຈ. ບວດຮຽນຂຽນອ່ານ ໃນພຣະພຸດທະສາສະໜາມາຫຼາຍຟ້າຫຼາປີ, ເດີນສາຍບັນຍາຍທຳ (ວິທະຍາທານ), ຂຽນໜັງສື, ເຜີຍແຜ່ພຸດທະສາສະໜາຫຼາຍຮູບແບບ (ວິທະຍຸ, ໂທລະພາບ, ໜັງສືພິມ, ວາລະສານ) ລູກຂໍອຸທິດ ສ່ວນບຸນກຸສົນມະຫາສານທັງຫຼາຍແດ່ໂຍມພໍ່ (ເຈືອງ ສົມບູນຂັນ) ຂໍໃຫ້ດວງວິນຍານຂອງພໍ່ຈົ່ງໄປສູ່ສຸຄະຕິ ແລະປິດກັ້ນເຊິ່ງອະບາຍຍະພູມຕ່ຳຊາມທີ່ບໍ່ປາຖະໜາ.

ພຣະລູກຊາຍເຊື່ອເຫລືອເກີນວ່າ ຈິດວິນຍານຂອງພໍ່ຄົງໄປສູ່ຄະຕິອັນດີງາມ ເພາະວ່າພໍ່ມີເຈຕະນາອັນດີງາມ ໃນການສົ່ງເສີມພຣະພຸດທະສາສະໜາ ເຮັດຄຸນງາມຄວາມດີ ເຮັດການປະຕິວັດ, ເພື່ອຊາດ ແລະປະຊາຊົນຈົນເຖິງວິນາທີສຸດທ້າຍ, ໃຊ້ຊີວິດໂດຍຄວາມບໍ່ປະໝາດ ໃຫ້ສູນເປົ່າໄປກັບກາລະເວລາ. ອີກບໍ່ພໍເທົ່າໃດເດືອນຂ້າງໜ້າ ປຶ້ມທີ່ພໍ່ໃຫ້ລູກຂຽນກັບອ້າຍຊາຍຄຳ “ພຸດທະປະຫວັດ ສະບັບຊາວບ້ານ ແລະເຍົາວະຊົນ” ທີ່ພໍ່ຈົ່ມ ແລະເປັນຫ່ວງເປັນໃຍທີ່ສຸດ ເພື່ອອຸທິດນ້ອມບູຊາແດ່ພຣະພຸດທະເຈົ້າ ເປັນການເຜີຍແຜ່ພຸດທະສາສະໜານັ້ນ ຄົງຈະໄດ້ບັນລຸຢ່າງແທ້ແນ່ນອນ. ພຣະລູກຊາຍຂໍສັນຍາວ່າ ຈະອຸທິດຕົນເພື່ອພຸດທະສາສະໜາເຜີຍແຜ່ຫຼັກທຳຄຳສັ່ງສອນ ຕາມຮອຍພຣະພຸດທະອົງ, ອຸທິດຕົນເພື່ອສັງຄົມ

ປະເທດຊາດ ບ້ານເມືອງຈົນຮອດວິນາທີສຸດທ້າຍ ເພື່ອຕອບແທນບຸນຄຸນຂອງພໍ່.

ດ້ວຍຄວາມຮັກອາໄລອາວອນສຸດຊຶ້ງ ໃນການຈາກໄປໂດຍບໍ່ຫວນກັບຄືນມາອີກຂອງພໍ່.



## ສາລະບານ ໜ້າ


ລະນຶກແລະຄຶດເຖິງ ທ່ານເຈືອງ ສົມບູນຂັນ 3

*ດຣ.ທອງຄຳ ອ່ອນມະນີສອນ*

ບົດກ່າວໄວ້ອາໄລ ແດ່ ສະຫາຍ ເຈືອງ ສົມບູນຂັນ 4

ຖິ່ນຖານບ້ານເກີດ *ເລື່ອນ ສົມບູນຂັນ* 11

ຄວາມຜູກພັນ ທີ່ບໍ່ມີວັນລືມ *ສົມສະນິດ ສຸວັນນະລາດ* 19

ເສັ້ນທາງທີ່ຈະຍ່າງຍ່ຳອີກຕໍ່ໄປ ຄວາມຊົງຈຳ ສັ້ງອນຶ່ງ ກ່ຽວກັບ 27

ທ່ານ ເຈືອງ ສົມບູນຂັນ *ດຣ.ດວງເດືອນ ບຸນຍາວົງ*

ເມື່ອ ນ້ອງຊາຍຄົນນຶ່ງ ຈາກໄປ *ສົມສະຫວາດ ເລັ່ງສະຫວັດ* 31

ສະຫາຍ ເຈືອງ ສົມບູນຂັນ ໃນຄວາມຊົງຈຳຂອງຂ້າພະເຈົ້າ 34

*ດຣ.ຄຳພັນ ເຜີຍຍະວົງ*

ເຮັດວຽກຫຍັງ ກໍຕ້ອງບຸກທະລຸ *ຄຳວິສັນ ແກ້ວສຸວັນ* 38

ທ່ານເຈືອງ ສົມບູນຂັນ ໃນຄວາມຊົງຈຳຂອງຂ້ອຍ 42

*ຄຳກອງ ທຳມະເທວາ*

ຄວາມຮູ້ສຶກ ໂສກເສົ້າ ເສຍດາຍຕໍ່ ສະຫາຍ ເຈືອງ ສົມບູນຂັນ 45

*ດຣ.ຄຳຝັ້ນ ຄຸນບໍລົມ*

ຜູ້ບັນຊາທີ່ເຂັ້ມງວດ *ອິນທະນູ ນວນທະສິງ* 47

ທ່ານເຈືອງ ສົມບູນຂັນ ຜູ່ນຳທີ່ຫ່ວງໃຍ ໃກ້ຊິດນັກປະພັນລາວ 50

*ຜົວລາວັນ ຫຼວງວັນນາ*

ວັນເວລາຊົງຄຸນຄ່າທີ່ສຸດ *ພຣະ ໄພວັນ ມາລາວົງ* 60

ຜົນງານຂຽນ







ຜົນງານແປ




